
ບົດລາຍງານ ປະຈຳປີ
ANNUAL REPORT 2021



ສາລະບານ

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ 1

II. ຄຳເຫັນຂອງຜູ້ບໍລິຫານ 2

1. ຄຳເຫັນຂອງປະທານສະພາບໍລິຫານ 2

2. ຄຳເຫັນຂອງຄະນະກຳມະການກວດສອບ 4

3. ຄຳເຫັນຂອງຄະນະກຳມະການຄຸ້ມຄອງ ຄວາມສ່ຽງ 5

4. ຄຳເຫັນຂອງຄະນະກຳມະການກຳນົດຄ່າຕອບແທນ 6

5. ຄຳເຫັນຂອງຄະນະກຳມະການຄັດເລືອກ 7

6. ຄຳເຫັນຂອງຄະນະກຳມະການກວດສອບລາຍການທີ່ກ່ຽວພັນ 8

III. ຂໍ້ມູນກ່ຽວກັບ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ 9

1. ປະຫວັດການສ້າງຕັ້ງ ແລະ ການເຕີບໃຫຍ່ຂະຫຍາຍຕົວ 9

2. ບໍລິສັດໄປລົງທຶນແຕ່ອັດຕາສ່ວນ 25% ຂຶ້ນໄປ 11

IV. ຜົນການດຳເນີນງານ 11

1. ການຜະລິດພະລັງງານໄຟຟ້າ 11

2. ໃບລາຍງານຜົນໄດ້ຮັບ 12

3. ການຄິດໄລ່ອັດຕາສ່ວນທີ່ສຳຄັນທາງດ້ານການເງິນ 12

4. ການມອບພັນທະໃຫ້ລັດ 13

V. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນຂອງບໍລິສັດ 14

VI. ຂໍ້ມູນກ່ຽວກັບຫລັກຊັບ ແລະ ໂຄງສ້າງຜູ້ຖືຮຸ້ນ 14

VII. ໂຄງຮ່າງການຈັດຕັ້ງ ແລະ ການບໍລິຫານ 15

VIII. ຄະນະກຳມະການຕ່າງໆ 28

1. ຄະນະກຳມະການຂອງສະພາບໍລິຫານ 28

1.1 ກອງເລຂາສະພາບໍລິຫານ 28

1.2 ຄະນະກຳມະການກວດສອບ 30

1.3 ຄະນະກຳມະການຄຸ້ມຄອງຄວາມສ່ຽງ 30

1.4 ຄະນະກຳມະການກຳນົດຄ່າຕອບແທນ 31

1.5 ຄະນະກຳມະການຄັດເລືອກ 31

1.6 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ 31

2. ຄະນະກຳມະການຂອງຄະນະອຳນວຍການໃຫຍ່ 31

2.1 ຄະນະກຳມະການຈັດຊື້ແລະສະໜອງວັດສະດຸອຸປະກອນ (ຄຈຊ) 31

2.2 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ (ຄນຍວ). 31

IX. ການຂະຫຍາຍແລະ ພັດທະນາທຸລະກິດ 32

X. ຜູ້ກວດສອບອິດສະຫຼະ 33

XI. ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານ 33

1. ສິດຂອງຜູ້ຖືຮຸ້ນ ແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ 33

2. ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫລາດ 33

3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ 34
4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ 34
XII. ວຽກງານການເຄື່ອນໄຫວດ້ານສິ່ງແລດລ້ອມ, ສັງຄົມ ແລະ ກິລາ 34
1. ວຽກງານສິ່ງແລດລ້ອມ 34
2. ວຽກງານຊ່ວຍເຫລືອສັງຄົມ ແລະ ກິລາ 35
XIII. ການພັດທະນາຊັບພະຍາກອນມະນຸດ 36
XIV. ນະໂຍບາຍກ່ຽວກັບການຄວບຄຸມພາຍໃນຂອງບໍລິສັດ 36
XV. ດ້ານນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງ 36
1. ນະໂຍບາຍບໍລິຫານຄວາມສ່ຽງ 36

I. ພາບລວມກ່ຽວກັບທຸລະກິດຂອງບໍລິສັດ

ວິໄສທັດ

1. ເປັນບໍລິສັດນຳໜ້າ ຂອງ ສປປ ລາວ ໃນການຜະລິດພະລັງງານໄຟຟ້າ ທີ່ໝັ້ນຄົງ ເພື່ອຕອບສະໜອງໃນ ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ແລະ ຂອງພູມິພາກຕາມທິດ ສີຂຽວ ແລະ ຍືນຍົງ.
2. ເປັນບໍລິສັດນຳໜ້າໃນການ ໃຫ້ບໍລິການຄຸ້ມຄອງ ແລະ ບຳລຸງຮັກສາ ໂຮງງານຜະລິດໄຟຟ້າໃນ ສປປ ລາວ ແລະ ໃນພູມິພາກ.
3. ເປັນບໍລິສັດນຳໜ້າ ທີ່ ສ້າງມູນຄ່າເພີ່ມໃຫ້ແກ່ຜູ້ຖືຮຸ້ນ.

ພາລະກິດ

1. ສະໜອງໄຟຟ້າ ດ້ວຍແຫຼ່ງພະລັງງານສະອາດ ແລະ ພະລັງງານທົດແທນ ໂດຍຄຳນຶງເຖິງສິ່ງແວດລ້ອມ ເພື່ອສ້າງຄວາມໝັ້ນຄົງ ແລະ ຍືນຍົງທາງດ້ານພະລັງງານໃຫ້ແກ່ປະເທດ ແລະ ພູມິພາກ.
2. ມີຂະບວນການຕັດສິນໃຈ ແລະ ຂັ້ນຕອນການດຳເນີນງານທີ່ຈະແຈ້ງ, ໂປ່ງໃສ ແລະ ກວດສອບໄດ້.
3. ສົມທົບຢ່າງສະໜິດແໜ້ນ ກັບ ຄູ່ຮ່ວມຍຸດທະສາດ ແລະ ບໍລິສັດຈຳໜ່າຍພະລັງງານໄຟຟ້າໃນການ ສະໜອງພະລັງງານໄຟຟ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ພາຍໃນປະເທດ ແລະ ພູມິພາກ.
4. ຕັ້ງໜ້າຍົກສູງປະສິດທິພາບ ແລະ ພັດທະນາບໍລິສັດໃນທຸກດ້ານ ເພື່ອໃຫ້ກາຍເປັນທັງຜູ້ຜະລິດ ແລະ ໃຫ້ ບໍລິການຄຸ້ມຄອງ-ບຳລຸງຮັກສາ ໂຮງງານຜະລິດໄຟຟ້າ ໃນ ສປປ ລາວ ແລະ ພູມິພາກ.
5. ລົງທຶນໃນທຸລະກິດທີ່ເນັ້ນໃສ່ການສ້າງມູນຄ່າເພີ່ມ ທັງໄລຍະສັ້ນ ແລະ ໃນໄລຍະຍາວ ເພື່ອໃຫ້ໄດ້ຮັບຜົນ ຕອບແທນ ທີ່ ສູງສຸດ ຢ່າງຕໍ່ເນື່ອງໃຫ້ແກ່ຜູ້ຖືຮຸ້ນ.

ເປົ້າໝາຍຫລັກຂອງການດຳເນີນທຸລະກິດ

1. ຜະລິດໄຟຟ້າຂາຍຍົກໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ, ກໍ່ສ້າງລະບົບສາຍສົ່ງແລະສະຖານີໄຟຟ້າຖ້າ ຫາກມີຄວາມຈຳເປັນ;
2. ລົງທຶນໃນບັນດາຊັບສິນ ທີ່ໃຊ້ໃນການຜະລິດໄຟຟ້າຂອງ ຟຟລ ເຊິ່ງກຳລັງໄດ້ຮັບການກໍ່ສ້າງ ແລະ ໄດ້ຂຶ້ນ ແຜນໄວ້ແລ້ວ ຫລື ລົງທຶນດ້ວຍການເຂົ້າຖືຮຸ້ນທັງໝົດ ຫລື ບາງສ່ວນແທນ ຟຟລ ໃນບັນດາໂຄງການ ຜູ້ຜະລິດໄຟຟ້າເອກະລາດ(Independent Power Producer: IPP);
3. ຮັບເໝົາບໍລິການ ການເດີນເຄື່ອງ ແລະ ບຳລຸງຮັກສາ (Operation & Maintenance Service) ໃຫ້ແກ່ ບັນດາໂຄງການຜະລິດໄຟຟ້າຕ່າງໆ ໃນຂອບເຂດທົ່ວປະເທດ.

II. ຄຳເຫັນຂອງຜູ້ບໍລິຫານ

1. ຄຳເຫັນຂອງປະທານສະພາບໍລິຫານ

ຮຽນ: ບັນດາທ່ານຜູ້ຖືຮຸ້ນ ທີ່ນັບຖື



ຖືໄດ້ວ່າ ເປັນອີກປີໜຶ່ງທີ່ ຂ້າພະເຈົ້າໄດ້ມີໂອກາດສະແດງຄວາມຮູ້ສຶກທີ່ໄດ້ຕາງໜ້າໃຫ້ ສະພາບໍລິຫານ ຜ-ຟຟລ ປະກອບຄຳເຫັນຕໍ່ຜົນສຳເລັດ ໃນການດຳເນີນທຸລະກິດ ຂອງ ຜ-ຟຟລ ໃນປີ 2021, ຜົນສຳເລັດດັ່ງກ່າວຈະເກີດຂຶ້ນບໍ່ໄດ້ຖ້າປາດສະຈາກການຊີ້ນຳ ນຳພາຂອງຄະນະນຳ ຜ-ຟຟລ ຊຶ່ງກໍ່ແມ່ນບັນດາສະມາຊິກສະພາບໍລິຫານ ທັງໝົດ 11 ທ່ານ ທີ່ໄດ້ມີການວາງແຜນການໄວ້ຢ່າງຈະແຈ້ງຮັດ ກຸມ ບວກໃສ່ກັບຄວາມມຸ້ງໝັ້ນ ຄວາມຮ່ວມແຮງຮ່ວມໃຈຂອງ ຜູ້ບໍລິຫານທຸກລະດັບ ແລະ ຄວາມເປັນປຶກແຜ່ນຂອງ ອ້າຍນ້ອງພະນັກງານກຳມະກອນພາຍໃນບໍລິສັດທີ່ໄດ້ທຸ້ມເທເຫື່ອແຮງສະຕິປັນຍາ ເຂົ້າໃສ່ການຈັດຕັ້ງປະຕິບັດແຜນການຂອງບໍລິສັດທີ່ໄດ້ວາງໄວ້. ໃນນີ້ ສະພາບໍລິຫານໄດ້ມີການຈັດແບ່ງໜ້າທີ່ກັນປະຕິບັດ ວຽກງານໃນວຽກງານ ໃນແຕ່ລະຄະນະກຳມະການຕາມພາລະບົດບາດທີ່ແຕກຕ່າງກັນ ເພື່ອເຮັດໜ້າທີ່ ພິຈາລະນາແກ້ໄຂ ແລະ ໃຫ້ທິດຊີ້ນຳແກ່ຄະນະອຳນວຍການ ຜ-ຟຟລ ໃນການດຳເນີນງານແຕ່ລະດ້ານໃຫ້ມີປະສິດທິພາບ, ລວມມີ 5 ຄະນະກຳມະການຄື: ຄະນະກຳມະການຄຸ້ມຄອງຄວາມສ່ຽງ, ຄະນະກຳມະການຄ່າຕອບແທນ, ຄະນະກຳມະການຄັດເລືອກ, ຄະນະກຳມະການກວດສອບ ແລະ ຄະນະກຳມະການວ່າດ້ວຍລາຍການທີ່ກ່ຽວພັນ . ຕະຫຼອດປີ 2021 ທີ່ຜ່ານມາ , ສະພາບໍລິຫານໄດ້ປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ ໂດຍສະເພາະແມ່ນ ຄະນະຜູ້ອຳນວຍການ ຂອງ ຜ-ຟຟລ ທີ່ ຈັດຕັ້ງປະຕິບັດບັນດາມະຕິຂອງກອງປະຊຸມຜູ້ຖືຮຸ້ນ ແລະ ກອງປະຊຸມສະພາບໍລິຫານ ໃຫ້ມີປະສິດທິພາບ ແລະ ປະກົດຜົນເປັນຈິງ.

ດັ່ງທີ່ພວກເຮົາຮັບຮູ້ນຳກັນແລ້ວວ່າໃນປີ 2021, ທົ່ວໂລກແມ່ນໄດ້ສືບຕໍ່ປະເຊີນໜ້າກັບການແຜ່ລະບາດຂອງພະຍາດ COVID-19, ແລະ ສປປ ລາວ ເຮົາກໍຍັງຄົງໄດ້ຮັບຜົນກະທົບຈາກການແຜ່ລະບາດຂອງພະຍາດດັ່ງກ່າວ. ເຖິງຢ່າງໃດກໍຕາມ, ການດຳເນີນທຸລະກິດຂອງ ຜ-ຟຟລ ຍັງສາມາດສືບຕໍ່ດຳເນີນໄປໄດ້ ຢ່າງຕໍ່ເນື່ອງແລະມີປະສິດທິຜົນ, ສາມາດຜະລິດກະແສໄຟຟ້າໃຫ້ ຟຟລ ໄດ້ຢ່າງຕໍ່ເນື່ອງຕາມສັນຍາ ກໍຄືປະກອບສ່ວນຢ່າງແຂງແຮງ ໃນການສະໜອງພະລັງງານໄຟຟ້າໃຫ້ແກ່ເສດຖະກິດ-ສັງຄົມຂອງປະເທດ ໄດ້ຢ່າງໝັ້ນຄົງ. ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຕໍ່ຄະນະຜູ້ບໍລິຫານຂອງບໍລິສັດ ຜ-ຟຟລ ທີ່ເອົາໃຈໃສ່ສືບຕໍ່ວາງແຜນແລະກະກຽມຄວາມພ້ອມຮອບດ້ານ ແລະ ມີມາດຕະການຢ່າງເຂັ້ມງວດ ໃນການປ້ອງກັນ , ຄວບຄຸມ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດ COVID-19 ໂດຍໄດ້ປະຕິບັດຕາມມາດຕະການ ທີ່ທາງຄະນະສະເພາະກິດຂັ້ນກະຊວງກໍຄືສູນກາງ ໄດ້ວາງອອກທຸກປະການ.

ໃນປີ 2021, ຜ-ຟຟລ ໄດ້ດຳເນີນທຸລະກິດຢ່າງມຸ່ງໝັ້ນ ແລະສາມາດສ້າງລາຍຮັບລວມໄດ້ທັງໝົດ 2.212,67 ຕື້ກີບ ເຊິ່ງເປັນຕົວເລກທີ່ສູງທີ່ສຸດນັບແຕ່ສ້າງຕັ້ງ ຜ-ຟຟລ ເປັນຕົ້ນມາ ເນື່ອງມາຈາກ ການຜະລິດໄຟຟ້າສົ່ງຂາຍໃຫ້ ຟຟລ ຢູ່ໃນເກນປົກກະຕິ ແລະ ບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດທີ່ສົ່ງອອກໄຟຟ້າ ທີ່ ຜ-ຟຟລ ລົງທຶນຖືຮຸ້ນ ມີຜົນປະກອບການທີ່ໂດດເດັ່ນ. ຕົວເລກດັ່ງກ່າວ ສະທ້ອນເຖິງຄວາມໝັ້ນຄົງຂອງທຸລະກິດພະລັງງານ ເຖິງແມ່ນວ່າ ສະພາບແວດລ້ອມຂອງການດຳເນີນທຸລະກິດ ຈະພົບກັບ ສະພາບເສດຖະກິດ ທັງພາຍໃນ, ພາກພື້ນ ແລະ ສາກົນ ທີ່ມີຄວາມຜັນຜວນ, ຄວາມທ້າທາຍ ແລະ ຂໍ້ຫຍຸ້ງຍາກຕ່າງໆຫຼາຍປະການ ກໍຕາມ. ພ້ອມກັນນີ້, ຜ-ຟຟລ ກໍຍັງຮັກສາການຈ່າຍເງິນປັນຜົນໃຫ້ແກ່ ຜູ້ຖືຮຸ້ນ ໄດ້ຢ່າງຕໍ່ເນື່ອງ. ນອກຈາກນີ້, ໃນປີ 2021 ຜ-ຟຟລ ຍັງໄດ້ສືບຕໍ່ສ້າງຄວາມເຊື່ອໝັ້ນໃຫ້ນັກລົງທຶນ ໂດຍສືບຕໍ່ວຽກງານສຶກສາການສ້າງຕະຫຼາດໃຫມ່ ເພື່ອສົ່ງອອກກະແສໄຟຟ້າ ໄປສູ່ປະເທດອ້ອມຂ້າງ ເຊິ່ງສອດຄ່ອງກັບວິໄສທັດ, ພາລະກິດ ແລະເປົ້າໝາຍ ໃນແຜນຍຸດທະສາດໄລຍະຍາວຂອງບໍລິສັດ ທີ່ຈະເພີ່ມມູນຄ່າກິດຈະການ ໃຫ້ເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສືບຕໍ່ພັດທະນາອົງກອນໃຫ້ເປັນບໍລິສັດທີ່ນຳໜ້າ ໃນການສະໜອງພະລັງງານໄຟຟ້າ ດ້ວຍແຫຼ່ງພະລັງງານທົດແທນທີ່ສະອາດ ແລະ ປະກອບສ່ວນໃຫ້ແກ່ຄວາມໝັ້ນຄົງ ແລະຍືນຍົງດ້ານພະລັງງານໃຫ້ແກ່ປະເທດ ແລະ ພູມີພາກນີ້.

ສໍາລັບປີ 2022 ນີ້, ຂ້າພະເຈົ້າ ເຊື່ອໝັ້ນວ່າ ຄຽງຄູ່ກັບການສ້າງລາຍຮັບແລະສືບຕໍ່ພັດທະນາທຸລະກິດຂອງ ຜ-ຟຟລ, ຄະນະຜູ້ບໍລິຫານ ແລະ ພະນັກງານ ທຸກຂັ້ນ ຂອງ ຜ-ຟຟລ ຍັງຈະສືບຕໍ່ເນັ້ນໜັກ ແລະ ໃຫ້ຄວາມສໍາຄັນ ຕໍ່ວຽກງານຄວາມຮັບຜິດຊອບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ໂດຍສືບຕໍ່ຈັດຕັ້ງປະຕິບັດບັນດາໂຄງການໃນການຍົກລະດັບຄຸນນະພາບຊີວິດ ຂອງຊຸມຊົນທີ່ຢູ່ອ້ອມຂ້າງເຂື່ອນໄຟຟ້າທີ່ບໍລິສັດຄຸ້ມຄອງ ໃຫ້ດີຂຶ້ນເທື່ອລະກ້າວບົນພື້ນຖານການມີສ່ວນຮ່ວມຂອງຊຸມຊົນ. ທັງໝົດທີ່ກ່າວມານີ້ ຈະສໍາເລັດໄດ້ ກໍ່ຍ້ອນນໍ້າໃຈຄວາມສາມັກຄີ ແລະ ຄວາມຮັບຜິດຊອບສູງ ຂອງສະມາຊິກສະພາບໍລິຫານ, ຄະນະຜູ້ອໍານວຍການ ແລະ ພະນັກງານທຸກຂັ້ນ ທົ່ວ ຜ-ຟຟລ ໃນການປະຕິບັດພາລະບົດບາດຂອງຕົນເອງ ຕາມພັນທະໜ້າທີ່ ທີ່ບັນດາທ່ານຜູ້ຖືຮຸ້ນໄດ້ມອບໝາຍໃຫ້ ໃນການດໍາເນີນທຸລະກິດ ໃຫ້ບັນລຸຜົນສໍາເລັດຕາມທີ່ໄດ້ຄາດໝາຍໄວ້.

ດ້ວຍຄວາມນັບຖື

ປະທານສະພາບໍລິຫານ

ປອ. ຄໍາມະນີ ອິນທິລາດ

2. ຄຳເຫັນຂອງຄະນະກຳມະການກວດສອບ



ຄະນະກຳມະການກວດສອບ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປະກອບດ້ວຍ ກຳມະການຈຳນວນ 4 ທ່ານ ຄື: 1.ທ່ານ ຮສ. ປອ. ພູເພັດ ກ້ຽວພິລາວົງ ເປັນປະທານກຳມະການກວດສອບ , 2. ທ່ານ ຄຳເພັງ ທິນນະກອນ ເປັນຮອງປະທານກຳມະການກວດສອບ, 3. ທ່ານ ຄຳແກ້ວ ວິສີສົມບັດ ເປັນກຳມະການກວດສອບ ແລະ 4. ທ່ານ ພົງສະຫວັດ ເສນາພອນ ເປັນກຳມະການກວດສອບ , ຊຶ່ງເປັນກຳມະການອິດສະຫຼະ ບໍ່ໄດ້ດຳລົງຕຳແໜ່ງເປັນຄະນະຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ . ໂດຍມີ ທ່ານ ນິກອນ ແກ້ວວິໄລ ເປັນຫົວໜ້າພະແນກກວດສອບພາຍໃນ ແລະ ມີພະແນກກວດສອບພາຍໃນ ເຮັດໜ້າທີ່ເປັນ ກອງເລຂາຄະນະກຳມະການກວດສອບ . ຊຶ່ງໄດ້ປະຕິບັດພາລະກິດຕາມພາລະບົດບາດໜ້າທີ່ ແລະ ຄວາມຮັບຜິດຊອບໃຫ້ສອດຄ້ອງກັບຂໍ້ກຳນົດຂອງຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ແລະ ຕະຫລາດຫລັກຊັບລາວ (ຕລຊລ).

ໂດຍລວມແລ້ວ ຄະນະກຳມະການກວດສອບມີຄຳເຫັນວ່າ : ບົດລາຍງານທາງການເງິນຂອງບໍລິສັດ ແລະ ບໍລິສັດລູກໄດ້ມີການສ້າງຂຶ້ນຕາມມາດຕະຖານການລາຍງານທາງການເງິນຂອງຕະຫລາດຫລັກຊັບລາວ ໄດ້ວາງອອກ , ມີການເປີດເຜີຍຂໍ້ມູນຢ່າງພໍພຽງ , ຖືກຕ້ອງ, ຄົບຖ້ວນເຊື່ອຖືໄດ້ . ລະບົບການຄວບຄຸມພາຍໃນ ແລະ ການບໍລິຫານຈັດການຄວາມສ່ຽງກໍ່ມີການປັບປຸງ ແລະ ສະເໜີສ້າງລະບຽບການຕ່າງໆ .ເພື່ອໃຫ້ສອດຄ່ອງກັບແນວທາງການຄວບຄຸມພາຍໃນທີ່ດີ ແລະ ປ້ອງກັນການເກີດຄວາມສ່ຽງໃນດ້ານຕ່າງໆທີ່ຈະກະທົບຕໍ່ການດຳເນີນທຸລະກິດຂອງບໍລິສັດ ແລະ ປະຕິບັດຕາມກົດໝາຍ , ລະບຽບ ແລະ ຂໍ້ກຳນົດຕ່າງໆ . ຂອງສຳນັກງານຄຸ້ມຄອງຕະຫລາດຫລັກຊັບ ແລະ ຕະຫລາດຫລັກຊັບລາວ.

ດ້ວຍຄວາມນັບຖື

ປະທານຄະນະກຳມະການກວດສອບ

ຮສ. ປອ. ພູເພັດ ກ້ຽວພິລາວົງ

3. ຄຳເຫັນຂອງຄະນະກຳມະການຄຸ້ມຄອງ ຄວາມສ່ຽງ



ຄະນະກຳມະການຄຸ້ມຄອງຄວາມສ່ຽງຜ -ຟຟລປະກອບດ້ວຍກຳມະການສະພາບໍລິຫານ 3 ທ່ານຊຶ່ງເປັນກຳມະການອິດສະຫຼະທັງໝົດເພື່ອເຮັດໜ້າທີ່ຄວບຄຸມ, ຄົ້ນຄວ້າ, ຊອກວິທີແກ້ໄຂ, ຕິດຕາມແລະປະເມີນຜົນຕິດພັນກັບຄວາມສ່ຽງໃນດ້ານຕ່າງໆເປັນຕົ້ນດ້ານການຜະລິດ , ການດຳເນີນງານ, ການເງິນຂອງຜ -ຟຟລ ຕາມການມອບໝາຍຂອງສະພາບໍລິຫານກໍຄືຂາຮຸ້ນຂອງຜ -ຟຟລແລະຕາມລະບຽບຫຼັກການທີ່ກຳນົດໄວ້ , ຮັບປະກັນປະສິດທິພາບຂອງການເຄື່ອນໄຫວວຽກງານຂອງຜ-ຟຟລ.

ໃນປີ 2021 ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ຄົ້ນຄວ້າແລະຕິດຕາມການແກ້ໄຂກ່ຽວກັບການຊຳລະເງິນຄ່າໄຟຟ້າ, ໜີ້ຕ້ອງຮັບ-ຕ້ອງສົ່ງ, ການລະດົມທຶນ ການອອກຮຸ້ນກູ້ຂອງຜ-ຟຟລ, ຄວາມຄືບໜ້າການໂອນຮຸ້ນແລະໂຄງການຈາກຟຟລແລະຕິດຕາມຄວາມສ່ຽງກ່ຽວກັບການຜະລິດພະລັງງານໄຟຟ້າ .ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ປະຕິບັດລະບອບກອງປະຊຸມຂອງຕົນສະໄໝສາມັນ ແລະວິສາມັນເພື່ອຄົ້ນຄວ້າ , ທົບທວນການຈັດຕັ້ງປະຕິບັດວຽກຄຸ້ມຄອງຄວາມສ່ຽງຂອງຜ -ຟຟລເພື່ອລາຍງານຕໍ່ກອງປະຊຸມສະພາບໍລິຫານຜ-ຟຟລພິຈາລະນາຊຶ່ງໂດຍລວມແລ້ວເຫັນວ່າບັນດາຄວາມສ່ຽງຕ່າງໆທີ່ເກີດຂຶ້ນແລະອາດຈະເກີດຂຶ້ນໃນອະນາຄົດສາມາດແກ້ໄຂແລະຫຼຸດຜ່ອນລົງໃນລະດັບທີ່ຍອມຮັບໄດ້.

ໃນຕໍ່ໜ້າ, ຄະນະກຳມະການຄຸ້ມຄອງຄວາມສ່ຽງຈະສືບຕໍ່ຕິດຕາມຢ່າງໃກ້ຊິດໂດຍປະສານສົມທົບກັບຄະນະກຳມະການອື່ນໆຂອງສະພາບໍລິຫານຜ-ຟຟລເພື່ອຮ່ວມກັນແກ້ໄຂບັນຫາແລະຄົ້ນຄວ້າມາດຕະການປ້ອງກັນຄວາມສ່ຽງຕ່າງໆທີ່ອາດຈະເກີດຂຶ້ນອັນເນື່ອງມາຈາກປັດໃຈພາຍໃນຂອງຜ -ຟຟລແລະຈາກປັດໃຈພາຍນອກເພື່ອເຮັດໃຫ້ຜ -ຟຟລ ເຄື່ອນໄຫວວຽກງານຂອງຕົນຢ່າງມີປະສິດທິພາບແລະມີປະສິດທິຜົນ.

ດ້ວຍຄວາມນັບຖື

<u>ປະທານຄະນະກຳມະການຄຸ້ມຄອງຄວາມສ່ຽງ</u>



ຄຳແກ້ວ ວິສີສົມບັດ

4. ຄຳເຫັນຂອງຄະນະກຳມະການກຳນົດຄ່າຕອບແທນ



ຄະນະກຳມະການກຳນົດຄ່າຕອບແທນ ປະກອບດ້ວຍສະມາຊິກສະພາບໍລິຫານ ຈຳນວນ 03 ທ່ານ, ມີສະມາຊິກ ທີ່ຈາກຄະນະອຳນວຍການໃຫຍ່ຜ-ຟຟລ ຈຳນວນ 01 ທ່ານ, ກຳມະການສະພາບໍລິຫານອິດສະຫຼະ ຈຳນວນ 01 ທ່ານ ແລະ ກຳມະການສະພາບໍລິຫານ ຈຳນວນ 01 ທ່ານ ທີ່ດຳລົງຕຳແໜ່ງເປັນປະທານຄະນະກຳມະການກຳນົດຄ່າຕອບແທນ

ໃນປີ 2021 ທີ່ຜ່ານມາ ຄະນະກຳມະການກຳນົດຄ່າຕອບແທນ ໄດ້ປະຕິບັດວຽກງານປົກະຕິ ຕາມພາລະບົດບາດ ໂດຍໄດ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍການປະກອບຄ່າຕອບແທນໃຫ້ແກ່ສະພາບໍລິຫານ, ກອງເລຂາສະພາບໍລິຫານ ແລະ ບັນດາທ່ານ ທີ່ເຂົ້າຮ່ວມກອງປະຊຸມ (ສະບັບປັບປຸງຄັ້ງທີ 3) ສະບັບເລກທີ 0344/ຜ-ຟຟລ, ລົງວັນທີ 19 ກຸມພາ 2020 ເຊິ່ງນຳໃຊ້ເປັນອັນລວມຂອງບໍລິສັດ ທີ່ມີຄວາມສອດຄ່ອງກັບລະບຽບ ທີ່ກຳນົດໄວ້ຂອງບໍລິສັດ.

ນອກຈາກນັ້ນ, ຄະນະກຳມະການກຳນົດຄ່າຕອບແທນ ໄດ້ມີການຈັດກອງປະຊຸມຄະນະກຳມະການກຳນົດຄ່າຕອບແທນ ຄັ້ງທີ 1/2021 ໃນວັນທີ 02 ກໍລະກົດ 2021 ແລະ ໄດ້ສຳເລັດການປັບປຸງພາລະບົດບາດ ຂອງ ຄະນະກຳມະການກຳນົດຄ່າຕອບແທນ ສະບັບເລກທີ 003/ຜ-ຟຟລ.ຄຕຫ, ລົງວັນທີ 27 ກໍລະກົດ 2021 ທີ່ໄດ້ຮັບຮອງຈາກປະທານສະພາບໍລິຫານ ຜ-ຟຟລ ເພື່ອໃຫ້ການປະຕິບັດວຽກງານຂອງຄະນະກຳມະການ ມີຄວາມສອດຄ່ອງກັບລະບຽບການທີ່ກຳນົດໄວ້.

ດ້ວຍຄວາມນັບຖື

ປະທານຄະນະກຳມະການກຳນົດຄ່າຕອບແທນ

ສົມພິດ ແກ້ວວິຈິດ

5. ຄຳເຫັນຂອງຄະນະກຳມະການຄັດເລືອກ



ຄະນະກຳມະການຄັດເລືອກ ປະກອບ ດ້ວຍສະມາຊິກສະພາບໍລິຫານ 3 ທ່ານ, ມີ 1 ທ່ານເປັນຮອງປະທານສະພາ ເຊິ່ງເຮັດໜ້າທີ່ເປັນປະທານຄະນະກຳມະການນີ້, 1 ທ່ານ ເປັນກຳມະການອິດສະຫຼະ ແລະ 1 ທ່ານ ເປັນສະມາຊິກທີ່ເປັນຜູ້ບໍລິຫານ.

ຄະນະກຳມະການຄັດເລືອກ ໄດ້ເປີດກອງປະຊຸມຂຶ້ນເປັນປົກກະຕິ ເພື່ອປະຕິບັດພາລະບົດບາດ ໃນການພິຈາລະນາຮັບຮອງການແຕ່ງຕັ້ງ ແລະ ຍົກຍ້າຍຕຳແໜ່ງບໍລິຫານຂັ້ນສູງ ຕາມຄວາມຈຳເປັນຂອງການບໍລິຫານຄຸ້ມຄອງ ຜ-ຟຟລ ໃນແຕ່ລະໄລຍະ. ໃນປີ 2021 ຄະນະກຳມະການຄັດເລືອກ ໄດ້ພິຈາລະນາລາຍຊື່ຂອງກະຊວງການເງິນ ແລະ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ທີ່ສະເໜີມາເປັນສະມາຊິກສະພາບໍລິຫານ ແລະ ຮອງຜູ້ອຳນວຍການຂອງ ຜ-ຟຟລ.

ການແຕ່ງຕັ້ງບຸກຄະລາກອນຂັ້ນສູງດັ່ງກ່າວແມ່ນອີງຕາມຄວາມຮຽກຮ້ອງຕ້ອງການທາງດ້ານວຽກງານ ແລະ ຄຸນວຸດທິຂອງແຕ່ລະຕຳແໜ່ງເປັນຫຼັກເພື່ອຕອບສະໜອງໃຫ້ການຄຸ້ມຄອງບໍລິຫານວຽກງານມີປະສິດທິຜົນທີ່ຍິ່ງໆຂຶ້ນ, ສັບຊ້ອນບຸກຄະລາກອນໃຫ້ຖືກຄົນ ຖືກວຽກ ແຕ່ຫາກບໍ່ແມ່ນຍ້ອນການບົກພ່ອງໃນໜ້າທີ່ວຽກງານ ຫຼື ການລະເມີດກົດລະບຽບກົດໝາຍ ຂອງບຸກຄະລາກອນທີ່ກ່ຽວຂ້ອງແຕ່ຢ່າງໃດ.

ນອກຈາກນີ້, ຄະນະກຳມະການຄັດເລືອກຍັງໄດ້ຄົ້ນຄວ້າກຳນົດມາດຕະຖານ ແລະ ເງື່ອນໄຂສຳລັບຜູ້ທີ່ເປັນເປົ້າໝາຍ ສະເໜີແຕ່ງຕັ້ງເປັນສະມາຊິກສະພາບໍລິຫານຊຸດໃໝ່ ພ້ອມທັງໄດ້ລິເລີ່ມຂັ້ນຕອນການສັນຫາບຸກຄະລາກອນ ທີ່ມີຄວາມເໝາະສົມເພື່ອສະເໜີປະກອບໃນສະພາບໍລິຫານ ຜ-ຟຟລ ຊຸດໃໝ່ວາລະ 2022-2023 ໂດຍອີງຕາມມາດຕະຖານແລະເງື່ອນໄຂດັ່ງກ່າວ. ຫຼັງຈາກນັ້ນຈຶ່ງຈະໄດ້ນຳສະເໜີໃຫ້ ກອງປະຊຸມຜູ້ຖືຮຸ້ນ ພິຈາລະນາແຕ່ງຕັ້ງຢ່າງສອດຄ່ອງຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ. ໃນນັ້ນ, ໂຄງປະກອບຂອງສະພາບໍລິຫານ ຕ້ອງຮັບປະກັນໃຫ້ມີຄວາມຫຼາກຫຼາຍທາງດ້ານຄວາມຮູ້, ປະສົບການ, ອາຍຸ ແລະ ເພດກໍ່ຄືເງື່ອນໄຂອື່ນໆ ທີ່ກຳນົດໄວ້ໃນຫຼັກການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ ທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ວາງອອກ ເພື່ອເຮັດໃຫ້ການປະຕິບັດໜ້າທີ່ຂອງສະພາບໍລິຫານ ມີຄວາມເຂັ້ມແຂງ ແລະ ສອດຄ່ອງກັບຫຼັກການຄຸ້ມຄອງບໍລິຫານທີ່ດີອີກດ້ວຍ.

ດ້ວຍຄວາມນັບຖື

ປະທານຄະນະກຳມະການຄັດເລືອກ

ຈັນທະບຸນ ສຸກອາລຸນ

6. ຄຳເຫັນຂອງຄະນະກຳມະການກວດສອບລາຍການທີ່ກ່ຽວພັນ



ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຂອງ ຜ-ຟຟລ ປະກອບ ດ້ວຍຮອງສະພາບໍລິຫານ 01 ທ່ານ, ກຳມະການສະພາບໍລິຫານ 01 ທ່ານ ແລະ ກຳມະການສະພາບໍລິຫານອິດສະຫຼະ 01 ທ່ານ, ໂດຍມີໜ້າທີ ສັງລວມລາຍຊື່ ບຸກຄົນ ແລະ ນິຕິບຸກຄົນທີ່ກ່ຽວພັນຂອງບໍລິສັດ ລວມທັງການປ່ຽນແປງລາຍຊື່ ຂອງບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວພັນໃຫ້ສຳນັກງານຄະນະກຳມະການຄຸ້ມ ຄອງຫຼັກຊັບ; ຄົ້ນຄວ້າ, ຕິດຕາມຂັ້ນຕອນ ການຈັດຕັ້ງປະຕິບັດລາຍການທີ່ກ່ຽວ ພັນ; ແຕ່ງຕັ້ງທີ່ປຶກສາອິດສະຫຼະທາງດ້ານການເງິນ; ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງບໍລິສັດ.

ສຳລັບການຈັດຕັ້ງປະຕິບັດວຽກໃນປີ 2021 , ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ໄດ້ ຈັດຕັ້ງປະຕິບັດວຽກງານຕາມໜ້າທີ່ກຳນົດ ແລະ ຈັດກອງປະຊຸມພາຍໃນຄະນະກຳມະການ 2 ຄັ້ງ. ໂດຍປີ 2021 ຍັງບໍ່ມີລາຍການທີ່ກ່ຽວພັນເກີດຂຶ້ນ ຫຼື ບໍ່ມີລາຍການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນ ລະຫວ່າງ ຜ-ຟຟລ ກັບບຸກຄົນທີ່ກ່ຽວພັນ ຫຼື ນິຕິບຸກຄົນທີ່ກ່ຽວພັນ (ບຸກຄົນທີ່ຖືຮຸ້ນຂອງບໍລິສັດ 5% ຂຶ້ນໄປ), (ນິຕິບຸກຄົນທີ່ຖື ຮຸ້ນຂອງບໍລິສັດ ຫຼື ຖືຮຸ້ນໂດຍບໍລິສັດ 5% ຂຶ້ນໄປ).

ປະຈຸບັນ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ໄດ້ ເຂົ້າມາຖືຮຸ້ນ ຜ-ຟຟລ ຈຳນວນ 24% ແລະ ໃນອະນາຄົດຖ້າຫາກມີການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນ ລະຫວ່າງ ຜ-ຟຟລ ແລະ ບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ຈະໄດ້ຈັດຕັ້ງປະຕິບັດສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້

ດ້ວຍຄວາມນັບຖື

ປະທານຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ຄຳເພັ້ງ ທິນນະກອນ

III. ຂໍ້ມູນກ່ຽວກັບ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

1. ປະຫວັດການສ້າງຕັ້ງແລະ ການເຕີບໃຫຍ່ຂະຫຍາຍຕົວ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຖືກສ້າງຕັ້ງຂຶ້ນໃນວັນທີ 15 ທັນວາ 2010 ໂດຍ ລັດວິສາຫະກິດໄຟຟ້າລາວ (ຟຟລ) ໂອນເອົາບັນດາເຂື່ອນ ແລະ ຊັບສິນທີ່ກ່ຽວຂ້ອງກັບການຜະລິດ ມາເປັນ ຊັບສິນສ້າງຕັ້ງ ຜ-ຟຟລ, ຊຶ່ງປະກອບດ້ວຍ: ເຂື່ອນໄຟຟ້ານ້ຳງື່ມ 1, ເຂື່ອນໄຟຟ້ານ້ຳມັງ 3, ເຂື່ອນໄຟຟ້ານ້ຳເລິກ, ເຂື່ອນໄຟຟ້າເຊເສັດ 1 ແລະ ເຂື່ອນໄຟຟ້າເຊເສັດ 2, ເຂື່ອນໄຟຟ້າແຊລະບໍ ແລະ ເຂື່ອນໄຟຟ້ານ້ຳຊອງ, ລວມມີ ກຳລັງຕິດຕັ້ງທັງໝົດ 387 MW; ພ້ອມດ້ວຍພະນັກງານທີ່ປະຈຳຢູ່ເຂື່ອນທັງໝົດ ແລະ ພະນັກງານສຳນັກງານ ໃຫຍ່ ຈຳນວນໜຶ່ງໃຫ້ແກ່ ຜ-ຟຟລ.

ໃນເບື້ອງຕົ້ນ ຜ-ຟຟລ ມີທຶນຈົດທະບຽນຈຳນວນ 2.605.792.200.000 ກີບ ແລະ ຄິດເປັນຮຸ້ນ 651.448.050 ຮຸ້ນ (ຮຸ້ນລະ 4.000 ກີບ). ຈາກນັ້ນ ບໍລິສັດໄດ້ຕົກລົງໃຫ້ມີການເພີ້ມທຶນດ້ວຍການອອກຮຸ້ນ ຄັ້ງທຳອິດ (IPO) ດ້ວຍຈຳນວນຮຸ້ນ 217.149.000 ຮຸ້ນ ໃຫ້ມະຫາຊົນທົ່ວໄປ, 07 ມັງກອນ 2011 ບໍລິສັດ ໄດ້ຈົດທະບຽນດ້ວຍທຶນທັງໝົດ 3.474.388.200.000 ກີບ ແລະ ມີຈຳນວນຮຸ້ນທັງໝົດ 868.597.050 ຮຸ້ນ. ໃນວັນທີ 11 ມັງກອນ 2011, ຜ-ຟຟລ ຈຶ່ງໄດ້ຈົດທະບຽນເຂົ້າໃນຕະຫລາດຫລັກຊັບລາວ ເພື່ອຈຳໜ່າຍຮຸ້ນໃນ ຕະຫລາດຂັ້ນ II ໃຫ້ນັກລົງທຶນຢ່າງເປັນທາງການ. ສັດສ່ວນການຖືຮຸ້ນໃນ ຜ-ຟຟລ ຈຶ່ງມີ ຟຟລ 75% ແລະ ອື່ນ 25% ແມ່ນຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດ.

ໃນກາງປີ 2012, ຜ-ຟຟລ ໄດ້ອອກຮຸ້ນສາມັນແບບສະເໜີຂາຍໃຫ້ຜູ້ຖືຮຸ້ນເດີມ ແລະ ແບບສະເໜີ ຂາຍຕໍ່ມວນຊົນທົ່ວໄປ ເພື່ອລະດົມທຶນໄປຊື້ເອົາຮຸ້ນໃນ 4 ເຂື່ອນຜູ້ຜະລິດໄຟຟ້າເອກະລາດທີ່ ຟຟລ ຖືຮຸ້ນຢູ່ຊຶ່ງ ປະກອບມີ: ເຂື່ອນໄຟຟ້າເທີນຫີນບູນ (60%), ເຂື່ອນໄຟຟ້ານ້ຳງື່ມ 2(25%), ເຂື່ອນໄຟຟ້າຫ້ວຍເຫາະ (20%) ແລະ ເຂື່ອນໄຟຟ້ານ້ຳລີກ 1-2 (10%) ຊຶ່ງມີກຳລັງຕິດຕັ້ງທັງໝົດ 494 MW (ຕາມຊັດສ່ວນການຖືຮຸ້ນ) ເຮັດ ໃຫ້ກຳລັງຕິດຕັ້ງທັງໝົດຂອງຜ-ຟຟລເພີ່ມຂຶ້ນເປັນ 881 MW. ດັ່ງນັ້ນ ໃນທ້າຍປີ 2012 ຜ-ຟຟລ ມີທຶນຈົດ ທະບຽນເປັນເງິນ 4.904.867.060.000 ກີບ ແລະ ມີຮຸ້ນທັງໝົດ 1.226.216.765 ຮຸ້ນ, ໃນນັ້ນ ຟຟລ ແມ່ນ ຍັງຮັກສາສັດສ່ວນການຖືຮຸ້ນໃນ ຜ-ຟຟລ 75% ເໝືອນເດີມ.

ໃນວັນທີ 12 ທັນວາ 2014, ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ ແລະ ສາມາດລະດົມທຶນໄດ້ 6.500 ລ້ານບາດ. ທຶນຈຳນວນດັ່ງກ່າວນີ້ແມ່ນຖືກນຳໃຊ້ເພື່ອຂະຫຍາຍກຳລັງການຜະລິດເພີ່ມຕື່ມຈຳນວນ 392 MW, ໃນນັ້ນມີໂຄງການຜະລິດໄຟຟ້າຈາກ ຟຟລ ຈຳນວນ 4 ໂຄງການລວມກຳລັງຕິດຕັ້ງ 292 MW ແລະ ຊື້ຮຸ້ນທີ່ ຟຟລ ຖືໃນໂຄງການ IPP ອີກ 5 ໂຄງການລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 100 MW.

ມາຮອດວັນທີ 10 ກຸມພາ 2015, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້ານ້ຳງື່ມ 5 (15%) ຕາມ ສັດສ່ວນ ຟຟລ ຖືຮຸ້ນ ເທົ່າກັບ 18 MW ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 899 MW.

ເພື່ອສືບຕໍ່ໃຫ້ບໍລິສັດເຕີບໃຫຍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ ໃນເດືອນກັນຍາ 2015 ຜ-ຟຟລ ໄດ້ອອກ ຮຸ້ນເພີ່ມທຶນຄັ້ງທີ 3, ເຮັດໃຫ້ລະດົມທຶນໄດ້ 2.754 ຕື້ກີບ. ເງິນທຶນທີ່ລະດົມໄດ້ໃນຄັ້ງນີ້ຈະຖືກນຳໃຊ້ເຂົ້າໃນ ການຂະຫຍາຍກຳລັງຕິດຕັ້ງ ຂອງບໍລິສັດເພີ່ມຕື່ມຈຳນວນ 386,2 MW, ໃນນັ້ນມີໂຄງການຜະລິດໄຟຟ້າທີ່ຈະ ຮັບໂອນຈາກ ຟຟລ ຈຳນວນ 5 ໂຄງການ ລວມ 277,9 MW, ການລົງທຶນໃນຮຸ້ນຂອງ ຟຟລ ໃນບັນດາ ໂຄງການ IPP ຈຳນວນ 6 ໂຄງການລວມກຳລັງຕິດຕັ້ງຕາມສັດສ່ວນຖືຮຸ້ນ 108,3 MW. ເຮັດໃຫ້ ທຶນຈົດ ທະບຽນເປັນເງິນ 6.717.214.788.000 ກີບ ແລະ ມີຮຸ້ນທັງໝົດ 1.679.303.697 ຮຸ້ນ, ໃນນັ້ນ ຟຟລ ແມ່ນ ຍັງຮັກສາສັດສ່ວນການຖືຮຸ້ນໃນ ຜ-ຟຟລ 75% ເໝືອນເດີມ.

ໃນວັນທີ 24 ທັນວາປີ 2015, ຜ-ຟຟລ ໄດ້ຮັບໂອນເຂື່ອນໄຟຟ້ານ້ຳຄານ 2 ກຳລັງຕິດຕັ້ງ 130 MW, ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ກຳລັງຕິດຕັ້ງ 88 MW ແລະ ເຂື່ອນໄຟຟ້ານ້ຳສະນາກຳລັງຕິດຕັ້ງ 14 MW ເຮັດ ໃຫ້ມີກຳລັງຕິດຕັ້ງ ທັງໝົດເພີ່ມຂຶ້ນເປັນ 1.131 MW.

ໃນວັນທີ 2 ກັນຍາ 2016 , ຜ-ຟຟລ ໄດ້ອອກຈຳໜ່າຍຮຸ້ນກູ້ເປັນເງິນໂດລາສະຫະລັດທີ່ປະເທດໄທ, ທຶນຈຳນວນດັ່ງກ່າວນີ້ແມ່ນໄດ້ຖືກນຳໃຊ້ໃນ 10 ໂຄງການປະກອບມີ: ໂຄງການແຊລະບໍ່ພາກຂະຫຍາຍ,

ໂຄງການເຊເສັດ 2 ພາກຂະຫຍາຍ, ໂຄງການນ້ຳເທີນ 1, ໂຄງການປາກແບ່ງ, ໂຄງການພະລັງງານແສງອາທິດ (Solar), ໂຄງການນ້ຳດີກ 1, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ຈັກ ເບີ 2 ເຂື່ອນໄຟຟ້ານ້ຳມັງ 3, ໂຄງການນ້ຳພູນ (Finance Cost), ແລະໂຄງການນ້ຳບີ 1, 2, 3 (Finance Cost) ຊຶ່ງວົງເງິນໃນການລະດົມທຶນຄັ້ງນີ້ 312 ລ້ານໂດລາສະຫາລັດ.

ວັນທີ 14 ທັນວາ 2017 ໄດ້ສ້າງຕັ້ງບໍລິສັດ ບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ.

ວັນທີ 18 ມັງກອນ ປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້ານ້ຳແບ່ງ (10%) ຕາມສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 3,4 MW, ວັນທີ 4 ກຸມພາປີ 2018, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າດອນສະ ໂຮງ (20%) ຕາມສັດສ່ວນ ຟຟລ ຖືຮຸ້ນເທົ່າກັບ 52 MW. ໃນວັນທີ 13 ກໍລະກົດ 2018,ຜ-ຟຟລ ໄດ້ອອກ ຈຳໜ່າຍຮຸ້ນກູ້ສະກຸນເງິນບາດທີ່ປະເທດໄທ ເຊິ່ງສາມາດຂາຍໄດ້ 13.660 ,40 ລ້ານບາດ ເພື່ອລົງທຶນເຂົ້າໃນ ການຊື້ຮຸ້ນຂອງໂຄງການ ເຂື່ອນໄຟຟ້າໄຊຍະບູລີ ແລະ ດອນສະໂຮງ; ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້ານ້ຳລອງ (20%) ຕາມສັດສ່ວນຟຟລຖືຮຸ້ນເທົ່າກັບ 1 MW ແລະ ໂຮງງານຜະລິດໄຟຟ້າພະລັງງານແສງຕາເວັນ (60%) ຕາມສັດສ່ວນ ຜ-ຟຟລ ຖືຮຸ້ນເທົ່າກັບ 19,2 MW.

ປີ 2019, ຜ-ຟຟລ ໄດ້ຮັບໂອນຮຸ້ນຂອງເຂື່ອນໄຟຟ້າໄຊຍະບູລີໃນວັນທີ 19 ມີນາ 2019 ຕາມຊັດສ່ວນ ທີ່ ຟຟລ ຖືຮຸ້ນ 20% ເທົ່າກັບກຳລັງການຕິດຕັ້ງ 257 MW; ໃນເດືອນພຶດສະພາ 2019, ຜ-ຟຟລ ໄດ້ຮັບໂອນ ຮຸ້ນ ຂອງເຂື່ອນໄຟຟ້ານ້ຳມັງ 1 ຕາມຊັດສ່ວນ ຟຟລ ຖືຮຸ້ນ 10% ເທົ່າກັບ 6,4 MW ແລະ ເຂື່ອນໄຟຟ້ານ້ຳອູ 2, 5 ແລະ 6 ຕາມຊັດສ່ວນທີ່ ຟຟລ ຖືຮຸ້ນ 15% ເທົ່າກັບ 18 MW, 36 MW ແລະ 27 MW ຕາມລຳດັບເຮັດ ໃຫ້ ຜ-ຟຟລ ເຮັດໃຫ້ມີກຳລັງຕິດຕັ້ງເພີ່ມຂຶ້ນເປັນ 1.551 MW.

ປີ 2020 ກຳລັງການຕິດຕັ້ງຂອງໂຄງການພະລັງງານໄຟຟ້າ ທີ່ມີການດຳເນີນການຜະລິດແລ້ວຂອງ ຜ-ຟຟລ ທັງໝົດ 1.682,6 MW, ໃນນັ້ນໂຄງການພະລັງງານໄຟຟ້າທີ່ ຜ-ຟຟລ ຄຸ້ມຄອງຮ້ອຍເປີເຊັນມີທັງໝົດ 10 ໂຄງການ ລວມເປັນກຳລັງຕິດຕັ້ງ 699 MW (ນັບລວມໂຄງການພາກຂະຫຍາຍນ້ຳງື່ມ 1), ແລະ ໂຄງການຜູ້ ຜະລິດໄຟຟ້າເອກະລາດ (IPPs) ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 16 ໂຄງການ, ໃນນັ້ນມີໂຄງການໄຟຟ້າ ພະລັງງານນ້ຳຈຳນວນ 15 ໂຄງການ ແລະ ໂຄງການໄຟຟ້າພະລັງງານແສງຕາເວັນ ລວມກຳລັງຕິດຕັ້ງຕາມ ສັດສ່ວນທັງຫມົດ 983,6 MW.

ວັນທີ 19 ກຸມພາ ປີ 2021 ໄດ້ມີການໂອນຮຸ້ນ ຜ-ຟຟລ ທີ່ ລັດວິສາຫະກິດໄຟຟ້າລາວ ຖືຄອງ ຈຳນວນ 24% ໃຫ້ແກ່ ບໍລິສັດພີງຊັບທະວີກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ.

2. ບໍລິສັດໄປລົງທຶນແຕ່ອັດຕາສ່ວນ25% ຂຶ້ນໄປ

ຊື່ໂຄງການ	ສັດສ່ວນຮຸ້ນ(%)	ຂາຮຸ້ນ
ເທີນຫີນບູນ (THPC)	60	1) EDL-GEN: 60% 2) GMS LAO Co., Ltd: 20% 3) Nordic Hydropower Co: 20%
ນ້ຳງື່ມ 2 (2)	25	1) CH.Khanchang (Thailand): 28.5% 2) EDL-GEN: 25% 3) Ratchburi (Thailand): 25% 4) Bangkok Expressway PCL (Thailand): 12.5% 5) Shlaphak Group (USA): 4% 6) PT Construction & Irrigation Co., (Laos): 4% 7) Team Consulting Engineering (Thailand): 1%
ຫ້ອຍລຳພັນຕອນລຸ່ມ	60	1) EDL-Gen: 60% 2) Vientiane Automation and Solution Engineering Co., Ltd.: 40%
ນ້ຳດີກ 1	70	1) EDL-Gen: 70% 2) National Consulting Group (NCG): 30%
ນ້ຳບີ 1-2-3	80	1) EDL-Gen: 80% 2) Chanthavone Road and Bridge Construction and Maintenance Company: 20%
ນ້ຳພູນ	51	1) EDL-Gen: 51% 2) SOK Corporation Co., Ltd.: 49%
EDL-GEN SOLAR	60	1) EDL-Gen: 60% 2) Patthana Energy Absolute Sole Co., Ltd.: 40%

IV. ຜົນການດຳເນີນງານ

1. ການຜະລິດພະລັງງານໄຟຟ້າ

ປີ 2021 ຜ-ຟຟລ ສາມາດສັ່ງລວມຕົວເລກການຜະລິດຕົວຈິງໄດ້ທັງໝົດ 7.240,36 GWh ຫລື ເທົ່າກັບ 97,4% ຂອງແຜນການ ແລະ ທຽບໃສ່ປີຜ່ານມາ ເທົ່າກັບ 119,7% ຊຶ່ງມີລາຍລະອຽດດັ່ງນີ້:

ການຜະລິດຂອງບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ 100% ສາມາດປະຕິບັດຕົວຈິງໄດ້ 2.292,04 GWh ຫລື ເທົ່າກັບ 85,9% ຂອງແຜນການ, ໂດຍທຽບໃສ່ປີຜ່ານມາ ເທົ່າກັບ 99,5%.

ການຜະລິດຈາກບັນດາໂຄງການຜູ້ຜະລິດໄຟຟ້າເອກະລາດຕາມສັດສ່ວນ ທີ່ ຜ-ຟຟລ ເຂົ້າຖືຮຸ້ນທັງໝົດ 15 ໂຄງການສາມາດປະຕິບັດໄດ້ 4.920,68 GWh ຫລືເທົ່າ 103,9% ຂອງແຜນການ ແລະ ເທົ່າ 132,2% ທຽບໃສ່ປີຜ່ານມາ ຊຶ່ງເຫັນວ່າສາມາດຜະລິດໄດ້ລື່ນແຜນ. ການຜະລິດຂອງໂຄງການພະລັງງານແສງຕາເວັນ ສາມາດປະຕິບັດຕົວຈິງໄດ້ 27,64 GWh ຫລືເທົ່າ 94,1% ຂອງແຜນການ ແລະ ເທົ່າ 108,2% ທຽບໃສ່ປີຜ່ານມາ.

ລາຍລະອຽດ(ຫົວໜ່ວຍ: GWh)	ປີ 2021			ປີ 2020	
	ປະຕິບັດຕົວຈິງ	ແຜນການ	ທຽບແຜນການ	ປະຕິບັດຕົວຈິງ	ທຽບປີ 2020
ເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ	2.292,04	2.668,00	85,9%	2.303,55	99,5%
ການຜະລິດໃນ ເຂື່ອນIPPs	4.920,68	4.735,47	103,9%	3.721,23	132,2%
ໂຄງການພະລັງງານແສງຕາເວັນ	27,64	29,38	94,1%	25,55	108,2%
ລວມ	**7.240,36**	**7.432,85**	**97,4%**	**6.050,33**	**119,7%**

2. ໃບລາຍງານຜົນໄດ້ຮັບ

ໃນປີ 2021, ຜ-ຟຟລ ມີລາຍຮັບ, ລາຍຈ່າຍ ແລະ ກຳໄລ(ຂາດທຶນ) ລາຍລະອຽດສະແດງໃນຕາຕະລາງລຸ່ມນີ້:

ຫົວໜ່ວຍ:ລ້ານກີບ

ເນື້ອໃນ	ຕົວຈິງ 2021	ແຜນການ 2021	ຈຳນວນ ປ່ຽນແປງ	ທຽບໃສ່ ແຜນ 2021	ຕົວຈິງ 2020	ຈຳນວນ ປ່ຽນແປງ	ທຽບໃສ່ 2020
	1	2	3=1-2	4=3/2	5	6=1-5	7=6/5
ພາກລາຍຮັບ	**2.212.671**	**2.114.680**	**97.991**	**4,63%**	**1.710.170**	**502.501**	**29,38%**
ລາຍຮັບຈາກການຂາຍກະແສໄຟຟ້າ	1.196.664	1.356.283	(159.619)	-11,77%	1.167.375	29.289	2,51%
ລາຍຮັບອື່ນໆ	55.292	13.562	41.730	307,70%	44.092	11.200	25,40%
ກຳໄລຈາກອັດຕາແລກປ່ຽນ	-	8.626	(8.626)	-100%	-	-	-
ກຳໄລຂອງຮຸ້ນຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	960.715	736.209	224.506	30,49%	498.703	462.012	92,64%
ພາກລາຍຈ່າຍ	**2.208.789**	**1.394.063**	**814.726**	**58,44%**	**1.552.727**	**656.062**	**42,25%**
ລາຍຈ່າຍຕົ້ນທຶນການຂາຍ	585.971	527.390	58.581	11,11%	567.894	18.077	3,18%
ລາຍຈ່າຍການດຳເນີນງານ	154.090	199.769	(45.679)	-22,87%	198.319	(44.229)	-22,30%
ລາຍຈ່າຍທາງການເງິນ	855.815	666.904	188.911	28,33%	741.125	114.690	15,48%
ຂາດທຶນຈາກອັດຕາແລກປ່ຽນ	612.913	-	612.913	-	45.389	567.524	1250,36%
ລາຍຈ່າຍອາກອນກຳໄລ	-	-	-	-		-	-
ກຳໄລສຸດທິ	**3.882**	**720.617**	**(716.735)**	**-99,46%**	**157.443**	**(153.561)**	**-97,53%**

- **ພາກລາຍຮັບ:** ຜ-ຟຟລ ມີລາຍຮັບລວມຈຳນວນ 2.212.671 ລ້ານກີບ, ລື່ນແຜນການ 4,63% ແລະ ເມື່ອທຽບໃສ່ປີຜ່ານມາ ແມ່ນເພີ່ມຂຶ້ນ 29,38%, ເນື່ອງຈາກຕົວເລກກຳໄລຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ລື່ນແຜນການ 224.506 ລ້ານກີບ ຫລື 30,49% ແລະ ສູງກວ່າປີຜ່ານມາເຖິງ 92,64% ເພາະບັນດາໂຄງການ IPPs ຫຼັກຂອງ ຜ-ຟຟລ ມີຜົນການດຳເນີນທຸລະກິດທີ່ດີກວ່າ ຜ-ຟຟລ ຂຶ້ນແຜນໄວ້ ແລະ ດີກວ່າປີຜ່ານມາ ໂດຍສະເພາະ ໂຄງການເຫີນຫີນບູນ, ໄຊຍະບູລີ, ດອນສະໂຮງ ແລະ ນ້ຳງື່ມ 2.
- **ພາກລາຍຈ່າຍ:** ຜ-ຟຟລ ມີລາຍຈ່າຍລວມທັງໝົດຈຳນວນ 2.208.789 ລ້ານກີບ, ລື່ນແຜນການ ຈຳນວນ 814.726 ລ້ານກີບ ຫລື 58,44%ແລະ ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 42,25%. ສາເຫດຫຼັກແມ່ນມາຈາກ ຂາດທຶນອັດຕາແລກປ່ຽນ ເຊິ່ງກວມຈຳນວນ 612.913 ລ້ານກີບ ຫລື 27,75% ຂອງລາຍຈ່າຍທັງໝົດ ໂດຍສ່ວນໃຫຍ່ມາຈາກຜົນຂອງການແຂງຄ່າຂອງເງິນຕາຕ່າງປະເທດ ທຽບກັບກີບເຮັດໃຫ້ມີການຮັບຮູ້ຂາດທຶນຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງໃນເວລາຊຳລະຄືນດອກເບ້ຍແລະເງິນຕົ້ນ ຂອງເງິນກູ້ແລະຮຸ້ນກູ້. ນອກຈາກນີ້ ລາຍຈ່າຍດອກເບ້ຍທີ່ສູງຂຶ້ນເມື່ອລາຍງານເປັນສະກຸນເງິນກີບ ຍັງເປັນຜົນມາຈາກ ການເໜັງຕີງຂອງອັດຕາແລກປ່ຽນດັ່ງກ່າວ, ບາງລາຍຈ່າຍທາງການເງິນເພີ່ມຕື່ມ ແມ່ນມາຈາກລາຍຈ່າຍດອກເບ້ຍ ແລະ ຄ່າທຳນຽມຂອງເງິນກູ້ໄລຍະສັ້ນ ແລະ ອັດຕາດອກເບ້ຍໃໝ່ຂອງຮຸ້ນກູ້ທີ່ສູງຂຶ້ນ ເນື່ອງຈາກການຖືກປັບຫລຸດລະດັບຄວາມໜ້າເຊື່ອຖື. ສຳລັບລາຍຈ່າຍການດຳເນີນງານ ແລະ ບໍລິຫານ, ເຊິ່ງເປັນໝວດລາຍຈ່າຍທີ່ນ້ອຍກວ່າໝູ່, ແມ່ນຫລຸດແຜນການ 45.679 ລ້ານກີບ ຫລື 22,87% ແລະ ທຽບໃສ່ປີຜ່ານມາ ແມ່ນຫລຸດລົງ 22,30%.
- **ກຳໄລ/(ຂາດທຶນ)ສຸດທິ:** ເນື່ອງຈາກຜົນກະທົບຈາກການແຂງຄ່າຂອງເງິນຕາຕ່າງປະເທດ ທຽບກັບສະກຸນເງິນກີບ ເຮັດໃຫ້ມີການຮັບຮູ້ຂາດທຶນອັດຕາແລກປ່ຽນ ຕາມນະໂຍບາຍບັນຊີ, ເຮັດໃຫ້ຜົນການດຳເນີນທຸລະກິດຂອງ ຜ-ຟຟລ ປີ 2021 ມີກຳໄລສຸດທິຈຳນວນ 3.882 ລ້ານກີບ.

3. ການຄິດໄລ່ອັດຕາສ່ວນທີ່ສຳຄັນທາງດ້ານການເງິນ

ການຄິດໄລ່ອັດຕາສ່ວນທາງການເງິນນີ້ ແມ່ນເພື່ອປະເມີນຜົນການດຳເນີນງານຂອງ ຜ-ຟຟລ ແລະ ເພື່ອໃຫ້ສອດຄ່ອງກັບມາດຖານການລາຍງານໃຫ້ແກ່ພາກສ່ວນພາຍນອກ ໂດຍໄດ້ຄຳນວນບັນດາອັດຕາສ່ວນການເງິນທີ່ສຳຄັນ ດັ່ງນີ້:

ເມື່ອປຽບທຽບຄວາມສາມາດໃນການສ້າງກຳໄລ ເຫັນວ່າ ອັດຕາກຳໄລກ່ອນລາຍຈ່າຍດອກເບ້ຍ, ອາກອນ ກຳໄລ, ຄ່າຫລຸ້ຍຫ້ຽນແລະຄ່າເສື່ອມ (EBITDA Margin) ແບບບໍ່ລວມກຳໄລ/ຂາດທຶນ ຈາກອັດຕາແລກປ່ຽນ ແມ່ນດີຂຶ້ນຈາກ 85,4% ໃນປີ 2020 ມາເປັນ 90,1% ໃນປີ 2021 ເນື່ອງຈາກ ຜົນການດຳເນີນງານທີ່ໂດດເດັ່ນຈາກຕົວເລກກຳໄລຈາກການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນທີ່ສູງຂຶ້ນ ແລະ ລາຍຈ່າຍດຳເນີນ

ງານແລະບໍລິຫານທີ່ຫລຸດລົງ. ຢ່າງໃດກໍຕາມ, ການຮັບຮູ້ຂາດທຶນສຸດທິຈາກອັດຕາແລກປ່ຽນໃນໃບລາຍງານຜົນໄດ້ຮັບ ເປັນປັດໄຈກະທົບຫຼັກທີ່ເຮັດໃຫ້ມີກຳໄລສຸດທິຫລຸດລົງ, ຈຶ່ງເຮັດໃຫ້ ກຳໄລພື້ນຖານຕໍ່ຮຸ້ນ, ຕົວເລກອັດຕາກຳໄລສຸດທິ, ອັດຕາຜົນຕອບແທນຕໍ່ຜູ້ຖືຮຸ້ນ ແລະ ອັດຕາຜົນຕອບແທນຕໍ່ຊັບສິນ ຂອງປີ 2021 ຫລຸດລົງ ເມື່ອທຽບກັບປີ 2020. ສຳລັບ ອັດຕາສ່ວນໜີ້ສິນຕໍ່ທຶນຂອງຜູ້ຖືຮຸ້ນ (D/E) ໃນທ້າຍປີ 2021 ແມ່ນເທົ່າກັບ 1,88 ເທົ່າ, ເພີ່ມຂຶ້ນຈາກ 1,66 ເທົ່າໃນທ້າຍປີ 2020 ໂດຍສາເຫດຫລັກມາຈາກ ການແຂງຄ່າຂອງສະກຸນເງິນຕ່າງປະເທດ ທຽບກັບກີບ ທີ່ສົ່ງຜົນເຮັດໃຫ້ໜີ້ສິນເງິນຕ່າງປະເທດ ຖືກຕີມູນຄ່າແລະລາຍງານເປັນກີບ ເປັນຈຳນວນທີ່ສູງຂຶ້ນ.

ລ/ດ	ອັດຕາສ່ວນການເງິນ	ຫົວໜ່ວຍ	ປີ 2021	ປີ 2020
1	ອັດຕາກຳໄລກ່ອນລາຍຈ່າຍດອກເບ້ຍ, ອາກອນກຳໄລ, ຄ່າຫຼ້ຍຫ້ຽນແລະຄ່າເສື່ອມ (EBITDA Margin) ແບບບໍ່ລວມ ກຳໄລ/ຂາດທຶນຈາກອັດຕາແລກປ່ຽນ (Exclude FX Gain/Loss)	%	90,1	85,4
2	ອັດຕາກຳໄລສຸດທິ(Net Profit Margin)	%	0,2	9,2
3	ອັດຕາຜົນຕອບແທນຕໍ່ຜູ້ຖືຮຸ້ນ(Return on Equity ຫຼື ROE)	%	0,04	1,7
4	ອັດຕາຜົນຕອບແທນຕໍ່ຊັບສິນ(Return on Assets ຫຼື ROA)	%	0,02	0,7
5	ອັດຕາສ່ວນໜີ້ສິນຕໍ່ທຶນຂອງຜູ້ຖືຮຸ້ນ(Debt to Equity Ratio ຫຼື D/E)	ເທົ່າ	1,88	1,66
6	ກຳໄລພື້ນຖານຕໍ່ຮຸ້ນ (EPS)	ກີບ/ຮຸ້ນ	2,62	94,49

4. ການມອບພັນທະໃຫ້ລັດ

ຜ-ຟຟລ ແມ່ນບໍລິສັດມະຫາຊົນ ທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ, ໂດຍທາງດ້ານນິຕິກຳ ຜ-ຟຟລ ກໍ່ແມ່ນບໍລິສັດໜຶ່ງທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງ ສປປລາວ; ດັ່ງນັ້ນການມອບພັນທະກໍ່ເປັນອີກວຽກໜຶ່ງທີ່ ຜ-ຟຟລ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າ. ພັນທະທີ່ ຜ-ຟຟລ ມອບໃຫ້ລັດ, ປະກອບດ້ວຍ ອາກອນມູນຄ່າເພີ່ມ, ອາກອນເງິນປັນຜົນ, ຄ່າພາກຫລວງ, ອາກອນເງິນເດືອນ-ເບ້ຍປະຊຸມ, ອາກອນກຳໄລ ແລະ ອື່ນໆ, ໃນປີ 2021 ລວມມອບພັນທະທັງໝົດ 88.750 ລ້ານກີບທຽບໃສ່ໄລຍະດຽວກັນຂອງປີຜ່ານມາເທົ່າກັບ 190,96% ໃນນີ້ມີ:

ລາຍການລະອຽດ(ຫົວໜ່ວຍ: ລ້ານກີບ)	ປີ 2021	ປີ 2020	ທຽບໃສ່ປີ 2020
ອາກອນມູນຄ່າເພີ່ມ	64.750	24.734	261,79%
ອາກອນເງິນປັນຜົນ	12.950	11.277	114,84%
ຄ່າພາກຫລວງ	6.810	6.840	99,56%
ອາກອນເງິນເດືອນ-ເບ້ຍປະຊຸມ	4.240	3.523	120,35%
ອາກອນກຳໄລ		101	-
ລວມທັງໝົດ	**88.750**	**46.475**	**190,96%**

V. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນຂອງບໍລິສັດ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຕັ້ງຢູ່ຖະໜົນມິດຕະພາບ ລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ ນະຄອນຫຼວງວຽງ ຈັນຕູ້ ປ.ນ 2392 , ໂທລະສັບ: (856-21) 316142 ; ແຟັກ: (856-21) 316141 ; ອີເມວ: edlgenhq@edlgen.com.la, ເວັບໄຊ: www.edlgen.com.la. ເຊິ່ງເຂື່ອນໄຟຟ້າພະລັງງານນ້ຳທີ່ ຜ-ຟຟລ ຄຸ້ມຄອງ ທັງໝົດມີ 10 ເຂື່ອນ, ເຂື່ອນໄຟຟ້າພະລັງງານນ້ຳທີ ຜ-ຟຟລ ເຂົ້າໄປຖືຮຸ້ນທັງໝົດມີ 13 ເຂື່ອນ, ພະລັງງານແສງຕາເວັນທີ ເຂົ້າໄປຖືຮຸ້ນ. ນອກຈາກນີ້ ຜ-ຟຟລ ຍັງໃຫ້ການບໍລິການຄຸ້ມຄອງ ແລະ ບຳລຸງຮັກສາໂດຍຄຸ້ມຄອງຜະລິດ ແລະ ບຳລຸງ ຮັກສາໂຮງໄຟຟ້າຢູ່ພາຍໃນ ແລະ ຕ່າງປະເທດມີວັດຖຸປະສົງໃນບໍລິການດ້ານບຸກຄະລາກອນ, ຜູ້ຊຳນານງານ, ທີ່ປຶກສາ ດ້ານການຄຸ້ມຄອງການຜະລິດ, ບຳລຸງຮັກສາສ້ອມແປງ ແລະ ໃຫ້ການຄຸ້ມຄອງການຜະລິດກະແສໄຟຟ້າສ້ອມແປງຮັກສາ ເຂື່ອນ ຂະໜາດນ້ອຍ-ຂະໜາດໃຫຍ່, ສະຖານນີໄຟຟ້າຂອງ ຜ-ຟຟລ ລວມໄປເຖິງພາກລັດ ແລະ ເອກະຊົນ.

VI. ຂໍ້ມູນກ່ຽວກັບຫລັກຊັບ ແລະ ໂຄງສ້າງຜູ້ຖືຮຸ້ນ

1. ຂໍ້ມູນກ່ຽວກັບຫຼັກຊັບ

– ທຶນຈົດທະບຽນທັງໝົດ: 6.717.214.788.000 ກີບ
– ຈຳນວນຮຸ້ນຈົດທະບຽນທັງໝົດ: 1.679.303.697 ກີບ

2. ໂຄງສ້າງຜູ້ຖືຮຸ້ນ

ໂຄງສ້າງຜູ້ຖືຮຸ້ນທີ່ຖືຮຸ້ນແຕ່ 5% ຂຶ້ນໄປ ຂອງ ຜ-ຟຟລ ຂໍ້ມູນປິດປຶ້ມບັນຊີຜູ້ຖືຮຸ້ນໃນ ວັນທີ 23/04/2021.


1) ລັດວິສາຫະກິດໄຟຟ້າລາວ ຖືຮຸ້ນຈຳນວນ 856.444.886 ຮຸ້ນ ສັດສ່ວນ 51% ຂອງ ຮຸ້ນ ຜ-ຟຟລ ທັງໝົດ.
2) ບໍລິສັດ ພຶງຊັບທະວີກໍ່ສ້າງ ຂົວ-ທາງ, ເຄຫະສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ ຖືຮຸ້ນຈຳນວນ 403.032.887ຮຸ້ນ ສັດສ່ວນ 24% ຂອງ ຮຸ້ນ ຜ-ຟຟລ ທັງໝົດ.
3) ບໍລິສັດ ຣາຊ-ລາວ ຈຳກັດ ຖືຮຸ້ນຈຳນວນ 94.848.324ຮຸ້ນ ສັດສ່ວນ 5,65% ຂອງ ຮຸ້ນ ຜ-ຟຟລ ທັງໝົດ.
4) ສ່ວນນັກລົງທຶນພາຍໃນ (ລວມທັງພະນັກງານ ຜ-ຟຟລ, ບຸກຄົນ ແລະ ນິຕິບຸກຄົນ) ແລະ ນັກລົງທຶນ ຕ່າງປະເທດ (ບຸກຄົນ ແລະ ນິຕິບຸກຄົນ) ຖືຮຸ້ນລວມກັນຈຳນວນ 324.977.600 ຮຸ້ນ ສັດສ່ວນ 19,35% ຂອງ ຮຸ້ນ ຜ-ຟຟລ ທັງໝົດ.

VII. ໂຄງຮ່າງການຈັດຕັ້ງແລະ ການບໍລິຫານ

ໂຄງສ້າງຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປະກອບດ້ວຍ.

1. ສະພາບໍລິຫານປະກອບດ້ວຍ 11 ທ່ານ (ໃນນີ້ຄະນະກຳອິດສະຫຼະມີ 4 ທ່ານ ແລະ ຜູ້ອຳນວຍການໃຫຍ່ 1 ທ່ານ).
2. ໂຄງຮ່າງການຈັດຕັ້ງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປະກອບດ້ວຍ ຄະນະຜູ້ອຳນວຍການໃຫຍ່ 6 ທ່ານ, ມີ 5 ຝ່າຍ, 18 ພະແນກການ ແລະ 13 ເຂື່ອນ.

ໂຄງຮ່າງການຈັດຕັ້ງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



❖ ຈຳນວນພົນ

ຈຳນວນພົນຂອງ ຜ-ຟຟລ ມີທັງໝົດ **779** ຄົນ, ໃນນີ້ຍິງ **126** ຄົນ; ແບ່ງອອກເປັນ:

ລາຍລະອຽດ	ພະນັກງານຖາວອນ				
ສຳນັກງານໃຫຍ່	114	ຄົນ,	ຍິງ	51	ຄົນ
ເຂື່ອນໄຟຟ້ານ້ຳງື່ມ 1	133	ຄົນ,	ຍິງ	22	ຄົນ
ເຂື່ອນໄຟຟ້ານ້ຳຄານ 2-3	66	ຄົນ,	ຍິງ	7	ຄົນ
ເຂື່ອນໄຟຟ້າເຊເສັດ 1-2	73	ຄົນ,	ຍິງ	14	ຄົນ
ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່	41	ຄົນ,	ຍິງ	2	ຄົນ
ເຂື່ອນໄຟຟ້ານ້ຳເລີກ	61	ຄົນ,	ຍິງ	3	ຄົນ
ເຂື່ອນໄຟຟ້ານ້ຳມັງ3	60	ຄົນ,	ຍິງ	9	ຄົນ
ເຂື່ອນໄຟຟ້າເຊເສັດ3	25	ຄົນ,	ຍິງ	3	ຄົນ
ເຂື່ອນໄຟຟ້ານ້ຳສະນາ	30	ຄົນ,	ຍິງ	3	ຄົນ
ເຂື່ອນໄຟຟ້ານ້ຳຊອງ	24	ຄົນ,	ຍິງ	-	ຄົນ
ເຂື່ອນໄຟຟ້າແຊລະບຳ	35	ຄົນ,	ຍິງ	5	ຄົນ
ເຂື່ອນໄຟຟ້ານ້ຳຈຽນ	35	ຄົນ,	ຍິງ	2	ຄົນ
ພະນັກງານທີ່ເຮັດວຽກຢູ່ IPP ແລະບໍລິສັດລູກ	-	ຄົນ,	ຍິງ	-	ຄົນ
ພະນັກງານປະຈຳໂຄງການ O&M ເຊປຽນ-ເຊນ້ຳນ້ອຍ	76	ຄົນ,	ຍິງ	5	ຄົນ
ລວມທັງໝົດ	**779**	**ຄົນ,**	**ຍິງ**	**126**	**ຄົນ**

ຄະນະສະພາບໍລິຫານແລະ ປະຫວັດຫຍໍ້



ທ່ານ ປອ. ຄຳມະນີ ອິນທິລາດ
ປະທານສະພາບໍລິຫານ

* ວັນ ເດືອນ ປີເກີດ: 05/05/1955
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ອາດີດລັດຖະມົນຕີ ກະຊວງ ພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ: ປະລິນຍາເອກ, ພາກວິຊາ ການພັດທະນາເສດຖະກິດ.
ປະລິນຍາໂທ, ພາກວິຊາ ວິສະວະກຳໄຟຟ້າ ອະດີດສະຫະພາບໂຊຫວຽດ.



ທ່ານ ຈັນທະບູນ ສຸກອາລຸນ
ຮອງປະທານສະພາບໍລິຫານ

* ວັນ ເດືອນ ປີເກີດ: 03/05/1973
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ: ປະລິນຍາຕີ ສາຂາວິສະວະກຳໄຟຟ້າ ຢູ່ມະຫາວິທະຍາໄລແຫ່ງ ຊາດລາວ.
ປະລິນຍາໂທ ສາຂາ ບໍລິຫານທຸລະກິດ, emphasis in Finance, Avila University, Kansas City, ປະເທດສະຫະລັດອາເມລິກາ.



ທ່ານ ປອ. ບຸນທະວີ ສີສຸພັນທອງ
ຮອງປະທານສະພາບໍລິຫານ

* ວັນ ເດືອນ ປີເກີດ: 26/06/1954
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ອາດີດຮອງລັດຖະມົນຕີ ກະຊວງ ແຜນການ ແລະ ການລົງທຶນ.
* ລະດັບການສຶກສາ: ປະລິນຍາເອກ ດ້ານວິຊາເສດຖະສາດ, ປະເທດຝຣັ່ງ(Paris XII)



ທ່ານ ດວງສີ ພາຣຍິກ
ກຳມະການ

* ວັນ ເດືອນ ປີເກີດ: 08/03/1963
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
* ລະດັບການສຶກສາ: ປະລິນຍາໂທ, ພາກວິຊາລະບົບຕາໜ່າງໄຟຟ້າ, ອະດີດສະຫະພາບ ໂຊຫວຽດ.

* ວັນ ເດືອນ ປີເກີດ: 05/05/1961
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ
* ລະດັບການສຶກສາ: ປະລິນຍາໂທ ສາຂາ ການເງິນ ແລະ ສິນເຊື່ອ, ມະຫາວິທະຍາໄລ ເສດຖະສາດບຸນຍັດຊາແດລັດອາແຊບາຍຈັນ, ອາດີດສະຫະພາບໂຊຫວຽດ



ທ່ານ ຄຳເພັງ ທິນນະກອນ
ກຳມະການ

* ວັນ ເດືອນ ປີເກີດ: 01/05/1968
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຫົວໜ້າກົມທຸລະກິດພະລັງງານ, ກະຊວງ ພະລັງງານ ແລະ ບໍ່ແຮ່
* ລະດັບການສຶກສາ: ປະລິນຍາຕີສາຂາ ວິສະວະກຳກົນຈັກ ຢູ່ ມະຫາວິທະຍາໄລແຫ່ງຊາດລາວ



ທ່ານ ສົມພິດ ແກ້ວວິຈິດ
ກຳມະການ

* ວັນ ເດືອນ ປີເກີດ: 10/10/1978
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ປະທານ ສະພາບໍລິຫານ ແລະ ປະທານບໍລິຫານ ບໍລິສັດພິງຊັບ ທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ.
* ລະດັບການສຶກສາ: ວິທະຍາໄລ ບໍລິຫານທຸລະກິດ ແສງສະຫວັນ



ທ່ານ ພິງສະຫວັດ ເສນາພອນ
ກຳມະການ

* ວັນ ເດືອນ ປີເກີດ: 21/07/1972
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຜູ້ອຳນວຍການ ບໍລິສັດ ພິງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານຈຳກັດຜູ້ດຽວ.
* ລະດັບການສຶກສາ: ປະລິນຍາໂທ ສາຂາ ການບໍລິຫານຄຸ້ມຄອງ ທີ່ ມະຫາວິທະຍາໄລ ຊິງຫົວ, ສປ ຈີນ



ທ່ານ ສົມລັດ ເມກອາກາດ
ກຳມະການ

* ວັນ ເດືອນ ປີເກີດ: 29/12/1975
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຫົວໜ້າ ກົມບໍລິການທະນາຄານ, ທະນາຄານແຫ່ງ ສປປລາວ
* ລະດັບການສຶກສາ: ປະລິນຍາໂທ ສາຂາເສດຖະສາດ, ປະເທດອິດສະຕາລີ.



ທ່ານ ຄຳແກ້ວ ວິສີສົມບັດ
ກຳມະການອິດສະຫລະ

* ວັນ ເດືອນ ປີເກີດ: 02/05/1972
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຮອງຫົວໜ້າກົມສົ່ງເສີມການລົງທຶນ ຊີ້ນຳວຽກງານການລົງທຶນຮ່ວມ ລະຫວ່າງ ພາກລັດ ແລະ ເອກະຊົນ, ກະຊວງ ແຜນການ ແລະ ການລົງທຶນ
* ລະດັບການສຶກສາ: ປະລິນຍາໂທ ສາຂາເສດຖະສາດເພື່ອການພັດທະນາ, ທີ່ ມະຫາວິທະຍາໄລ ແຫ່ງຊາດ ອິດສະຕາລີ, ປະເທດ ອິດສະຕາລີ



ທ່ານ ນາງທະວີຈັນ ທ່ຽງເທບວົງສາ
ກຳມະການອິດສະຫລະ

* ວັນ ເດືອນ ປີເກີດ: 05/02/1974
* ສັນຊາດ: ລາວ
* ຕຳແໜ່ງປັດຈຸບັນ: ຄະນະບໍດີ, ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ ມະຫາວິທະຍາໄລ ແຫ່ງຊາດ
* ລະດັບການສຶກສາ: ປະລິນຍາເອກ ສາຂາວິຊາເສດຖະສາດ ຢູ່ ມະຫາວິທະຍາໄລ ໂກເບ, ປະເທດ ຍີ່ປຸ່ນ.



ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ
ກຳມະການອິດສະຫລະ

ຄະນະຜູ້ອຳນວຍການໃຫຍ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່



ທ່ານ ທອງເພັດ ດ້ວງເງິນ
ຮອງຜູ້ອຳນວຍການໃຫຍ່
ສາຍງານບໍລິຫານ



ທ່ານ ວິງສະກຸນ ຍິ່ງຍົງ
ຮອງຜູ້ອຳນວຍການໃຫຍ່
ສາຍງານການຜະລິດ ແລະ
ພັດທະນາທຸລະກິດ



ທ່ານ ນ. ສຸກສັນ ພິງພິລາ
ຮອງຜູ້ອຳນວຍການໃຫຍ່
ສາຍງານແຜນການ



ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່
ສາຍງານການເງິນ



ທ່ານ ກຸນລະພັນ ວົງນາທີ
ຮອງຜູ້ອຳນວຍການໃຫຍ່
ຮັບຜິດຊອບກວດສອບ ແລະ ສັນຍາ

❖ ຊີວະປະຫວັດຂອງຄະນະຜູ້ອຳນວຍການໃຫຍ່



1. ທ່ານ ດວງສີ ພາຣາຍິກ

- ວັນ ເດືອນ ປີເກີດ: 08/03/1963
- ສັນຊາດ: ລາວ

ລະດັບການສຶກສາ, ການຝຶກອົບຮົມແລະ ປະສົບການເຮັດວຽກ

- **ລະດັບວິຊາສະເພາະສູງສຸດ** ປະລິນຍາໂທ, ພາກວິຊາລະບົບຕາໜ່າງໄຟຟ້າ, ອະດີດສະຫະພາບໂຊຫວຽດ
- **ການຝຶກອົບຮົມ:**
  1998 ຝຶກອົບຮົມລະບົບໄຟສາຍດຽວ(SWER) ທີ່ ປະເທດນິວຊີແລນ
  2001 ຝຶກອົບຮົມວຽກງານ ບັນຊີ ນະຄອນຫຼວງວຽງຈັນ
  2002 ລະບົບພະລັງງານໄຟຟ້າ, ປະເທດນິວຊີແລນ
  2006 ຝຶກອົບຮົມວຽກງານຜູ້ບໍລິຫານ ທີ່ ປະເທດໄທ
  2007 ຝຶກອົບຮົມວຽກງານ Power Quality ທີ່ ປະເທດມາເລເຊຍ
  2008 ຝຶກອົບຮົມວຽກງານ ການຈຳໜ່າຍພະລັງງານ (Power Distribution) ທີ່ ສະວີເດັນ
  2009 ຝຶກອົບຮົມວຽກງານ ປະຫຍັດໄຟຟ້າ (DSM) ທີ່ ຟີລິປິນ
  2014 ທິດສະດີການປົກຄອງລະບົບເລັ່ງລັດ 05 ເດືອນ, ສະຖາບັນການເມືອງ ການປົກຄອງແຫ່ງຊາດ
- **ປະສົບການໃນການເຮັດວຽກ**
  1985-1988 ຮອງຫົວໜ້າໂຄງການສຳຫຼວດໄຟຟ້າ, ກອງສຳຫຼວດໄຟຟ້ານ້ຳຕົກ, ກະຊວງອຸດສາຫະກຳ ຫັດຖະກຳ ແລະ ປ່າໄມ້ໂຄງການສຳຫຼວດໄຟຟ້າຮັບໃຊ້ແຂວງໄຊຍະບູລີ , ຊຽງຂວາງ,ຈຳປາສັກ, ສາລະວັນ, ອັດຕະປື ແລະ ເຊກອງ.
  1989-1991 ຮອງຫົວໜ້າກອງກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ, ປະຈຳແຂວງຄຳມ່ວນ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ.
  1992-1994 ຮອງຫົວໜ້າກອງກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ, ປະຈຳແຂວງສາລະວັນ, ກະຊວງອຸດສາຫະກຳ ແລະ ຫັດຖະກຳ.
  1995-2006 ຫົວໜ້າສາຂາ ລັດວິສາຫະກິດໄຟຟ້າລາວ ແຂວງບໍລິຄຳໄຊ.
  2006-2011 ຫົວໜ້າຝ່າຍຈຳໜ່າຍ, ລັດວິສາຫະກິດໄຟຟ້າລາວ.
  2012-2020 ຮອງຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ.
  2020-ປັດຈຸບັນ ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



2. ທ່ານ ທອງເພັດ ດ້ວງເງິນ

- ວັນ ເດືອນ ປີເກີດ: 23/03/1962
- ສັນຊາດ: ລາວ

ລະດັບການສຶກສາ ການຝຶກອົບຮົມ ແລະ ປະສົບການເຮັດວຽກ

- **ລະດັບວິຊາສະເພາະສູງສຸດ** ປະລິນຍາໂທສາຂາວິຊາ hydrotechnicconstruction and hydro-electric Power plant ຈາກໂຮງຮຽນMentionne institue.

-ການຝຶກອົບຮົມ:

04/09-03/11/1989	Development Programme for Hydropower Power Staff by Swed Power
05-30/6/1989	Hydro operation for Xeset Project ຈັດໂດຍການໄຟຟ້າຝ່າຍຜະລິດແຫ່ງປະເທດໄທ
15/5/1995	Hydroelectric Project Cost Estimating Course Acres International Limited, CANADA
08/07-02/08/1996	Environment impact assessment and review ຢູ່Asian institute of technology,ປະເທດໄທ
15/05-02/06/1998	Resettlement Policy and Practice Seminar by Asian Development Bank
18-23/10/1999	Environmental Assessment Process for Environmental ManagementScience, Technology and Environment Agency Department of Environment (DOE)
19/2-20-4/2001	ທິດສະດີການເມືອງ ແລະ ການປົກຄອງຊຸດທີ 1 ທີ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ
08-12/5/2000	Social impact Assessment and Public Involvement atScience, Technology and Environment Agency Department of Environment (DOE)
26-27/06/2000	Workshop on EIA for the Sustainable Development of Hydro Power by Asian Development Bank
26-30/06/2000	EIA Methodology-Environment-Econimics-Cumulative Impacts-Monitoring-Environmental Management Unit at Science, Technology and Environment Agency Department of Environment (DOE)
26-29/04/2005	Wind Power and Biomass Generation for Rural Electrification ທີ່ປະເທດໄທ.
08-10/03/2006	The Completion on workshop on sustainable growthin ASEAN countries byAssociation for overseas technical scholarship (AOTS)ປະເທດຍີ່ປຸ່ນ.

ປະສົບການໃນການເຮັດວຽກ

1987-1990	ວິຊາການ/ອາຈານສອນ ຢູ່ສູນຝຶກອົບຮົມລັດວິສາຫະກິດໄຟຟ້າລາວ
1990-1996	ວິຊາການສຳຫຼວດເຂື່ອນ ຢູ່ຫ້ອງການໂຄງການສຳຫຼວດເຂື່ອນໄຟຟ້ານ້ຳເລິກ , ເຂື່ອນໄຟຟ້ານ້ຳຊອງ, ເຂື່ອນໄຟຟ້ານ້ຳມັງ3,ເຂື່ອນໄຟຟ້ານ້ຳຫີນບູນ ແລະ ເຂື່ອນໄຟຟ້າຫ້ວຍເຫາະ
1997-2000	ຫົວໜ້າຫ້ອງການຮັບຜິດຊອບເລື່ອງສິ່ງແວດລ້ອມ ແລະ ສັງຄົມ ເຂື່ອນໄຟຟ້ານ້ຳເລິກ
2001-2005	ຫົວໜ້າຫ້ອງການຮັບຜິດຊອບສິ່ງແວດລ້ອມ ແລະ ສັງຄົມ ເຂື່ອນໄຟຟ້ານ້ຳມັງ3
1996-2006	ຫົວໜ້າຫ້ອງການສິ່ງແວດລ້ອມ ຟຟລ
2006-2012	ຫົວໜ້າຝ່າຍເຕັກນິກ ຟຟລ
2012-07/2016	ຮອງຜູ້ອຳນວຍການໃຫຍ່ ຟຟລ ຊີ້ນຳຝ່າຍກໍ່ສ້າງເຂື່ອນ, ສາຍສົ່ງ ແລະ ສະຖານີ ຟຟລ
08/07/2016-2020	ຮອງຜູ້ອຳນວຍການໃຫຍ່ ຟຟລ ແລະ ຜ-ຟຟລ ຮັບຜິດຊອບສາຍງານພັດທະນາທຸ ລະກິດ
2017-ປັດຈຸບັນ	ກຳມະການສະພາບໍລິຫານບໍລິສັດ ໄຟຟ້າເຫີນຫີນບູນ ຈຳກັດ
2018-ປັດຈຸບັນ	ກຳມະການສະພາບໍລິຫານບໍລິສັດ ໄຟຟ້າໄຊຍະບູລີ ຈຳກັດ
06/2018-ປັດຈຸບັນ	ກຳມະການສະພາບໍລິຫານບໍລິສັດ ໄຟຟ້າດອນສະໂຮງ ຈຳກັດ
2020-ປັດຈຸບັນ	ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



3. ທ່ານ ວິງສະກຸນ ຍິ່ງຍິງ

- ວັນ ເດືອນ ປີເກີດ: 05/10/1964
- ສັນຊາດ: ລາວ

ລະດັບການສຶກສາ ການຝຶກອົບຮົມແລະ ປະສົບການເຮັດວຽກ

- **ລະດັບວິຊາສະເພາະສູງສຸດ** ປະລິນຍາໂທ ສາຂາວິຊາ ກົງຫັນພະລັງນ້ຳ ແລະ ລະບົບບັງຄັບ, ມະຫາວິທະຍາໄລກໍ່ສ້າງເຄື່ອງຈັກ, ອະດີດສະຫະພາບໂຊຫວຽດ
- **ການຝຶກອົບຮົມ:**

1991-1993	ວິຊາສ້ອມແປງ ແລະ ບຳລຸງຮັກສາກົງຫັນພະລັງນ້ຳທີ່ໂຮງຮຽນມະຫາວິທະຍາໄລກໍ່ສ້າງເຄື່ອງຈັກ, ອະດີດສະຫະພາບໂຊຫວຽດ
1995	ວິຊາສ້ອມແປງປ້ຳນ້ຳ, ປ້ຳລົມ, ວາວປະຕູນ້ຳ ແລະ ທໍ່, ວິຊາປັບຄວາມທ່ຽງຂອງເພົາເຄື່ອງໄຟຟ້າ ແລະ ເຄື່ອງຈັກປັ່ນໄຟ, ວິຊາລູກຫວ່ານ ແລະ ລະບົບລໍ່ລື່ນ (ເຄື່ອງຈັກ) ທີ່ ມະຫາວິທະຍາໄລ IKATAM, ປະເທດມາເລເຊຍ
2001	ການຈັດການເສດຖະກິດຕະຫຼາດ ຂອງສະຖາບັນ Price WaterHouseCoppers
2001	ການຈັດການບັນຊີ ຂອງສະຖາບັນ ManagingHydropower
2007	Small Scale and Clean Energy Power (Solar and Wine Power) ທີ່ TEPCO JAPAN

ປະສົບການໃນການເຮັດວຽກ

1993-1999	ຫົວໜ້າພະແນກກົນຈັກ, ພະແນກກໍ່ສ້າງ ແລະ ຫົວໜ້າພະແນກຈັດຕັ້ງບໍລິຫານ ເຂື່ອນໄຟຟ້າແຊລະບຳ, ລັດວິສາຫະກິດໄຟຟ້າລາວ
1999-2000	ຫົວໜ້າເຂື່ອນໄຟຟ້າແຊລະບຳ
2003-2010	ຮອງຫົວໜ້າເຂື່ອນໄຟຟ້າເຊເສັດ 1-2
2010-2011	ຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່
2013-2017	ຮອງຫົວໜ້າຝ່າຍກໍ່ສ້າງເຂື່ອນ, ທັງເປັນຫົວໜ້າໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ 3.
2011-2020	ຮອງຫົວໜ້າຝ່າຍກໍ່ສ້າງເຂື່ອນ ແລະ ຄຸ້ມຄອງໂຄງການຮ່ວມທຶນ
2020-ປັດຈຸບັນ	ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



4. ທ່ານ ນາງ ສຸກສັນ ພົງພິລາ

- ວັນ ເດືອນ ປີເກີດ: 04/12/1965
- ສັນຊາດ: ລາວ

ລະດັບການສຶກສາ, ການຝຶກອົບຮົມແລະ ປະສົບການເຮັດວຽກ

- **ລະດັບວິຊາສະເພາະສູງສຸດ** International Master of Business Administration at National Academy of Politics and Public Administration (NAPPA)

ການຝຶກອົບຮົມ:

1991	ການໂທລະຄົມມະນາຄົມ ຈັດໂດຍ TATA ConsutingEngineers, ນະຄອນຫຼວງວຽງຈັນ
1992	ອຸປະກອນໄຟຟ້າ ແລະ ອຸດສາຫະກຳທີ່ Indian Institute for Foremen Training, India
1996	ພື້ນຖານການບໍລິຫານ ຈັດໂດຍ TenagaNasionalBerhal, IKATAN, Malaysia
1998	ພາສາອັງກິດສຳລັບຊາວໜຸ່ມລາວ ທີ່ Regional Language Centre,Language Teaching Institute Singapore, Southeast Asian Ministers of Education Organization, ປະເທດສິງກະໂປ.
2003	ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ສຳລັບໂຄງການພັດທະນາໄຟຟ້າ, ບໍ່ແຮ່ ແລະ ທາງຫຼວງໃນ ສປປ ລາວ ຈັດໂດຍ ອົງການວິທະຍາສາດເຕັກໂນໂລຊີ ແລະ ສິ່ງ ແວດລ້ອມ ແລະ ໄດ້ຮັບການສະໜັບສະໜູນຈາກອົງການຊີດາ, ປະເທດສະວີເດັນ.
2006	ການພັດທະນາພະລັງງານໄຟຟ້າຂະໜາດນ້ອຍ ທີ່ Indian Instituteof Technology, Alternate Hydro Energy Centre, Roorkee, ປະເທດອິນ ເດຍ.
2011	BCP-2 ການເງິນທຸລະກິດກັບຕະຫຼາດທຶນສຳລັບຜູ້ບໍລິຫານມືອາຊີບ (Business Finance in Capital Market for Professional Executive ທີ່ ວິທະຍາໄລ ບຸດວິເສດ).
2011	ຂະບວນການປະເມີນກະທົບຕໍ່ສັງຄົມ ທີ່ International Centre for Hydropower, ປະເທດນໍເວ
2013	HAPUA Working Group No. 5 – Human Resource workshop on Leadership Development Model, Leadership Assessment and Talent Development, ທີ່ National Transmission Corporation, ປະເທດ ຟີລິບປິນ.
2015	Organizational and HR Flexibility Workshop, ຈັດໂດຍ HAPUA Working Group No. 5 on Human Resource ທີ່ ປະເທດມາເລເຊຍ.
2017	ຄວາມເປັນຜູ້ນຳອາຊຽນຂອງລັດຖະບານ (ASEAN Government Leadership Program), ທີ່ GE Crotonville, ປະເທດ ສະຫະລັດອາເມລິກາ.

ປະສົບການໃນການເຮັດວຽກ

1987-1994	ພະນັກງານສັງກັດ ລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານສື່ສານ ລະບົບສິ່ງ-ສະຖານີ.
1994-1997	ພະນັກງານສັງກັດ ລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານຫ້ອງການຜູ້ອຳນວຍການໃຫຍ່.
1997-1999	ຫົວໜ້າຫ້ອງການຝ່າຍບໍລິການ, ລັດວິສາຫະກິດໄຟຟ້າລາວ.
1999-2002	ຜູ້ຊ່ວຍ ຫົວໜ້າຫ້ອງການຜູ້ອຳນວຍການໃຫຍ່, ລັດວິສາຫະກິດໄຟຟ້າລາວ
2002-2006	ພະນັກງານລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານສິ່ງແວດລ້ອມ-ສັງຄົມ
2006-2011	ພະນັກງານສັງກັດ ລັດວິສາຫະກິດໄຟຟ້າລາວ ຮັບຜິດຊອບວຽກງານຫົວໜ້າຫ້ອງການບໍລິຫານ
2011-2016	ຜູ້ອຳນວຍການຝ່າຍ ບໍລິຫານງານສະໜັບສະໜຸນອົງກອນ
2016-2020	ຜູ້ຊ່ວຍຜູ້ອຳນວຍການໃຫຍ່/ຜູ້ອຳນວຍການຝ່າຍແຜນການ
2020-ປັດຈຸບັນ	ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



5. ທ່ານ ອັນແສງ ອັນນະວົງ

- ວັນ ເດືອນ ປີເກີດ: 30/03/1974
- ສັນຊາດ: ລາວ

ລະດັບການສຶກສາ, ການຝຶກອົບຮົມແລະ ປະສົບການເຮັດວຽກ

- **ລະດັບວິຊາສະເພາະສູງສຸດ** ປະລິນຍາໂທ ສາຂາການບັນຊີ ຢູ່ ມະຫາວິທະຍາໄລແຫ່ງຊາດ
- **ການຝຶກອົບຮົມ:**

1999	ປະກາດສະນິຍະບັດເຕັກນິກ, ໂຮງຮຽນການຊ່າງປາກ່າສັກ
2002	ທີ່ປຶກສາບັນຊີ LCPA, ອົງການຈັດຕັ້ງວິຊາຊີບການບັນຊີລາວ
2008	ປະລິນຍາຕີການບໍລິຫານການເງິນ-ການທະນາຄານ, ວິທະຍາໄລລັດຕະນະ ແລະ ບໍລິຫານທຸລະກິດ
2010	ທິດສະດີການເມືອງ ແລະ ການປົກຄອງ ໄລຍະສັ້ນ 45 ວັນ
2013	ປະລິນຍາໂທສາຂາບັນຊີ, ມະຫາວິທະຍາໄລແຫ່ງຊາດ
2014	ກຳມະການສະພາບໍລິຫານບໍລິສັດ (Director Certification Program), ສະຖາບັນ IOD ປະເທດໄທ
2019	ສະຖາບັນວິທະຍາກອນຕະຫຼາດທຶນ (CMA-GMS) Capital Market Academy
2022	ເຂົ້າຝຶກອົບຮົມຫົວຂໍ້ Company Reporting Program (CRP Online) ບັນຍາຍໂດຍ ສະຖາບັນ IOD ບາງກອກ, ປະເທດໄທ.

ປະສົບການເຮັດວຽກ

1993-1997	ພະນັກງານຊ່ວຍວຽກອາຈານສອນ ທີ່ ໂຮງຮຽນວິຊາຊີບ N.E.C
1997-2010	ຮອງຫົວໜ້າຫ້ອງການບັນຊີ, ລັດວິສາຫະກິດໄຟຟ້າລາວ
2010-2016	ວ່າການຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
2016-2020	ຜູ້ອຳນວຍການຝ່າຍການເງິນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
2020-ປັດຈຸບັນ	ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ



6. ທ່ານ ກຸນລະພັນ ວິງນາທີ

- ວັນ ເດືອນ ປີເກີດ: 28/08/1966
- ສັນຊາດ: ລາວ

ລະດັບການສຶກສາ ການຝຶກອົບຮົມແລະ ປະສົບການເຮັດວຽກ

- **ລະດັບວິຊາສະເພາະສູງສຸດ** ປະລິນຍາເອກ ສາຂາເສດຖະສາດ, ທີ່ Moscow State University Of Economics, Statistics and Informatics, ສະຫາພັນຣັດເຊຍ ປີ 2000

ປະສົບການເຮັດວຽກ:

2001-2008 ຮັບຜິດຊອບຝ່າຍຝຶກບຸກຄະລາກອນ, ພະແນກຈັດຕັ້ງ, ບໍລິສັດ Entreprise des Postes et Telecommunications Lao (EPTL).

2001-2008 ສ້າງຕັ້ງ ແລະ ບໍລິຫານ ດຳເນີນທຸລະກິດດ້ານການທ່ອງທ່ຽວ ແລະ ການໂຮງແຮມພາຍໃນ ແລະ ຕ່າງປະເທດ.

2009-2020 ຮອງຜູ້ອຳນວຍການ ຮັບຜິດຊອບຝ່າຍການຄຸ້ມຄອງໂຄງການ , ບໍລິສັດ ພົງຊັບທະວີ ກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດຜູ້ດຽວ

2020-ປັດຈຸບັນ ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

VIII. ຄະນະກຳມະການຕ່າງໆ

ເພື່ອເຮັດໃຫ້ວຽກງານ ຂອງ ບໍລິສັດມີຄວາມຮັບປະກັນທາງດ້ານຄຸນນະພາບ ແລະ ມີລະບຽບແບບແຜນຕາມກົດໝາຍກົດລະບຽບ ທີ່ກ່ຽວຂ້ອງ; ສະພາບໍລິຫານ ຜ-ຟຟລ ຈຶ່ງໄດ້ແຕ່ງຕັ້ງຄະນະກຳມະການຕ່າງໆຂຶ້ນ ປະກອບມີ ຄະນະກຳມະການ ຂອງ ສະພາບໍລິຫານ ແລະ ຄະນະກຳມະການ ຂອງ ຄະນະອຳນວຍການໃຫຍ່ ເພື່ອຄົ້ນຄວ້າ ພິຈາລະນາວຽກງານ, ລະອຽດດັ່ງລຸ່ມນີ້:

1. ຄະນະກຳມະການຂອງສະພາບໍລິຫານ

ຄະນະກຳມະການຂອງສະພາບໍລິຫານ ຜ-ຟຟລ ປະກອບດ້ວຍ 5 ຄະນະກຳມະການ ເຊິ່ງໃນແຕ່ລະ ຄະນະກຳມະການ ປະກອບດ້ວຍສະມາຊິກສະພາບໍລິຫານ ຕາມລາຍລະອຽດດັ່ງນີ້:

ຄະນະກຳມະການກວດສອບ

1. ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫລະ	ເປັນປະທານ
2. ທ່ານ ຄຳເພັງ ທິນນະກອນ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3. ທ່ານ ຄຳແກ້ວ ວິສີສົມບັດ	ກຳມະການອິດສະຫລະ	ເປັນກຳມະການ
4. ທ່ານ ພົງສະຫັວດ ເສນາພອນ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄຸ້ມຄອງຄວາມສ່ຽງ

1. ທ່ານ ຄຳແກ້ວ ວິສີສົມບັດ	ກຳມະການອິດສະຫລະ	ເປັນປະທານ
2. ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ	ເປັນຮອງປະທານ
3. ທ່ານ ສົມລັດ ເມກອາກາດ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການກຳນົດຄ່າຕອບແທນ

1. ທ່ານ ສົມພິດ ແກ້ວວິຈິດ	ກຳມະການສະພາບໍລິຫານ	ເປັນປະທານ
2. ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ	ກຳມະການອິດສະຫລະ	ເປັນຮອງປະທານ
3. ທ່ານ ດວງສີ ພາຣາຍົກ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການຄັດເລືອກ

1. ທ່ານ ຈັນທະບູນ ສຸກອາລຸນ	ຮອງປະທານສະພາບໍລິຫານ	ເປັນປະທານ
2. ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ	ກຳມະການອິດສະຫລະ	ເປັນຮອງປະທານ
3. ທ່ານ ດວງສີ ພາຣາຍົກ	ກຳມະການສະພາບໍລິຫານ	ເປັນກຳມະການ

ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

1. ທ່ານ ຄຳເພັງ ທິນນະກອນ	ກຳມະການສະພາບໍລິຫານ	ເປັນປະທານ
2. ທ່ານ ປອ. ບຸນທະວີ ສີສຸພັນທອງ	ຮອງປະທານສະພາບໍລິຫານ/ ກຳມະການອິດສະຫຼະ	ເປັນຮອງປະທານ
3. ທ່ານ ນາງ ທະວີຈັນທ່ຽງ ເທບວົງສາ	ກຳມະການອິດສະຫລະ	ເປັນກຳມະການ

1.1 ກອງເລຂາສະພາບໍລິຫານ

ການດຳເນີນງານພາຍໃນປີ 2021 ຂອງກອງສະພາບໍລິຫານ ໄດ້ມີການຄົ້ນຄວ້າພິຈາລະນາ, ເຊິ່ງໄດ້ເປີດກອງປະຊຸມຂຶ້ນທັງໝົດ 6 ຄັ້ງ ກອງປະຊຸມສະພາບໍລິຫານສະໄໝສາມັນ 4 ຄັ້ງ ແລະ ສະໄໝວິສາມັນທັງໝົດ 2 ຄັ້ງ ມີລາຍລະອຽດທີ່ສຳຄັນ ດັ່ງລຸ່ມນີ້:

- ພິຈາລະນາອະນຸມັດໃນການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ.
- ພິຈາລະນາບົດລາຍງານການດຳເນີນທຸລະກິດປະຈຳປີ 2020.

- ການແຕ່ງຕັ້ງຮອງປະທານສະພາບໍລິຫານເພີ່ມ, ກຳມະການສະພາບໍລິຫານຜູ້ໃໝ່ ແລະ ການກຳນົດອາຍຸການ ຂອງບັນດາກຳມະການສະພາບໍລິຫານ ບໍລິສັດ; ການແຕ່ງຕັ້ງຮອງອຳນວຍການໃຫຍ່ເພີ່ມຜູ້ໃຫມ່.
- ການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.
- ແຜນການດຳເນີນທຸລະກິດ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ປະຈຳປີ 2022.
- ພິຈາລະນາເຊັນ MOU ແລະ ເຊັນສັນຍາຮ່ວມຮຸ້ນກັບບັນດາ IPPs ທີ່ມີທ່າແຮງ ຂາຍພະລັງງານໄຟຟ້າໄປ ສສ ຫວຽດນາມ.
- ແຜນການນຳໃຊ້ເງິນກູ້ຈາກທະນາຄານ ຫວຽດຕິນ-ລາວ ເພື່ອມາສຳຮອງແກ້ໄຂສະພາບຄ່ອງຂອງ ບໍລິສັດ.
- ວິໄສທັດ ແລະ ພາລະກິດຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ປັບປຸງ).
- ພິຈາລະນາການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ຄັ້ງທີ2 ປີ 2021.
- ອະນຸມັດມັດລົງນາມ ມະຕິວຽນເຊັນເປັນເອກະສັນ ຂອງ ສະພາບໍລິຫານ ຜ-ຟຟລ ເພື່ອເຫັນດີ ໃຫ້ ບໍລິສັດ ເທີນຫິນບູນ ພາວເວີ ຈຳກັດ ປ່ຽນແປງຜູ້ສະໜັບສະໜູນ(Sponsor) ຂອງຜູ້ຖືຮຸ້ນ Nordic Hydropower AB.

❖ **ການເຂົ້າຮ່ວມກອງປະຊຸມຂອງ ກຳມະການສະພາບໍລິຫານ**

ຊື່ ແລະ ນາມສະກຸນ	ຕຳແໜ່ງ	ຮ່ວມ/ຂາດປະຊຸມ	ໝາຍເຫດ
ທ່ານ ປອ. ຄຳມະນີ ອິນທິລາດ	ປະທານ ສະພາບໍລິຫານ	6/6	
ທ່ານ ຈັນທະບຸນ ສຸກອາລຸນ	ຮອງປະທານ ສະພາບໍລິຫານ	4/6	ຂາດມີເຫດຜົນ
ທ່ານ ປອ. ບຸນທະວີ ສີສຸພັນທອງ	ຮອງປະທານ ສະພາບໍລິຫານ	4/4	ເນື່ອງຈາກໄດ້ຖືກແຕ່ງຕັ້ງເຂົ້າມາຮັບຕຳແໜ່ງ ສະພາບໍລິຫານໃໝ່ ຕາມບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະບັບລົງວັນທີ 21/04/2021
ທ່ານ ດວງສີ ພາຣາຍິກ	ກຳມະການ ສະພາບໍລິຫານ ຜູ້ອຳນວຍການ ໃຫຍ່	6/6	
ທ່ານ ຄຳເພັງ ທິນນະກອນ	ກຳມະການ ສະພາບໍລິຫານ	5/6	ຂາດມີເຫດຜົນ
ທ່ານ ໂກມົນຈັນ ເພັດອາສາ	ກຳມະການ ສະພາບໍລິຫານ	2/2	ເນື່ອງຈາກໄດ້ພົ້ນຕຳແໜ່ງໄປຮັບໜ້າທີ່ໃໝ່ ຕາມ ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະບັບລົງວັນທີ 21/04/2021
ທ່ານ ສົມພິດ ແກ້ວວິຈິດ	ກຳມະການ ສະພາບໍລິຫານ	6/6	
ທ່ານ ຄຳແກ້ວ ວິສິສົມບັດ	ກຳມະການ ອິດສະຫລະ	6/6	
ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ	ກຳມະການ ອິດສະຫລະ	6/6	
ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ	ກຳມະການ ອິດສະຫລະ	6/6	
ທ່ານ ສົມລັດ ເມກອາກາດ	ກຳມະການ ສະພາບໍລິຫານ	4/4	ເນື່ອງຈາກໄດ້ຖືກແຕ່ງຕັ້ງເຂົ້າມາຮັບຕຳແໜ່ງ ສະພາບໍລິຫານໃໝ່ ຕາມບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະບັບລົງວັນທີ

			21/04/2021
ທ່ານ ພິງສະຫວັດ ເສນາພອນ	ກຳມະການ ສະພາບໍລິຫານ	3/4	ເນື່ອງຈາກໄດ້ຖືກແຕ່ງຕັ້ງເຂົ້າມາຮັບຕຳແໜ່ງ ສະພາບໍລິຫານໃໝ່ ຕາມບົດບັນທຶກກອງປະຊຸມ ສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະບັບລົງວັນທີ 21/04/2021 ຂາດມີເຫດຜົນ

1.2 ຄະນະກຳມະການກວດສອບ

ຜ່ານການດຳເນີນງານໃນປີ 20201 ຄະນະກຳມະການກວດສອບໄດ້ປະຕິບັດວຽກງານ ແລະ ເປີດກອງປະຊຸມທັງໝົດ 4 ຄັ້ງ ເຊິ່ງມີລາຍລະອຽດດັ່ງນີ້:

- ທົບທວນຄວາມຖືກຕ້ອງ, ຄົບຖ້ວນ, ຄວາມໜ້າເຊື່ອຖື ຂອງບົດລາຍງານການເງິນ ປະຈຳໄຕມາດ, ປະຈຳ 6 ເດືອນ ແລະ ປະຈຳປີ ຂອງບໍລິສັດ ແລະ ບໍລິສັດລູກ ວ່າຖືກຕ້ອງສອດຄ່ອງຕາມຫຼັກການບັນຊີ ຂອງບໍລິສັດ. ໂດຍມີການສອບຖາມປະເດັນທີ່ເປັນສາລະສຳຄັນ ແລະ ໄດ້ຮັບຄຳເຫັນຈາກຜູ້ກວດສອບບັນຊີພາຍນອກ. ຈົນຫມັ້ນໃຈວ່າ ການສ້າງບົດລາຍງານທາງການເງິນ ເປັນໄປຕາມຂໍ້ກຳນົດຂອງກົດໝາຍການບັນຊີ ແລະ ມາດຕະຖານການລາຍງານຂອງ ບົດລາຍງານທາງການເງິນເພື່ອຈະນຳສະເໜີຕໍ່ສະພາບໍລິຫານ.
- ທົບທວນ ແລະ ປະເມີນຄວາມພໍພຽງຂອງລະບົບການຄວບຄຸມພາຍໃນບໍລິສັດເພື່ອໃຫ້ສອດຄ້ອງກັບການດຳເນີນງານຂອງບໍລິສັດໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ບັນລຸເປົ້າໝາຍຕາມທີ່ກຳນົດໄວ້. ໂດຍຄະນະກຳມະການກວດສອບໄດ້ສະເໜີຕໍ່ສະພາບໍລິຫານໃນການຍົກສູງພະແນກກວດສອບພາຍໃນ ໃຫ້ເປັນຝ່າຍກວດສອບພາຍໃນ ແລະ ສະເໜີໃຫ້ສ້າງລະບຽບກ່ຽວກັບຂອບເຂດ, ສິດ ແລະ ອຳນາດ ໃຫ້ການດຳເນີນງານຂອງຜູ້ບໍລິຫານໃນແຕ່ລະຂັ້ນ.
- ທົບທວນການປະຕິບັດຕາມກົດຫມາຍວ່າດ້ວຍຫລັກຊັບ ແລະ ຂໍ້ກຳນົດຂອງສຳນັກງານຄຸ້ມຄ້ອງຫລັກຊັບ (ສຄຄຊ), ຕະຫລາດຫລັກຊັບລາວ (ຕລຊ) ແລະ ກົດຫມາຍທີ່ກ່ຽວຂ້ອງກັບການດຳເນີນທຸລະກິດ ຂອງບໍລິສັດ.
- ທົບທວນນະໂຍບາຍບໍລິຫານຄຸ້ມຄອງຄວາມສ່ຽງ ແລະ ແນວທາງການບໍລິຫານຄວາມສ່ຽງກັບໂດຍການປະຊຸມຮ່ວມກັບຜູ້ອຳນວຍການ, ຄະນະຝ່າຍ ແລະ ຄະນະພະແນກ.

1.3 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຜ່ານການດຳເນີນງານໃນປີ 2021 ຄະນະກຳມະການຄຸ້ມຄອງຄວາມສ່ຽງໄດ້ເປີດກອງປະຊຸມຂຶ້ນ 3 ຄັ້ງ ໂດຍເປີດກອງປະຊຸມສາມັນ 2 ຄັ້ງ ແລະ ວິສາມັນ 1 ຄັ້ງ ເຊິ່ງໃນກອງປະຊຸມໄດ້ມີການພິຈາລະນາດັ່ງນີ້:

- ຄວາມຄືບໜ້າການຂາດສະພາບຄ່ອງທາງດ້ານກະແສເງິນສົດ ຂອງ ຜ-ຟຟລ
- ຄວາມສ່ຽງກ່ຽວກັບການລະດົມທຶນອອກຮຸ້ນກູ້ ຫຼື ແຫຼ່ງເງິນອື່ນໆ ໃນກໍລະນີບໍ່ເປັນໄປຕາມແຜນການ
- ຄວາມສ່ຽງການປະຕິບັດເງື່ອນໄຂທາງດ້ານການເງິນ (Financial Covernant)ກ່ຽວກັບສັນຍາເງິນກູ້ ກັບ ທະນາຄານ ລາວ-ຝຣັ່ງ (BFL) ບໍ່ເປັນໄປຕາມແຜນປີ 2021.
- ຄວາມສ່ຽງກ່ຽວກັບການໂອນເຂື່ອນລ່າຊ້າ ຈາກ ຟຟລ ມາໃຫ້ ຜ-ຟຟລ
- ຄວາມຄືບໜ້າຂອງການລະດົມທຶນຜ່ານການອອກຈຳໜ່າຍຮຸ້ນກູ້ (Bond) ຄັ້ງທີ 1/2021 ແລະ ການຊອກຫາແຫຼ່ງທຶນເພີ່ມເຕີ່ມ ຈາກທະນາຄານພາຍໃນປະເທດ.
- ຜົນສຳເລັດການລະດົມທຶນຜ່ານການອອກຮຸ້ນກູ້ (Bond) ແລະ ການນຳໃຊ້ເງິນທີ່ໄດ້ຈາກການອອກຮຸ້ນກູ້ ຂອງ ຜ-ຟຟລ
- ລາຍງານ ໜີ້ຕ້ອງຮັບ-ຕ້ອງສົ່ງ ແລະ ວິທີການແກ້ໄຂ ຂອງ ຜ-ຟຟລ ຮອດວັນທີ 01/11/2021
- ຄວາມສ່ຽງກ່ຽວກັບການຜິດເງື່ອນໄຂເງິນກູ້ ຂອງທະນາຄານ ລາວ-ຝຣັ່ງ (BFL)
- ຄວາມຄືບໜ້າການໂອນຮຸ້ນ ແລະ ໂຄງການຈາກ ຟຟລ ຮອດເດືອນ 11/2021
- ຄວາມສ່ຽງການຜະລິດອາດ ບໍ່ໄດ້ຕາມແຜນການໃນທ້າຍປີ 2021

- ການຕໍ່ສັນຍາເງິນກູ້ຈາກ ທະນາຄານ ຫວຽດຕິນ ທີ່ຈະໝົດສັນຍາ ແມ່ນ ຜ-ຟຟລ ໄດ້ຕໍ່ສັນຍາເງິນກູ້ກັບ ທະນາຄານ ຫວຽດຕິນ ເພື່ອເປັນຄັງເງິນສຳຮອງສຸກເສີນຂອງ ຜ-ຟຟລ ໃນກໍລະນີ ຟຟລ ບໍ່ຊຳລະຄ່າ ກະແສໄຟຟ້າຢ່າງຕໍ່ເນື່ອງໃຫ້ ຜ-ຟຟລ.

1.4 ຄະນະກຳມະການກຳນົດຄ່າຕອບແທນ

ຜ່ານການດຳເນີນງານໃນປີ 2021 ຄະນະກຳມະການກຳນົດຄ່າຕອບແທນໄດ້ເອົາໃຈໃສ່ໃນການຄົ້ນຄວ້າ ພິຈາລະນາຮັບເພື່ອຮັບຮອງເອົາລະບຽບນະໂຍບາຍຕ່າງໆ ເພື່ອແນ່ໃສ່ຜົນປະໂຫຍດຂອງ ຜ-ຟຟລ ແລະ ຜູ້ຖືຮຸ້ນຈັດ, ເຊິ່ງໄດ້ຈັດກອງປະຊຸມຂຶ້ນ 1 ຄັ້ງ: ໃນວັນທີ 2ກໍລະກົດ2021ໄດ້ມີການ ຄົ້ນຄວ້າພິຈາລະນາບັນຫາ ດັ່ງນີ້:

- ລາຍງານງານຜົນການປະຕິບັດວຽກງານຂອງຄະນະກຳມະການກຳນົດຄ່າຕອບແທນ.
- ສະເໜີປັບປຸງພາລະບົດບາດຂອງຄະນະກຳມະການກຳນົດຄ່າຕອບແທນ.
- ສະເໜີແຕ່ງຕັ້ງກອງເລຂາຂອງຄະນະກຳມະການ ກຳນົດຄ່າຕອບແທນຜູ້ໃໝ່ເພື່ອປ່ຽນແທນຜູ້ເກົ່າ.

1.5 ຄະນະກຳມະການຄັດເລືອກ

ຜ່ານການດຳເນີນງານໃນປີ 20 21 ຄະນະກຳມະການຄັດເລືອກໄດ້ຄົ້ນຄວ້າພິຈາລະນາ, ເຊິ່ງໄດ້ຈັດກອງປະຊຸມ 1 ຄັ້ງ:ໃນວັນທີ 26 ກຸມພາ 2021 ກອງປະຊຸມດັ່ງກ່າວໄດ້ແບ່ງເປັນ 2 ຫົວຂໍ້ ເພື່ອພິຈາລະນາບັນຫາ ດັ່ງນີ້:

- ພິຈາລະນາຕາມການສະເໜີລາຍຊື່ ຂອງ ກະຊວງການເງິນ ຜູ້ທີ່ຈະມາເປັນສະມາຊິກ ສະພາບໍລິຫານ ຜ-ຟຟລ.
- ພິຈາລະນາຄົ້ນຄວ້າຊີວະປະຫວັດ ຂອງ 03 ທ່ານ, ທີ່ທາງບໍລິສັດ ພິງຊັບທະວີ ກໍ່ສ້າງຂົວ-ທາງ ຈຳກັດຜູ້ດຽວ ສະເໜີມາເປັນສະມາຊິກສະພາບໍລິຫານ ແລະ ຮອງອຳນວຍການ ຂອງ ຜ-ຟຟລ.

1.6 ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ

ສຳລັບການຈັດຕັ້ງປະຕິບັດວຽກໃນປີ 2021, ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ໄດ້ຈັດຕັ້ງປະຕິບັດວຽກງານຕາມໜ້າທີ່ກຳນົດ ແລະ ຈັດກອງປະຊຸມພາຍໃນຄະນະກຳມະການ 2 ຄັ້ງ. ໂດຍປີ 2021 ຍັງບໍ່ມີລາຍການທີ່ກ່ຽວພັນເກີດຂຶ້ນ ຫຼື ບໍ່ມີລາຍການເຄື່ອນໄຫວທຸລະກິດທີ່ເກີດຂຶ້ນລະຫວ່າງ ຜ-ຟຟລ ກັບບຸກຄົນທີ່ກ່ຽວພັນ ຫຼື ນິຕິບຸກຄົນທີ່ກ່ຽວພັນ.

2. ຄະນະກຳມະການຂອງຄະນະອຳນວຍການໃຫຍ່

2.1 ຄະນະກຳມະການຈັດຊື້ແລະສະໜອງວັດສະດຸອຸປະກອນ(ຄຈຊ)

ຜ່ານການດຳເນີນງານໃນປີ 20 21 ຄະນະກຳມະການຈັດຊື້ໄດ້ມີການຈັດປະຊຸມເຈລະຈາ-ປຶກສາຫາລືກັບຜູ້ສະໜອງ/ຜູ້ຮັບເໝົາຈົນກ້າວໄປສູ່ການເຊັນສັນຍາຈຳນວນ38ໂຄງການໂດຍແບ່ງອອກເປັນ 3 ພາກດັ່ງນີ້:

1. ສັນຍາການປະຕິບັດວຽກ (Works)	ມີ 13 ໂຄງການ
2. ສັນຍາຈັດຊື້ສິນຄ້າ (Goods)	ມີ 18 ໂຄງການ
3. ສັນຍາສະໜອງການບໍລິການ (Service)	ມີ 07 ໂຄງການ

2.2 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍແລະ ປະຕິບັດວິໄນ(ຄນຍວ).

ຜ່ານການດຳເນີນງານໃນປີ 2021 ຄະນະກຳມະການຄົ້ນຄວ້ານະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນໄດ້ຈັດກອງປະຊຸມຂຶ້ນ 7 ຄັ້ງ ເພື່ອແກ້ໄຂວຽກງານການດຳເນີນທຸລະກິດພາຍໃນ ຜ-ຟຟລ ດັ່ງນີ້:

- ກ່ຽວກັບຂໍ້ກຳນົດວ່າດ້ວຍລະບຽບ ນະໂຍບາຍຕໍ່ພະນັກງານ ແລະ ການປັບໄໝ ພະນັກງານ ຜ-ຟຟລ ຜູ້ທີ່ຜິດລະບຽບ.
- ກ່ຽວກັບ(ຮ່າງ)ຂໍ້ກຳນົດວ່າດ້ວຍການອະນຸມັດ ແລະ ປະກອບນະໂຍບາຍໃຫ້ພະນັກງານໄປຍົກລະດັບການສຶກສາຕໍ່ຢູ່ພາຍໃນ ແລະ ຕ່າງປະເທດ (ສະບັບປັບປຸງ ຄັ້ງທີ1).

- ກ່ຽວກັບ ຂໍ້ກຳນົດວ່າດ້ວຍການຍົກຍ້າຍພະນັກງານ (ສະບັບປັບປຸງຄັ້ງທີ1).
- ກ່ຽວກັບ (ຮ່າງ) ຂໍ້ກຳນົດ ວ່າດ້ວຍນະໂຍບາຍ ແລະ ລະບຽບການຕໍ່ພະນັກງານທີ່ໄປປະຕິບັດວຽກງານຢູ່ ບໍລິສັດຮ່ວມທຶນ ຫຼື ອົງການຈັດຕັ້ງອື່ນໆ.
- ກ່ຽວກັບ(ຮ່າງ) ຕາຕະລາງອຳນາດໃນການດຳເນີນງານຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
- ກ່ຽວກັບ(ຮ່າງ) ຂໍ້ກຳນົດວ່າດ້ວຍການປະເມີນຜົນພະນັກງານຂັ້ນນຳພາ.
- ກ່ຽວກັບ(ຮ່າງ) ອຳນາດໃນການດຳເນີນງານ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ມີ ການປັບປຸງ ແລະ ນຳສົ່ງໃຫ້ກອງເລຂາປະຊຸມສະພາບໍລິຫານເປັນທີ່ຮຽບຮ້ອຍແລ້ວ ເພື່ອນຳເອົາໄປ ພິຈາລະນາໃນກອງປະຊຸມຄັ້ງຕ່ໍໄປ.
- ກ່ຽວກັບຂໍ້ກຳນົດ ວ່າດ້ວຍການປະເມີນຜົນຂອງພະນັກງານ ແມ່ນ ໄດ້ມີການຈັດຕັ້ງປະຕິບັດ ທົ່ວບໍລິສັດ ເປັນທີ່ຮຽບຮ້ອຍແລ້ວ.
- ກ່ຽວກັບການຄິດໄລ່ເງິນອຸດໜູນຂອງພະນັກງານ ຜ-ຟຟລ ທີ່ໄປປະຈຳຢູ່ເຂື່ອນ IPP(ເຂື່ອນໄຟຟ້ານ້ຳເທີນ1) ແລະ ການມອບພັນທະຈາກເງິນເດືອນ ທີ່ໄດ້ຈາກນ້ຳເທີນ 1 ຫຼັງຈາກອອກບຳນານ.

IX. ການຂະຫຍາຍແລະ ພັດທະນາທຸລະກິດ

ໃນປີ 2021 ຜ-ຟຟລ ສືບຕໍ່ຕິດຕາມການກໍ່ສ້າງເຂື່ອນໄຟຟ້ານ້ຳງື່ມ1 ພາກຂະຫຍາຍ ໜ່ວຍທີ 6.

ຜ-ຟຟລ ໄດ້ສືບຕໍ່ດຳເນີນການທາງດ້ານເອກະສານ ໃນການມອບໂອນໂຄງການເປົ້າໝາຍທີ່ ຟຟລ ລົງທຶນ 100% ເຊັ່ນ: ເຂື່ອນໄຟຟ້ານ້ຳຫີນບູນ ມີກຳລັງຕິດຕັ້ງ 30 MW, ເຂື່ອນໄຟຟ້ານ້ຳຄານ 3 ມີກຳລັງຕິດຕັ້ງ 60 MW, ເຂື່ອນໄຟຟ້າເຊເສັດ 3 ມີກຳລັງຕິດຕັ້ງ 23 MW ແລະ ເຂື່ອນໄຟຟ້ານ້ຳຈຽນ 1 ມີກຳລັງຕິດຕັ້ງ 104 MW.

ຜ-ຟຟລ ກຳລັງດຳເນີນການໂອນຮຸ້ນເຊັ່ນ: ເຂື່ອນໄຟຟ້ານ້ຳລີກ 1 (ກຳລັງຕິດຕັ້ງທັງໝົດ 64 MW) ກຳ ລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 10% ຄິດເປັນ 6,4 MW, ເຂື່ອນໄຟຟ້າຫ້ວຍລຳພັນຕອນລຸ່ມ(ກຳລັງຕິດຕັ້ງທັງ ໝົດ 15 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 60% ຄິດເປັນ 9 MW ແລະ ເຂື່ອນໄຟຟ້າເຊຂະໜານ 3 (ກຳ ລັງຕິດຕັ້ງທັງໝົດ 250 MW)ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ຄິດເປັນ 37,5 MW.

ຜ-ຟຟລ ໄດ້ມີການລົງທຶນເອງ ແລະ ເຂົ້າຮ່ວມຮຸ້ນກັບບັນດາບໍລິສັດເອກະຊົນເຊັ່ນ: ເຂື່ອນໄຟຟ້ານ້ຳບີ 1, 2 ແລະ 3 (ກຳລັງຕິດຕັ້ງທັງໝົດ 135 MW) ໃນຊັດສ່ວນ 80% ຄິດເປັນ 108 MW, ເຂື່ອນໄຟຟ້ານ້ຳດີກ 1 (ກຳ ລັງຕິດຕັ້ງທັງໝົດ 15 MW) ໃນຊັດສ່ວນ 70% ຄິດເປັນ 10,5 MW, ເຂື່ອນໄຟຟ້ານ້ຳພູນ (ກຳລັງຕິດຕັ້ງທັງໝົດ 45 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 51% ຄິດເປັນ 22,95 MW ແລະ ເຂື່ອນໄຟຟ້ານ້ຳເທີນ 1(ກຳລັງຕິດ ຕັ້ງທັງໝົດ 650 MW) ກຳລັງຕິດຕັ້ງຕາມຊັດສ່ວນຖືຮຸ້ນ 15% ຄິດເປັນ 97,5 MW. ນອກນັ້ນ, ຜ-ຟຟລ ໄດ້ ດຳເນີນການເຈລະຈາ ເພື່ອເຂົ້າຮ່ວມຮຸ້ນກັບບັນດາບໍລິສັດເອກະຊົນເຊັ່ນ: ເຂື່ອນໄຟຟ້າປາກແບ່ງ (ກຳລັງຕິດຕັ້ງທັງ ໝົດ 912 MW) ໃນຊັດສ່ວນ 19% ຄິດເປັນ 173,3 MW, ເຂື່ອນໄຟຟ້າຊະນະຄາມ(ກຳລັງຕິດຕັ້ງທັງໝົດ 660 MW) ໃນຊັດສ່ວນ 19% ຄິດເປັນ 125,4MW, ເຂື່ອນໄຟຟ້າເຊກອງ 5 (ກຳລັງຕິດຕັ້ງທັງໝົດ 330 MW) ກຳລັງ ຕິດຕັ້ງຕາມຊັດສ່ວນ 20% ຄິດເປັນ 66 MW ແລະ ເຂື່ອນໄຟຟ້າຕາດສະໂຄ່ຍ(ກຳລັງຕິດຕັ້ງ 30 MW) ກຳລັງຕິດ ຕັ້ງຕາມຊັດສ່ວນຖືຮຸ້ນ 15% ຄິດເປັນ 4,5 MW.

ນອກຈາກລົງທຶນໃນແຫລ່ງສະໜອງພະລັງງານແລ້ວ, ຜ-ຟຟລ ຍັງສືບຕໍ່ພັດທະນາການໃຫ້ການ ບໍລິການຄຸ້ມຄອງເຂື່ອນໄຟຟ້າ, ໂດຍ ບໍລິສັດບໍລິການຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາອີດີແອວເຈັນ ຈຳກັດຜູ້ດຽວ ໃຫ້ບໍລິການການຜະລິດ, ສ້ອມແປງ ແລະ ບຳລຸງຮັກສາໃຫ້ແກ້ບັນດາເຂື່ອນໄຟຟ້າຂະໜາດນ້ອຍ ແລະ ໃຫຍ່ ການບໍລິການແກ້ໄຂສ້ອມແປງພາກອຸປະກອນທີ່ຢູ່ໃຕ້ນ້ຳດ້ວຍມະນຸດກົບ (ນັກດຳນ້ຳ), ວຽກງານ ບໍລິການສະໂມສອນ ແລະ ວຽກງານອື່ນໆ.

X. ຜູ້ກວດສອບອິດສະຫຼະ

1. ຄ່າຕອບແທນ ທີ່ບໍລິສັດກວດສອບ ໄດ້ຮັບຈາກບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ກອງປະຊຸມສາມັນ ຜູ້ຖືຮຸ້ນຂອງ ຜ-ຟຟລ ປີ 2019 ທີ່ຈັດຂຶ້ນໃນວັນທີ 29 ພຶດສະພາ 2020, ໄດ້ຮັບຮອງເອົາບໍລິສັດ PWC (PricewaterhouseCoopers) ເປັນຜູ້ກວດສອບອິດສະຫຼະຂອງ ຜ-ຟຟລ ປະຈຳປີ 2020-2022 ເປັນເວລາ 03 ປີ ໂດຍມີມູນຄ່າເທົ່າກັບ 2.167.764.000 ກີບ ເຊິ່ງການບໍລິການກວດສອບລວມມີການກວດສອບຕາມມາດຕະຖານສາກົນ ແລະ ມາດຕະຖານລາວ ເປັນພາສາລາວ ແລະ ພາສາອັງກິດ, ທົບທວນຖານະການເງິນຕາມການເປີດເຜີຍຂໍ້ມູນ.

XI. ການຈັດຕັ້ງປະຕິບັດວຽກງານການຄຸ້ມຄອງບໍລິຫານ

ວຽກງານຄຸ້ມຄອງບໍລິຫານອີງກອນ ແມ່ນວຽກງານໜຶ່ງທີ່ ຜ-ຟຟລ ໄດ້ໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ພັດທະນາປັບປຸງໃນທຸກໆດ້ານ ເພື່ອໃຫ້ສອດຄ່ອງກັບຄຳແນະນຳວ່າດ້ວຍການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫລາດຫລັກຊັບ ຂອງ ຄະນະກຳມະການຄຸ້ມຄອງຫລັກຊັບ ແລະ ຍົກລະດັບດ້ານວຽກງານການຄຸ້ມຄອງບໍລິຫານຂອງບໍລິສັດໃຫ້ທຽບເທົ່າກັບສາກົນຍິ່ງຂຶ້ນ. ໂດຍສະເພາະໃນປີ 2021 ຜ-ຟຟລ ແມ່ນໄດ້ເຂົ້າຮ່ວມການທົດລອງປະເມີນການຈັດຕັ້ງປະຕິບັດຄຳແນະນຳ ວ່າດ້ວຍການຄຸ້ມຄອງບໍລິຫານ (ASEAN Corporate Governance Scorecard) ເຊິ່ງຜົນຂອງການປະເມີນເຫັນວ່າ ໂດຍລວມແລ້ວ ຜ-ຟຟລ ແມ່ນສາມາດຈັດຕັ້ງປະຕິບັດຕາມແຕ່ລະຫລັກການໄດ້ໃນລະດັບດີ ໂດຍສາມາດສະຫລຸບການຈັດຕັ້ງວຽກງານທີ່ສຳຄັນໂດຍຫຍໍ້ດັ່ງນີ້:

1. ສິດຂອງຜູ້ຖືຮຸ້ນແລະ ການປະຕິບັດຕໍ່ຜູ້ຖືຮຸ້ນຢ່າງເທົ່າທຽມ

ຜ-ຟຟລ ໄດ້ໃຫ້ຄວາມສຳຄັນຕໍ່ການສ້າງກົນໄກໃຫ້ຜູ້ຖືຮຸ້ນຂອງ ຜ-ຟຟລ ໄດ້ສາມາດນຳໃຊ້ສິດຂອງຕົນຢ່າງເປັນອິດສະຫລະ ແລະ ມີການປະຕິບັດຕໍ່ຜູ້ຖືຮຸ້ນທຸກໆລາຍຢ່າງເທົ່າທຽມກັນ, ເຊິ່ງມັນສະແດງອອກຈາກການທີ່ຜ-ຟຟລ ໄດ້ມີການແຈ້ງ ແລະ ໃຫ້ສິດໃນການເຂົ້າຮ່ວມ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ, ຜູ້ຖືຮຸ້ນມີສິດໃນການຮັບເງິນປັນຜົນ ແລະ ເຂົ້າເຖິງຂໍ້ມູນທີ່ກ່ຽວຂ້ອງກັບການດຳເນີນງານ, ຖານະທາງການເງິນ ລວມໄປເຖິງບັນດາ ຂໍ້ມູນບົດບັນທຶກກອງປະຊຸມ ສາມັນ ແລະ ວິສາມັນສະພາບໍລິຫານ/ຜູ້ຖືຮຸ້ນ. ນອກນັ້ນ, ໃນປີ 2021 ຜ-ຟຟລ ແມ່ນໄດ້ມີການນຳສະເໜີລາຍຊື່ເປົ້າໝາຍຜູ້ສະໜັກ ຂອງຜູ້ຖືຮຸ້ນທີ່ຖືຮຸ້ນໃນ ຜ-ຟຟລ ຫລາຍກວ່າ 5% ຂອງຈຳນວນຮຸ້ນທັງໝົດ ເພື່ອມີສ່ວນຮ່ວມໃນການບໍລິຫານງານຂອງສະພາຜູ້ບໍລິຫານ ຜ-ຟຟລ.

2. ການຄຸ້ມຄອງສາຍພົວພັນກັບຜູ້ມີສ່ວນຮ່ວມໃນຕະຫລາດ

ຜ-ຟຟລ ແມ່ນໄດ້ເອົາໃຈໃສ່ໃນການປົກປ້ອງສິດ ແລະ ຮັກສາຜົນປະໂຫຍດ ຂອງທຸກໆພາກສ່ວນທີ່ກ່ຽວຂ້ອງຢ່າງເຕັມທີ່ ໂດຍສະເພາະ ແມ່ນ ພະນັກງານ, ລູກຄ້າ, ເຈົ້າໜີ້, ຜູ້ສະໜອງ, ຊຸມຊົນທ້ອງຖິ່ນ ແລະ ພາກສ່ວນໜ່ວຍງານລັດ. ເຖິງແມ່ນວ່າໄລຍະຜ່ານໄດ້ເກີດເຫດການ ການແຜ່ລະບາດຂອງເຊື້ອພະຍາດ ໂຄວິດ-19, ຜ-ຟຟລ ກໍຍັງສືບຕໍ່ເພີ່ມທະວີຄວາມເອົາໃຈໃສ່ໃນການຮັກສາສິດ ແລະ ຜົນປະໂຫຍດຂອງທຸກໆພາກສ່ວນຢ່າງເປັນປົກະຕິ. ເປັນຕົ້ນແມ່ນ ບໍລິສັດມີນະໂຍບາຍ ແລະ ມາດຕະການສະກັດກັ້ນພະຍາດ ໂຄວິດ-19 ໂດຍໃຫ້ພະນັກງານບາງສ່ວນສາມາດດຳເນີນການປະຕິບັດວຽກຢູ່ບ້ານໄດ້, ມີການກວດສຸຂະພາບປະຈຳປີ, ການຈັດຝຶກອົບຮົມແບບອອນລາຍ ແລະ ສະໜອງສິ່ງອຳນວຍຄວາມສະດວກຕ່າງໆເພື່ອຮັບປະກັນຄວາມປອດໄພໃນການເຮັດວຽກຂອງພະນັກງານ. ສຳລັບການບໍລິການລູກຄ້າ ກໍຄື ຟຟລ ກໍສືບຕໍ່ຮັກສາການສະໜອງພະລັງງານໄຟຟ້າໃຫ້ມີສະຖຽນລະພາບ, ດ້ານການຊ່ວຍເຫລືອສັງຄົມ ແລະ ສິ່ງແວດລ້ອມແມ່ນມີໜ່ວຍງານຮັບຜິດຊອບ ແລະ ຕິດຕາມລາຍງານ ເພື່ອຮັບປະກັນໃຫ້ການດຳເນີນທຸລະກິດຂອງ ຜ-ຟຟລ ເປັນໄປແບບຍືນຍົງ.

3. ການເປີດເຜີຍຂໍ້ມູນ ແລະ ຄວາມໂປ່ງໃສ

ຜ-ຟຟລ ແມ່ນໃຫ້ຄວາມສຳຄັນຕໍ່ວຽກງານການເປີດເຜີຍຂໍ້ມູນໃຫ້ແກ່ຜູ້ຖືຮຸ້ນ ໃຫ້ຖືກຕ້ອງ, ຄົບຖ້ວນ, ຈະແຈ້ງ ແລະ ທັນເວລາ ໂດຍອີງຕາມລະບຽບການເປີດເຜີຍຂໍ້ມູນຂອງຕະຫລາດຫລັກຊັບ ແລະ ມີຄະນະຮັບຜິດຊອບວຽກງານເປີດເຜີຍຂໍ້ມູນບໍລິສັດສະເພາະ. ບໍລິສັດແມ່ນໄດ້ມີການເປີດເຜີຍບັນດາຂໍ້ມູນສຳຄັນ ແລະ ຈຳເປັນ ຜ່ານລະບົບເປີດເຜີຍຂອງຕະຫລາດຫລັກຊັບລາວ ແລະ ເວບໄຊທຂອງ ຜ-ຟຟລ ເພື່ອຮັບປະກັນໃຫ້ຜູ້ຖືຮຸ້ນສາມາດເຂົ້າເຖິງຂໍ້ມູນໄດ້ຢ່າງເທົ່າທຽມກັນ ແລະ ທົ່ວເຖິງ. ໃນປີ 2021 ຜ-ຟຟລ ແມ່ນໄດ້ດຳເນີນການເປີດເຜີຍຂໍ້ມູນຂອງບໍລິສັດ ລວມທັງຫມົດ 21 ຄັ້ງ ດັ່ງລາຍລຸ່ມນີ້:

ປະເພດເປີດເຜີຍຂໍ້ມູນ	ປີ 2021
ການເປີດເຜີຍຂໍ້ມູນຕາມເຫດການ	13
ການເປີດເຜີຍຂໍ້ມູນຕາມຮອບວຽນເວລາ	5
ການເປີດເຜີຍຂໍ້ມູນຕາມການສະໝັກໃຈ	3
ການເປີດເຜີຍຂໍ້ມູນຕາມການຮຽກຮ້ອງ	0
ລວມ	**21**

4. ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງສະພາບໍລິຫານ

ສະພາບໍລິຫານ ຜ-ຟຟລ ແມ່ນປະກອບມາຈາກ ບຸກຄົນທີ່ມີຄວາມຮູ້ ຄວາມສາມາດ ແລະ ມີປະສົບການທີ່ມາຈາກຫລາກຫລາຍຂະແໜງການທີ່ກ່ຽວຂ້ອງ ເພື່ອທີ່ຈະສາມາດປະຕິບັດຫນ້າທີ່ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງບໍລິສັດ ແລະ ຜູ້ຖືຮຸ້ນ, ເຊິ່ງໄດ້ຜ່ານການຄັດເລືອກຈາກຄະນະກຳມະການຄັດເລືອກທີ່ຂຶ້ນກັບສະພາບໍລິຫານ. ໃນປີ 2021 ຜ-ຟຟລ ໄດ້ມີການແຕ່ງຕັ້ງຮັບຮອງສະມາຊິກສະພາບໍລິຫານເພີ່ມຂຶ້ນຈາກ 9 ທ່ານ ເປັນ 11 ທ່ານ, ໃນນັ້ນ, ມີກຳມະການສະພາບໍລິຫານທີ່ເປັນເພດຍິງ 1 ທ່ານ ແລະ ກຳມະການອິດສະຫລະ ຈຳນວນ 4.ທ່ານ. ພ້ອມນັ້ນ, ໃນປີ 2021 ໄດ້ມີການຈັດກອງປະຊຸມສະພາບໍລິຫານຂຶ້ນທັງໝົດ 0 6 ຄັ້ງ, ໃນນັ້ນ, ກອງປະຊຸມສະໄໝສາມັນ 0 4 ຄັ້ງ ແລະ ສະໄໝວິສາມັນ 02 . ກອງປະຊຸມສະພາບໍລິຫານ ຜ-ຟຟລ ໄດ້ມີການຄົ້ນຄວ້າ ແລະ ພິຈາລະນາບັນຫາສຳຄັນຕໍ່ການດຳເນີນທຸລະກິດຂອງບໍລິສັດ ຢ່າງເປັນປົກະຕິ ແລະ ດ້ວຍຄວາມຮັບຜິດຊອບສູງ ເປັນຕົ້ນແມ່ນໄດ້ມີການຕິດຕາມຜົນການດຳເນີນທຸລະກິດຂອງບໍລິສັດ, ການແກ້ໄຂດ້ານສະພາບການເງິນ ແລະ ບັນຫາດ້ານຄວາມສ່ຽງຕ່າງໆ ລວມທັງມີການຕິດຕາມແຜນການລົງທຶນ ແລະ ຍຸດທະສາດການພັດທະນາຂອງບໍລິສັດ.

XII. ວຽກງານການເຄື່ອນໄຫວດ້ານສິ່ງແລດລ້ອມ, ສັງຄົມ ແລະກິລາ

1. ວຽກງານສິ່ງແລດລ້ອມ

1. ລົງຕິດຕາມ ແລະ ຈັດກອງປະຊຸມຮ່ວມກັບອຳນາດການປົກຄອງ ຂັ້ນທ້ອງຖິ່ນຂອງ ເມືອງທ່າແຕງ, ແຂວງເຊກອງເປັນຈຳນວນ 6.400.000 ກີບ. ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານການປັບປຸງ ຊີວິດການເປັນຢູ່ຂອງປະຊາຊົນບ້ານຫ້ວຍດຳໃໝ່ ເຊິ່ງເປັນເຂດບ້ານຈັດສັນຂອງ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.
2. ສະໜອງງົບປະມານໃນການປົກຫຼັກໝາຍ ແລະ ກຳນົດຂອບເຂດຂອງ ເຂື່ອນໄຟຟ້ານ້ຳຄານ2 ລວມມູນຄ່າ 155.670.000 ກີບ.
3. ສະໜອງງົບປະມານຈຳນວນ 27.475.000 ກີບ ເປັນຄ່າທຳນຽມ ແລະ ຄ່າບໍລິການອັດແທກທີ່ດິນຂອງ ເຂື່ອນໄຟຟ້ານ້ຳງື່ມ 1 ພາກຂະຫຍາຍ.
4. ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການສ້າງແຜນຄຸ້ມຄອງອ່າງຮັບນ້ຳ (ແຜນຊີດເຊີຍປ່າໄມ້) ຮ່ວມກັບກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ຂອງເຂື່ອນໄຟຟ້ານ້ຳຄານ2 ແລະ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ຕາມເງື່ອນໄຂຂອງບົດພັນທະສິ່ງແວດລ້ອມ ເຊິ່ງ ເປັນເອກະສານຊ້ອນທ້າຍຂອງສັນຍາສຳປະທານໂຄງການເປັນ ຈຳນວນ 29.680.000 ກີບ.

5. ເນື່ອງໃນວັນປ່ອຍປາ, ອະນຸລັກສັດນ້ຳແລະສັດປ່າແຫ່ງຊາດ 13 ກໍລະກົດ 2021 ເຂື່ອນໄຟຟ້ານ້ຳງື່ມ-1 ປະກອບສ່ວນແນວພັນປາຈຳນວນ10,000ໂຕແກ່ອຳນາດການປົກຄອງແຂວງວຽງຈັນເພື່ອປ່ອຍລົງສູ່ແມ່ນ້ຳງື່ມທ້າຍເຮືອນຈັກຂອງ ເຂື່ອນໄຟຟ້ານ້ຳງື່ມ-1, ທີ່ ເມືອງແກ້ວອຸດົມແຂວງວຽງຈັນ.
6. ສະໜອງງົບປະມານສົມທົບທຶນ 3,420,000 ກີບ ປະກອບເຂົ້າໃນຄະນະຕິດຕາມການບໍລິຫານນ້ຳຕາມລ້ອງນ້ຳງື່ມ , ເພື່ອການນຳໃຊ້ເປັນງົບປະມານໃນການລົງຕິດຕາມຈົດບັນທຶກຂໍ້ມູນລະດັບນ້ຳ ໃຫ້ແກ່ບັນດາ ເຂື່ອນໄຟຟ້າພະລັງງານນ້ຳ ແລະ ແລກປ່ຽນຂໍ້ມູນຂ່າວສານອຸຕຸນິຍົມ ແລະ ການພະຍາກອນອາກາດ ເພື່ອ ສະໜອງໃຫ້ແກ່ວຽກງານຕ້ານແລ້ງ-ຕ້ານຖ້ວມ ສົກປີ 2021.
7. ສະໜອງງົບປະມານວຽກງານ ສຳຫຼວດວັດແທກທີ່ດິນເຂື່ອນໄຟຟ້ານ້ຳຈຽນ ຈຳນວນ 46.852.000 ກີບ.
8. ບັນດາເຂື່ອນໄຟຟ້າຂອງຜ-ຟຟລແມ່ນໄດ້ມີການຕິດຕາມລະດັບນ້ຳ, ກວດກາຄຸນະພາບນ້ຳແລະອະນາໄມ ໜ້າອ່າງຢ່າງເປັນປະຈຳພ້ອມນັ້ນກໍ່ໄດ້ມີການສຳຫຼວດບໍລິເວນອ້ອມຮອບແລະກວດກາສະພາບການຕ່າງໆ ຢ່າງເປັນປົກະຕິລວມໄປເຖິງການສິ່ງເສີມຄວາມອຸດົມສົມບູນທາງດ້ານຊີວະນາໆພັນ.

2. ວຽກງານຊ່ວຍເຫລືອສັງຄົມ ແລະ ກິລາ

ຜ-ຟຟລ ເປັນບໍລິສັດຜະລິດພະລັງງານ ແຫ່ງທຳອິດ ຂອງ ສປປລາວ ພາຍໃຕ້ຮູບແບບ ບໍລິສັດ ມະຫາຊົນ ເພື່ອເປັນການຍົກສູງບົດບາດ ຂອງ ຜ-ຟຟລ ຄຽງຄູ່ກັບການດຳເນີນທຸລະກິດ, ຜ-ຟຟລ ໄດ້ເອົາໃຈ ໃສ່ໃນວຽກງານຊ່ວຍເຫລືອ ແລະ ພັດທະນາສັງຄົມ ກໍ່ຄືຊຸມຊົນອ້ອມຂ້າງເຂື່ອນໄຟຟ້າຕະຫລອດໄລຍະທີ່ມີ ການສ້າງຕັ້ງບໍລິສັດ ຕາມແນວທາງການພັດທະນາພະລັງງານໄຟຟ້າ ແບບຍືນຍົງ ແລະ ໃຫ້ສັງຄົມມີສ່ວນຮ່ວມ, ຊຶ່ງໃນປີ 2021 ຜ-ຟຟລ ໄດ້ຈັດຕັ້ງປະຕິບັດດັ່ງນີ້:

1. ໃນວັນທີ 11 ມັງກອນ 2021 ທີ່ຫ້ອງການກອງບັນຊາການ ປກສ ເມືອງ ທ່າແຕງ, ແຂວງ ເຊກອງ ເຂື່ອນ ໄຟຟ້າ ຫ້ວຍລຳພັນໃຫຍ່ ໄດ້ຈັດພິທີ ມອບ-ຮັບ ເງິນງົບປະມານໃຊ້ໃນການເຄື່ອນໄຫວຈັດຕັ້ງປະຕິບັດຂຶ້ນ ທະບຽນ ແລະ ອອກປຶ້ມສຳມະໂນຄົວໃຫ້ແກ່ ບ້ານ ຫ້ວຍດຳໃໝ່ ຈຳນວນ 40.025.000 ກີບ
2. ລົງສຳຫຼວດລະບົບໂທລະໂຄ່ງແລະວິທະຍຸໃນເຂດລຸ່ມເຂື່ອນໄຟຟ້ານ້ຳງື່ມ 1ແລະນ້ຳຊອງ, ພ້ອມທັງສະໜັບ ສະໜຸນງົບປະມານ 43.200.000 ກີບ ໃນການຕິດຕັ້ງແລະສ້ອມແປງລະບົບໂທລະໂຄ່ງທີ່ເປ່ເພ.
3. ໃນເດືອນກຸມພາ 2021,ເຂື່ອນໄຟຟ້ານ້ຳຄານ 2-3 ໄດ້ຈັດຝຶກອົບຮົມເສີມທັກສະການຜະລິດຟອຍກວາດ ດ້ວຍດອກແຂມໃຫ້ແກ່ປະຊາຊົນບ້ານພູຊ້າງເຊິ່ງເປັນບ້ານຈັດສັນຂອງເຂື່ອນໄຟຟ້ານ້ຳຄານ 2-3ເປັນ ຈຳນວນ 11.330.000 ກີບ.
4. ເຂື່ອນໄຟຟ້ານ້ຳຈຽນໄດ້ສົມທົບງົບປະມານ ຈຳນວນ 20.000.000 ກີບ ໃນການກໍ່ສ້າງຫ້ອງການຫຼັງໃໝ່ ໃນແກ່ອຳນາດການປົກຄອງບ້ານຊຳກ້ຳທອງ, ເມືອງທ່າໂທມ, ແຂວງໄຊສົມບູນ.
5. ເຂື່ອນໄຟຟ້າແຊລະບ້ຳໄດ້ສະໜັບສະໜຸນອຸປະກອນການຮຽນທີ່ຈຳເປັນພ້ອມທັງຕົ້ນໄມ້ຈຳນວນໜຶ່ງໃຫ້ ແກ່ໂຮງຮຽນປະຖົມແຊລະບ້ຳ, ເມືອງຊະນະສົມບູນ, ແຂວງຈຳປາສັກ ລວມມູນຄ່າ 5.040.000 ກີບ.
6. ເຂື່ອນໄຟຟ້າເຊເສັດ 3ໄດ້ປະກອບສ່ວນຊ່ວຍເຫຼືອສີເພື່ອທາສຸກສາລາບ້ານພໍ່ເຂັມ , ເມືອງເລົ່າງາມ , ແຂວງ ສາລະວັນ ລວມມູນຄ່າ 3.500.000 ກີບ.
7. ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່ ໄດ້ຈັດຝຶກອົບຮົມເຕັກນິກ ແລະ ວິທີການໃນການປູກເຫັດ ໃຫ້ແກ່ ປະຊາຊົນບ້ານຫ້ວຍດຳໃໝ່ ໃນເດືອນກຸມພາ , ແລະ ໃນເດືອນມີນາ ແມ່ນໄດ້ຈັດກອງປະຊຸມເຜີຍແຜ່ນິຕິ ກຳຄຸ້ມຄອງກ່ຽວກັບຊັບພະຍາກອນທຳມະຊາດ ໃນເຂດຄຸ້ມຄອງຂອງເຂື່ອນລວມມູນຄ່າ 9.535.000 ກີບ.
8. ສະໜອງງົບປະມານ 65.123.320 ກີບ ໃນການອອກປຶ້ມສຳມະໂນຄົວ ໃຫ້ແກ່ປະຊາຊົນບ້ານຈັດສັນ ຫ້ວຍດຳໃໝ່, ຂອງ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.
9. ໃນວັນທີ 27 ສິງຫາ2021, ຜ-ຟຟລ ໄດ້ອຸປະຖຳເງິນ ຈຳນວນ 5.000.000 ກີບ ໃຫ້ແກ່ຜູ້ຕາງໜ້າ ຈາກ ລັດວິສາຫະກິດໄຟຟ້າລາວ ເພື່ອປະກອບສ່ວນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ ທີ່ ແຂວງໄຊຍະບູລີ.

10. ສ້ອມແປງໂຮງຮຽນບ້ານແສນອັງໃຫຍ່, ບ້ານຄຽງຕັງແລ, ບ້ານສະນຶມນອກ , ເຈາະບາດານ ແລະ ສ້າງຂົວ ຈິມຫ້ວຍຕະປຸງ ເຂດເຂື່ອນໄຟຟ້າເຊເສັດ1-2 ຈຳນວນ 333.544.00 ກີບ.
11. ສ້າງໂຮງຮຽນ ທີ່ບ້ານວັງເຮືອ, ເມືອງລ່ອງຊານ, ແຂວງໄຊສົມບູນ ເຂດເຂື່ອນໄຟຟ້ານ້ຳເລິກ ຕາມສັນຍາສຳ ປະທານລວມມູນຄ່າ 999.098.001 ກີບ.
12. ໃນນີ້ບັນດາເຂື່ອນຂອງ ຜ-ຟຟລ ແມ່ນໄດ້ເອົາໃຈໃສ່ໃນການໃນການມີສ່ວນຮ່ວມຕໍ່ສັງຄົມ ແລະ ຊຸມຊົນ ອ້ອມຂ້າງໃນທຸກໆດ້ານ ໂດຍສະເພາະແມ່ນການສົ່ງເສີມ ຊີວິດການເປັນຢູ່ຂອງປະຊາຊົນທ້ອງຖິ່ນ ແລະ ສົ່ງເສີມການສຶກສາ ຂອງ ນ້ອງນັກຮຽນທີ່ຍັງຂາດເຂີນ , ການບູລະນະສ້ອມແປງ ແລະ ສະໜອງພື້ນຖານ ໂຄງລ່າງຕ່າງໆຢ່າງເປັນປະຈຳ.

XIII. ການພັດທະນາຊັບພະຍາກອນມະນຸດ

ຜ-ຟຟລ ຍັງສືບຕໍ່ເຮັດໜ້າທີ່ຂອງຕົນເອງ ໃນການກຳນົດນະໂຍບາຍການວາງແຜນ ພັດທະນາ ຊັບພະຍາກອນມະນຸດຂອງອົງກອນເພື່ອຍົກລະດັບປະສິບການ ແລະ ເພີ່ມທັກສະຄວາມຮູ້, ຄວາມສາມາດໃໝ່ ໃນຫຼາຍສາຂາວິຊາທີ່ກ່ຽວຂ້ອງກັບວຽກງານວິຊາສະເພາະຂອງບໍລິສັດ.

ໃນສົກປີ 2021 ຜ-ຟຟລ ໄດ້ສ້າງພະນັກງານວິຊາການຊຳນານງານ ທາງດ້ານເຕັກນິກໄດ້ ຈຳນວນ 14 ທ່ານ ສຳເລັດການສົ່ງພະນັກງານເຂົ້າຝຶກອົບຮົມ ທັງພາຍໃນ ແລະ ຕ່າງປະເທດ ໃນນີ້ເຂົ້າຮ່ວມຝຶກອົບຮົມພາຍ ໃນປະເທດ ຈຳນວນ 158 ຄົນ ແລະ ຝຶກອົບຮົມຕ່າງປະເທດ ແບບທາງໄກ ໂດຍຜ່ານ ອອນລາຍ ຈຳນວນ 28 ຄົນ, ລວມເປັນຈຳນວນທັງໝົດ 186 ຄົນ.

XIV. ນະໂຍບາຍກ່ຽວກັບການຄວບຄຸມພາຍໃນຂອງບໍລິສັດ

ຜ-ຟຟລ ໃຫ້ຄວາມສຳຄັນຕໍ່ວຽກງານຄວບຄຸມພາຍໃນທີ່ເໝາະສົມ ແລະ ພຽງພໍໃນການບໍລິຫານອົງ ກອນໃຫ້ບັນລຸເປົ້າໝາຍເຊິ່ງສະແດງອອກໃຫ້ເຫັນຈາກການຈັດຕັ້ງປະຕິບັດວຽກງານບົນພື້ນຖານການປະຕິບັດ ຕາມນະໂຍບາຍ, ລະບຽບ ແລະ ຄຳແນະນຳຕ່າງໆທີ່ຖືກກຳນົດຂຶ້ນ ເປັນບ່ອນອີງໃນການປະຕິບັດວຽກງານຂອງ ແຕ່ລະພາກສ່ວນ. ເພື່ອເຮັດໃຫ້ລະບົບການຄວບຄຸມພາຍໃນມີຄວາມເຂັ້ມແຂງ , ຜ-ຟຟລ ກໍ່ຍັງມີການສ້າງຕັ້ງ ບັນດາຄະນະກຳມະການ ຕ່າງໆເປັນຕົ້ນ ຄະນະກຳມະການ ທີ່ຂຶ້ນກັບສະພາບໍລິຫານ ຄື: 1) ຄະນະກຳມະການ ກວດສອບ, 2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ, 3) ຄະນະກຳມະການກຳນົດຄ່າຕອບແທນ , 4) ຄະນະ ກຳມະການຄັດເລືອກ ແລະ 5) ຄະນະກຳມະການກວດສອບລາຍການທີ່ກ່ຽວພັນ ທີ່ມີການປະຕິບັດຕາມ ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນຢ່າງຊັດເຈນ.

XV. ດ້ານນະໂຍບາຍການຄຸ້ມຄອງບໍລິຫານຄວາມສ່ຽງຂອງ ຜ-ຟຟລ

1. ນະໂຍບາຍບໍລິຫານຄວາມສ່ຽງ

1.1 ຜ-ຟຟລ ມີນະໂຍບາຍຈັດວາງລະບົບ ແລະ ຂະບວນການບໍລິຫານຄວາມສ່ຽງທົ່ວບໍລິສັດ ລວມທັງບໍລິສັດໃນ ເຄືອເພື່ອໃຫ້ສອດຄ່ອງກັບຍຸດທະສາດ ແລະ ເປົ້າໝາຍທາງທຸລະກິດໂດຍສອດຄ່ອງ ຕາມມາດຕະຖານສາກົນ ໂດຍການປະເມີນຄວາມສ່ຽງໃຫ້ຄອບຄຸມໃນ 7 ດ້ານຊຶ່ງມີດັ່ງລຸ່ມນີ້:

1) ຄວາມສ່ຽງດ້ານຍຸດທະສາດ ແລະ ຊື່ສຽງຂອງບໍລິສັດ.
2) ຄວາມສ່ຽງດ້ານການດຳເນີນງານການຜະລິດ ແລະ ການສະໜອງພະລັງງານໄຟຟ້າໃຫ້ແກ່ລູກຄ້າ.
3) ຄວາມສ່ຽງດ້ານການເງິນ ແລະ ສະພາບຄ່ອງ.
4) ຄວາມສ່ຽງດ້ານການປະຕິບັດຕາມກົດລະບຽບ.
5) ຄວາມສ່ຽງດ້ານເຕັກໂນໂລຊີ.
6) ຄວາມສ່ຽງທີ່ເກີດຂຶ້ນໃໝ່/ການຈັດການຫຼືການຕອບສະໜອງຕໍ່ວິກິດທີ່ເກີດຂຶ້ນ.
7) ຄວາມສ່ຽງດ້ານຄວາມຍືນຍົງ.

1.2 ຜູ້ບໍລິຫານ ແລະ ພະນັກງານທຸກຄົນຂອງບໍລິສັດ ເປັນເຈົ້າຂອງຄວາມສ່ຽງ ເຊິ່ງມີໜ້າທີ່ຄວາມຮັບຜິດຊອບໃນ ການກຳນົດ ແລະ ປະເມີນຄວາມສ່ຽງຂອງໜ່ວຍງານທີ່ຕົນເອງຮັບຜິດຊອບ ລວມທັງກຳນົດມາດຕະການທີ່

ເໝາະສົມ ເພື່ອຈັດການຄວາມສ່ຽງ ແລະ ບໍລິສັດ ຈະບໍລິຫານຄວາມສ່ຽງໃຫ້ຢູ່ໃນລະດັບທີ່ຍອມຮັບໄດ້ (Risk Appetite) ຫຼື ຜິດຕ່ຽງບໍ່ເກີນລະດັບທີ່ບໍລິສັດຍອມຮັບໄດ້ (Risk Tolerance).

1.3 ຄະນະກຳມະການຄຸ້ມຄອງຄວາມສ່ຽງ ສົມທົບກັບ ຄະນະອຳນວຍການໃຫຍ່ ບໍລິສັດ ເປັນຜູ້ກຳນົດນະໂຍບາຍ, ແນວທາງ ແລະ ຂອບເຂດການບໍລິຫານຄວາມສ່ຽງ ລວມທັງລະດັບຄວາມສ່ຽງທີ່ຍອມຮັບໄດ້ຂອງບໍລິສັດ, ໂດຍມີ ຝ່າຍ, ເຂື່ອນ ແລະພະແນກ ຂອງ ບໍລິສັດ ເປັນຜູ້ຈັດຕັ້ງປະຕິບັດ.

ໂດຍກອງເລຂາຄະນະກຳມະການຄຸ້ມຄອງຄວາມສ່ຽງ ເປັນຜູ້ຊ່ວຍໃນທຸກວຽກງານການບໍລິຫານຄວາມສ່ຽງຕ່າງໆ, ລວມທັງເປັນຜູ້ສັງລວມຂໍ້ມູນຄວາມສ່ຽງ ແລະ ແນວທາງການບໍລິຫານຄວາມສ່ຽງຈາກຄະນະກຳມະການຄຸ້ມຄອງຄວາມສ່ຽງ ເພື່ອວິເຄາະ ແລະ ເຮັດລາຍງານຄວາມສ່ຽງ, ຄວາມຄືບໜ້າກ່ຽວກັບຄວາມສ່ຽງຂອງວຽກງານຕ່າງໆ ເພື່ອລາຍງານຕໍ່ຄະນະກຳມະການຄຸ້ມຄອງຄວາມສ່ຽງ.

1.4 ຄວາມສ່ຽງທີ່ມີຜົນກະທົບຕໍ່ການບັນລຸຈຸດປະສົງຂອງບໍລິສັດ ຕ້ອງໄດ້ຮັບການດຳເນີນການ ດັ່ງນີ້:

- ກຳນົດຄວາມສ່ຽງໃຫ້ທັນເວລາ.
- ປະເມີນໂອກາດຂອງການເກີດຄວາມສ່ຽງແລະຜົນກະທົບຫາກເກີດເຫດການດັ່ງກ່າວ.
- ການຈັດການຄວາມສ່ຽງໃຫ້ສອດຄ່ອງຕາມຫຼັກການບໍລິຫານຄວາມສ່ຽງທີ່ກຳນົດໄດ້ໂດຍຄຳນຶງເຖິງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງແລະຜົນປະໂຫຍດທີ່ຈະໄດ້ຮັບຈາກການຈັດການຄວາມສ່ຽງດັ່ງກ່າວ.
- ຕິດຕາມຜົນແລະທົບທວນການບໍລິຫານຄວາມສ່ຽງຢ່າງສະໝ່ຳສະເໝີເພື່ອໃຫ້ໝັ້ນໃຈວ່າຄວາມສ່ຽງຂອງບໍລິສັດໄດ້ຮັບການຈັດການຢ່າງເໝາະສົມ.

1.5 ຄວາມສ່ຽງທີ່ອາດມີຜົນກະທົບຕໍ່ແຜນທຸລະກິດ ແລະ ຍຸດທະສາດຂອງບໍລິສັດ ເຊິ່ງມີຄວາມສ່ຽງຢູ່ໃນລະດັບສູງ ແລະ ສູງຫຼາຍ, ເຊິ່ງຕ້ອງໄດ້ລາຍງານໃຫ້ຄະນະກຳມະການຄຸ້ມຄອງຄວາມສ່ຽງ , ຄະນະກຳມະການກວດສອບ ແລະ ຄະນະສະພາບໍລິຫານບໍລິສັດ ຮັບຊາບ.

ເອກະສານລາຍງານການເງິນ31 ທັນວາ 2021

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

pwc

ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ

31 ທັນວາ 2021



www.pwc.com/la

pwc

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະ

ສະເໜີຕໍ່ຜູ້ຖືຮຸ້ນ ແລະ ຄະນະອຳນວຍການຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ຄວາມເຫັນ

ພວກເຮົາມີຄວາມເຫັນວ່າ ເອກະສານລາຍງານການເງິນແບບລວມ ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ແລະ ບໍລິສັດ ລູກ ("ກຸ່ມບໍລິສັດ") ແລະ ເອກະສານລາຍງານການເງິນແບບແຍກ ຂອງບໍລິສັດ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ໄດ້ສະແດງສະຖານະການເງິນຂອງບໍລິສັດ ຢ່າງຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍການບັນຊີ ເຊິ່ງອະທິບາຍໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກສະບັບນີ້.

ການກວດສອບຂອງພວກເຮົາມີດັ່ງນີ້:

ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ ຂອງບໍລິສັດ ປະກອບດ້ວຍ:

- ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ ວັນທີ 31 ທັນວາ 2021;
- ໃບລາຍງານຜົນໄດ້ຮັບແບບລວມ ແລະ ແບບແຍກສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານສ່ວນປ່ຽນແປງທຶນແບບລວມ ແລະ ແບບແຍກສຳລັບປີສິ້ນສຸດມື້ດຽວກັນ;
- ໃບລາຍງານກະແສເງິນສົດແບບລວມ ແລະ ແບບແຍກສຳລັບປີສິ້ນສຸດມື້ດຽວກັນ; ແລະ
- ບົດອະທິບາຍຊ້ອນທ້າຍປະກອບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ທີ່ສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ຂໍ້ມູນອະທິບາຍອື່ນໆ.

ພື້ນຖານໃນການອອກຄວາມເຫັນ

ພວກເຮົາໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບສາກົນ (ISAs). ຄວາມຮັບຜິດຊອບຂອງພວກເຮົາພາຍໃຕ້ມາດຕະຖານໄດ້ລະບຸໄວ້ໃນໜ້າທີ່ຮັບຜິດຊອບຂອງຜູ້ກວດສອບພາຍນອກ ສຳລັບການກວດສອບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ຂອງບົດລາຍງານພວກເຮົາ.

ພວກເຮົາເຊື່ອວ່າຫຼັກຖານການກວດສອບທີ່ພວກເຮົາໄດ້ຮັບພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບການອອກຄວາມເຫັນຂອງພວກເຮົາ.

ຄວາມເປັນອິດສະຫຼະ

ພວກເຮົາມີຄວາມເປັນອິດສະຫຼະ ຈາກກຸ່ມບໍລິສັດຕາມຂໍ້ກຳນົດຈັນຍາບັນ ຂອງຜູ້ປະກອບອາຊີບນັກບັນຊີ (ລວມເຖິງມາດຕະຖານຄວາມເປັນອິດສະຫຼະສາກົນ) ທີ່ກຳນົດໂດຍຄະນະກຳມະການຈັນຍາບັນນານາຊາດ ສຳລັບນັກບັນຊີ (IESBA Code). ພວກເຮົາໄດ້ປະຕິບັດຕາມຄວາມຮັບຜິດຊອບຫຼັກຈັນຍາບັນອື່ນໆ, ທີ່ສອດຄ່ອງກັບຈັນຍາບັນວິຊາຊີບນັກບັນຊີ (IESBA Code).

ເນັ້ນໜັກໃສ່ໃນເລື່ອງ - ພື້ນຖານການບັນຊີ

ພວກເຮົາໃຫ້ຂໍ້ສັງເກດຕໍ່ກັບບົດອະທິບາຍຊ້ອນທ້າຍທີ 2 ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກ, ເຊິ່ງໄດ້ອະທິບາຍພື້ນຖານການກະກຽມເອກະສານລາຍງານການເງິນແບບລວມ ແລະ ແບບແຍກ. ພື້ນຖານການບັນຊີທີ່ຖືກນຳໃຊ້ໃນການກະກຽມເອກະສານລາຍງານການເງິນແບບລວມ ແລະ ແບບແຍກສະບັບນີ້ ອາດມີຄວາມແຕກຕ່າງຈາກມາດຕະຖານການລາຍງານການເງິນສາກົນ ("IFRS"). ດັ່ງນັ້ນ, ຜູ້ທີ່ນຳໃຊ້ຄວນມີຄວາມເຂົ້າໃຈວ່າ ເອກະສານລາຍງານການເງິນແບບລວມ ແລະ ແບບແຍກນີ້ ບໍ່ໄດ້ມີຈຸດປະສົງເພື່ອສະແດງຖານະການເງິນແບບລວມ ແລະ ແບບແຍກ, ຜົນໄດ້ຮັບແບບລວມ ແລະ ແບບແຍກ ແລະ ກະແສເງິນສົດຕາມ IFRS. ທັງນີ້ຄວາມເຫັນຂອງພວກເຮົາບໍ່ໄດ້ມີການປ່ຽນແປງ ອັນເນື່ອງມາຈາກເລື່ອງທີ່ກ່າວມາຂ້າງເທິງນັ້ນ.

ເລື່ອງສຳຄັນໃນການກວດສອບ

ເລື່ອງສຳຄັນໃນການກວດສອບ ຄື ເລື່ອງຕ່າງໆ ທີ່ມີຄວາມສຳຄັນທີ່ສຸດຕາມການປະເມີນໂດຍຄວາມຮູ້ຄວາມສາມາດຂອງພວກເຮົາໃນການກວດສອບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ສຳລັບປີສິ້ນສຸດນີ້. ພວກເຮົາໄດ້ປະເມີນຄວາມສ່ຽງທີ່ສຳຄັນໜຶ່ງເລື່ອງຄື ມູນຄ່າທີ່ຄາດວ່າຈະໄດ້ຮັບຂອງໜີ້ຕ້ອງຮັບການຄ້າ. ພວກເຮົາໄດ້ນຳເນື້ອໃນສຳຄັນເຫຼົ່ານີ້ມາລວມໃນການກວດສອບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ເພື່ອສະແດງຄວາມເຫັນຂອງພວກເຮົາ ພ້ອມນີ້ພວກເຮົາບໍ່ໄດ້ສະແດງຄວາມເຫັນແຍກຕ່າງຫາກສຳລັບເລື່ອງເຫຼົ່ານີ້.

ເລື່ອງສຳຄັນໃນການກວດສອບ	ວິທີການກວດສອບໃນເລື່ອງສຳຄັນ
ການຕີມູນຄ່າຂອງໜີ້ຕ້ອງຮັບການຄ້າ	
ໃນວັນທີ 31 ທັນວາ 2021, ຍອດໜີ້ຕ້ອງຮັບ ແລະ ໜີ້ຕ້ອງຮັບອື່ນໆມີ 1.963.426 ລ້ານກີບ (ປີ 2020 ມີ: 1.509.848 ລ້ານກີບ), ທຽບເທົ່າ 7,47% ຂອງ ຍອດຊັບສິນທັງໝົດ (ປີ 2020: 3,97%). ປະກອບມີ ລູກໜີ້ຄ້າງຊຳລະເກີນ 6 ເດືອນຈຳນວນ 1.118.723 ລ້ານກີບ (2020: 980.021 ລ້ານກີບ). ຜູ້ບໍລິຫານໄດ້ເນັ້ນໜັກໃສ່ເລື່ອງລູກໜີ້ທີ່ຄ້າງຊຳລະເກີນ 12 ເດືອນ ແລະ ຍັງບໍ່ສາມາດເກັບໄດ້ພາຍຫຼັງວດບັນຊີ. ຜູ້ບໍລິຫານໄດ້ປະເມີນສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ ໂດຍໃຊ້ຂໍ້ມູນຈາກປະຫວັດການຊຳລະເງິນ ແລະ ການຄາດຄະເນຄວາມສາມາດໃນການຈ່າຍເງິນຂອງລູກໜີ້. ພວກເຮົາໃຫ້ຄວາມສຳຄັນກັບເລື່ອງນີ້ ເນື່ອງຈາກຍອດລວມຂອງໜີ້ຕ້ອງຮັບມີຈຳນວນຫຼາຍ ແລະ ການປະເມີນສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍທີ່ຜູ້ບໍລິຫານໄດ້ປະເມີນການ. ການປະເມີນການແມ່ນໄດ້ກຳນົດໂດຍຜູ້ບໍລິຫານ ອີງຕາມການພິຈາລະນາຈາກຂໍ້ສົມມຸດຕິຖານໃນເລື່ອງຄວາມສາມາດໃນການຊຳລະຄືນຂອງລູກຄ້າ ແລະ ຄວາມສ່ຽງອື່ນໆ ທີ່ກ່ຽວຂ້ອງໃນດ້ານສິນເຊື່ອ.	ວິທີການກວດສອບຂອງພວກເຮົາ ໃນເລື່ອງດັ່ງກ່າວ ລວມມີ: • ທຳຄວາມເຂົ້າໃຈນະໂຍບາຍ ແລະ ຂັ້ນຕອນຂະບວນການ, ວິທີການ ແລະ ຂໍ້ສົມມຸດຕິຖານທີ່ໃຊ້ໃນການກຳນົດການປະເມີນການສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ ແລະ ການສະສາງ ເພື່ອຢັ້ງຢືນວ່ານະໂຍບາຍບັນຊີຖືກນຳໃຊ້ຢ່າງສະໝ່ຳສະເໝີກັບປີທີ່ຜ່ານມາ, • ທຳຄວາມເຂົ້າໃຈ ແລະ ວິເຄາະລາຍລະອຽດຂອງສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ, ເພື່ອສົມທຽບຍອດຄົງເຫຼືອ ແລະ ກວດກາຄວາມຖືກຕ້ອງຂອງການຄິດໄລ່, • ປະເມີນຄວາມສົມເຫດສົມຜົນ ຂອງຂໍ້ສົມມຸດຕິຖານຂອງຜູ້ບໍລິຫານ ທີ່ໃຊ້ໃນການວິເຄາະ ການສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ, • ທົດສອບຄວາມໜ້າເຊື່ອຖືຂອງບົດລາຍງານໜີ້ຕ້ອງຮັບ ທີ່ໃຊ້ໃນການປະເມີນການສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ, • ສອບຖາມຜູ້ບໍລິຫານໃນຄວາມສາມາດທີ່ຄາດວ່າຈະເກັບໜີ້ໄດ້ຈາກບັນດາໜີ້ຕ້ອງຮັບ ແລະ ເກັບກຳຂໍ້ມູນປະກອບເພີ່ມຕື່ມເພື່ອໃຫ້ແນ່ໃຈວ່າ ການສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ ມີຄວາມເໝາະສົມໃນທ້າຍປີ, • ເກັບກຳຕາຕະລາງ ຂອງການສຳຮອງເງິນແຮໜີ້ຕ້ອງຮັບທີ່ສົງໄສຈະສູນເສຍ ລວມມີ: ຍອດຍົກມາ, ລາຍການສະສາງ, ສ່ວນເພີ່ມທີ່ຖືກຮັບຮູ້, ຍອດຄົງເຫຼືອ, ການສົມທຽບຍອດ ແລະ ການທົບສອບຄວາມຖືກຕ້ອງຂອງການຄິດໄລ່, • ພິຈາລະນາການສະສາງທີ່ເກີດຂຶ້ນໃນລະຫວ່າງປີ ແລະ ພິຈາລະນາວ່າມີລາຍການທີ່ບໍ່ປົກກະຕິ ທີ່ເປັນສາລະສຳຄັນ ເຊິ່ງອາດເປັນຕົວບົ່ງຊີ້ ເຖິງຄວາມເປັນໄປໄດ້ຂອງຄວາມບໍ່ສາມາດໃນການເກັບໜີ້, ແລະ • ກວດກາໜີ້ທີ່ເກັບໄດ້ ໃນພາຍຫຼັງວັນທີປິດບັນຊີ ຈົນເຖິງວັນທີໃນບົດລາຍງານ, ດັ່ງນັ້ນ, ພວກເຮົາພົບວ່າ ຂໍ້ສົມມຸດຕິຖານຂອງຜູ້ບໍລິຫານ ມີຄວາມສົມເຫດສົມຜົນ ແລະ ສອດຄ່ອງກັບຂໍ້ມູນການເກັບຄືນໜີ້ໃນອະດີດ ແລະ ຫຼັກຖານປະກອບ.

pwc

ຂໍ້ມູນອື່ນ

ຜູ້ອຳນວຍການມີຄວາມຮັບຜິດຊອບຕໍ່ຂໍ້ມູນອື່ນເຊິ່ງປະກອບມີ ຂໍ້ມູນລວມຢູ່ໃນເອກະສານລາຍງານການເງິນປະຈຳປີ ແຕ່ບໍ່ລວມເຖິງ ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ແລະ ບົດລາຍງານຂອງຜູ້ກວດສອບທີ່ຢູ່ໃນເອກະສານລາຍງານນັ້ນ. ພວກເຮົາຄາດ ວ່າຈະໄດ້ຮັບເອກະສານລາຍງານການເງິນປະຈຳປີ ພາຍຫຼັງວັນທີຂອງບົດລາຍງານຂອງຜູ້ກວດສອບ.

ຄວາມເຫັນຂອງພວກເຮົາ ຕໍ່ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ບໍ່ຄອບຄຸມເຖິງຂໍ້ມູນອື່ນ ແລະ ພວກເຮົາບໍ່ໄດ້ໃຫ້ ຄວາມເຊື່ອໝັ້ນຕໍ່ຂໍ້ມູນເຫຼົ່ານັ້ນ.

ໃນການກວດສອບຂອງພວກເຮົາ, ຄວາມຮັບຜິດຊອບຂອງພວກເຮົາ ທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ຄືການອ່ານ ແລະ ພິຈາລະນາວ່າຂໍ້ມູນອື່ນມີຄວາມຂັດແຍ່ງທີ່ເປັນສາລະສຳຄັນກັບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ຫຼື ຄວາມຮູ້ທີ່ໄດ້ຮັບຈາກການກວດສອບຂອງພວກເຮົາ ຫຼື ເຫັນວ່າຂໍ້ມູນອື່ນມີການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ ເປັນສາລະສຳຄັນ ຫຼື ບໍ່.

ຫາກພວກເຮົາພົບວ່າ ມີການສະແດງຂໍ້ມູນທີ່ຜິດຕໍ່ຄວາມເປັນຈິງໃນບົດລາຍງານປະຈຳປີ ພວກເຮົາຕ້ອງໄດ້ແຈ້ງໃຫ້ຄະນະກຳມະການກວດ ສອບ ເພື່ອດັດແກ້ ແລະ ເຜີຍແຜ່ບົດລາຍງານອີກເທື່ອໜຶ່ງ.

ຄວາມຮັບຜິດຊອບຂອງຜູ້ອຳນວຍການ ຕໍ່ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ

ຜູ້ອຳນວຍການມີຄວາມຮັບຜິດຊອບສຳລັບການກະກຽມເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ແລະ ນຳສະເໜີໂດຍ ສອດຄ່ອງກັບນະໂຍບາຍການບັນຊີດັ່ງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຊ້ອນທ້າຍຂໍ້ທີ 2 ຂອງເອກະສານລາຍງານການເງິນນີ້ ແລະ ການ ຄວບຄຸມພາຍໃນ, ເຊິ່ງຜູ້ອຳນວຍການໄດ້ກຳນົດໄວ້ຢ່າງພຽງພໍ ເພື່ອສ້າງເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ທີ່ ປາສະຈາກການລາຍງານບໍ່ຖືກຕ້ອງອັນເນື່ອງມາຈາກການສໍ້ໂກງ ຫຼື ຂໍ້ຜິດພາດ.

ໃນການກະກຽມເອກະສານລາຍງານການເງິນແບບລວມ ແລະ ແບບແຍກ, ຜູ້ອຳນວຍການມີຄວາມຮັບຜິດຊອບໃນການປະເມີນຄວາມ ສາມາດ ຂອງກຸ່ມບໍລິສັດ ແລະ ບໍລິສັດ ໃນການດຳເນີນງານຢ່າງຕໍ່ເນື່ອງ, ເປີດເຜີຍເລື່ອງທີ່ກ່ຽວຂ້ອງກ່ຽວກັບການດຳເນີນງານຕໍ່ເນື່ອງຕາມ ຄວາມເໝາະສົມ ແລະ ການໃຊ້ພື້ນຖານການບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງ. ຍົກເວັ້ນ ຜູ້ອຳນວຍການ ມີຄວາມຕັ້ງໃຈທີ່ຈະຍຸບ ບໍລິສັດ ຫຼື ບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.

ຄະນະກຳມະການການກວດສອບ ໄດ້ຊ່ວຍຜູ້ອຳນວຍການໃນເລື່ອງຄວາມຮັບຜິດຊອບຂອງພວກເຂົາຕໍ່ກັບຂັ້ນຕອນໃນການກຽມເອກະສານ ລາຍງານການເງິນຂອງກຸ່ມບໍລິສັດ ແລະ ບໍລິສັດ.

ຄວາມຮັບຜິດຊອບຂອງຜູ້ກວດສອບ ຕໍ່ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ

ວັດຖຸປະສົງຂອງພວກເຮົາ ແມ່ນເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ໂດຍລວມ ປາສະຈາກການສະແດງຂໍ້ມູນຜິດພາດທີ່ເປັນສາລະສຳຄັນ, ບໍ່ວ່າເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ສະເໜີຄວາມເຫັນຂອງ ພວກເຮົາຕໍ່ເອກະສານລາຍງານການເງິນເຊິ່ງລວມຄວາມເຫັນຂອງຜູ້ກວດສອບ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນ ຄືຄວາມເຊື່ອໝັ້ນໃນ ລະດັບສູງ, ແຕ່ບໍ່ໄດ້ເປັນການຮັບປະກັນວ່າການດຳເນີນກວດສອບຕາມມາດຕະຖານການກວດສອບບັນຊີສາກົນ ຈະສາມາດກວດພົບ ຫຼື ປ້ອງກັນການສະແດງຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງທີ່ເປັນສາລະສຳຄັນສະເໝີໄປ, ຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ ຜິດພາດ ແລະ ຖືວ່າເປັນສາລະສຳຄັນ ເມື່ອຄາດການຢ່າງສົມເຫດສົມຜົນໄດ້ວ່າລາຍການຂໍ້ມູນທີ່ຂັດຕໍ່ຄວາມເປັນຈິງແຕ່ລະລາຍການ ຫຼື ທຸກ ລາຍການລວມກັນມີຜົນຕໍ່ການຕັດສິນໃຈທາງເສດຖະກິດຕໍ່ຜູ້ໃຊ້ເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໃນການກວດສອບພວກເຮົາອີງຕາມມາດຕະຖານການກວດສອບບັນຊີສາກົນ, ພວກເຮົາໄດ້ໃຊ້ການປະເມີນຕາມຫຼັກວິຊາຊີບທີ່ຄວນຈະມີ ຕະຫຼອດການກວດສອບ, ການດຳເນີນງານຂອງພວກເຮົາລວມມີ:

- ການລະບຸ ແລະ ການປະເມີນຄວາມສ່ຽງຂອງການລາຍງານຜິດພາດທີ່ເປັນສາລະສຳຄັນຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກ, ເນື່ອງຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ການວາງແຜນ ແລະ ການດຳເນີນງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ຫຼັກຖານທີ່ໄດ້ຈາກການກວດສອບທີ່ພວກເຮົາໄດ້ຮັບແມ່ນພຽງພໍ ແລະ ເໝາະສົມເພື່ອເປັນພື້ນຖານສຳລັບສະແດງຄຳເຫັນຂອງພວກເຮົາ. ຄວາມສ່ຽງທີ່ຈະບໍ່ພົບຂໍ້ມູນທີ່ຜິດພາດ ແລະ ເປັນສາລະສຳຄັນ ເຊິ່ງເກີດຈາກການສໍ້ໂກງມີສູງກວ່າຄວາມສ່ຽງທີ່ເກີດຈາກຂໍ້ຜິດພາດ ເນື່ອງຈາກການສໍ້ໂກງອາດຈະເກີດຈາກການສົມຮູ້ຮ່ວມຄິດປອມແປງເອກະສານຫຼັກຖານ, ການຕັ້ງໃຈລະເວັ້ນທີ່ຈະສະແດງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ການເຂົ້າແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈ ແລະ ປະເມີນປະສິດທິພາບຂອງລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບ ເພື່ອກຳນົດຂັ້ນຕອນໃນການກວດສອບທີ່ມີຄວາມເໝາະສົມກັບສະພາບຕົວຈິງ ແຕ່ບໍ່ມີຈຸດປະສົງເພື່ອສະແດງຄວາມເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງບໍລິສັດ.
- ປະເມີນຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີ ແລະ ຄວາມສົມເຫດສົມຜົນ ຂອງການຄາດຄະເນທາງບັນຊີ ແລະ ລວມທັງການເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ສ້າງຂຶ້ນໂດຍຜູ້ອຳນວຍການ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງການນຳໃຊ້ນະໂຍບາຍການບັນຊີສຳລັບການດຳເນີນງານຢ່າງຕໍ່ເນື່ອງຂອງຜູ້ອຳນວຍການ ແລະ ຫຼັກຖານການກວດສອບທີ່ໄດ້ຮັບວ່າບໍ່ມີຄວາມແນ່ນອນທີ່ມີສາລະສຳຄັນທີ່ກ່ຽວຂ້ອງກັບເຫດການ ຫຼື ສະພາບຕົວຈິງທີ່ອາດມີປັດໃຈໃຫ້ເກີດຂໍ້ສົງໃສຢ່າງທີ່ມີສາລະສຳຄັນຕໍ່ຄວາມສາມາດໃນການດຳເນີນງານຢ່າງຕໍ່ເນື່ອງຂອງບໍລິສັດ ຫຼື ບໍ່. ຖ້າພວກເຮົາສະຫຼຸບໄດ້ວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນ, ພວກເຮົາຕ້ອງບັນທຶກໃນບົດລາຍງານຂອງຜູ້ກວດສອບຂອງພວກເຮົາທີ່ໄດ້ເປີດເຜີຍກ່ຽວກັບເອກະສານລາຍງານການເງິນແບບລວມ ແລະ ແບບແຍກ ເຊິ່ງການເປີດເຜີຍດັ່ງກ່າວບໍ່ພຽງພໍທີ່ຈະເຮັດໃຫ້ຄວາມເຫັນຂອງພວກເຮົາຈະປ່ຽນແປງໄປ ຂໍ້ສະຫຼຸບຂອງພວກເຮົາຂຶ້ນຢູ່ກັບຫຼັກຖານການກວດສອບທີ່ໄດ້ຮັບຈົນເຖິງວັນທີໃນບົດລາຍງານຂອງພວກເຮົາ. ເຖິງຢ່າງໃດກໍ່ຕາມ, ເຫດການ ຫຼື ສະພາບຕົວຈິງໃນອະນາຄົດອາດເປັນສາເຫດໃຫ້ບໍລິສັດບໍ່ສາມາດດຳເນີນງານຢ່າງຕໍ່ເນື່ອງໄດ້.
- ປະເມີນຄວາມເໝາະສົມຂອງຫຼັກຖານການກວດສອບໃຫ້ພຽງພໍກັບຂໍ້ມູນທາງດ້ານການເງິນຂອງກິດຈະການ ຫຼື ກິດຈະກຳທາງທຸລະກິດພາຍໃນບໍລິສັດເພື່ອສະແດງຄວາມຄິດເຫັນຕໍ່ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ. ພວກເຮົາຮັບຜິດຊອບຕໍ່ການກຳນົດແນວທາງ, ການຄວບຄຸມດູແລ ແລະ ດຳເນີນງານຂອງການກວດສອບບໍລິສັດ. ພວກເຮົາເປັນຜູ້ຮັບຜິດຊອບຕໍ່ການສະແດງຄວາມຄິດເຫັນຂອງພວກເຮົາ.

ພວກເຮົາໄດ້ສື່ສານກັບຄະນະກຳມະການການກວດສອບກ່ຽວກັບຂອບເຂດ ແລະ ຊ່ວງເວລາຂອງການກວດສອບຕາມທີ່ໄດ້ວາງແຜນໄວ້, ເຊິ່ງລວມເຖິງບັນຫາທີ່ສຳຄັນທີ່ພົບເຫັນໃນການກວດສອບ ແລະ ຂໍ້ບົກພ່ອງຂອງການຄວບຄຸມພາຍໃນທີ່ເປັນສາລະສຳຄັນທີ່ພົບລະຫວ່າງການກວດສອບຂອງພວກເຮົາ.

ພວກເຮົາໄດ້ໃຫ້ຄຳຮັບຮອງແກ່ຄະນະກຳມະການກວດສອບວ່າ ພວກເຮົາໄດ້ປະຕິບັດຕາມຂໍ້ກຳນົດຫຼັກຈັນຍາບັນ ກ່ຽວຂ້ອງກັບຄວາມເປັນອິດສະຫຼະ ແລະ ໄດ້ສື່ສານກັບຄະນະກຳມະການກວດສອບກ່ຽວກັບຄວາມສຳພັນທັງໝົດລວມເຖິງເລື່ອງອື່ນໆ ທີ່ພວກເຮົາເຊື່ອວ່າມີເຫດຜົນທີ່ອາດພິຈາລະນາເຖິງຜົນກະທົບຕໍ່ຄວາມເປັນອິດສະຫຼະຂອງພວກເຮົາ ແລະ ຫຼັກການທີ່ພວກເຮົາໃຊ້ເພື່ອປ້ອງກັນການຂາດຄວາມເປັນອິດສະຫຼະ.

pwc

ຈາກເລື່ອງທີ່ສື່ສານກັບຄະນະກຳມະການກວດສອບ, ພວກເຮົາໄດ້ພິຈາລະນາເລື່ອງຕ່າງໆທີ່ເປັນສາລະທີ່ສຳຄັນທີ່ສຸດ ໃນການກວດສອບ ເອກະສານລາຍງານການເງິນແບບລວມ ແລະ ແບບແຍກໃນຄັ້ງນີ້ ແລະ ກຳນົດເປັນເລື່ອງສຳຄັນໃນການກວດສອບ. ພວກເຮົາໄດ້ອະທິບາຍ ເລື່ອງເຫຼົ່ານີ້ໃນບົດລາຍງານຂອງຜູ້ກວດສອບຍົກເວັ້ນກົດໝາຍ ຫຼື ຂໍ້ບັງຄັບທີ່ບໍ່ໄດ້ເປີດເຜີຍຕໍ່ສາທາລະນະກ່ຽວກັບເລື່ອງດັ່ງກ່າວ ຫຼື ໃນ ສະພາບການທີ່ຍາກທີ່ຈະເກີດຂຶ້ນ, ພວກເຮົາໄດ້ພິຈາລະນາວ່າບໍ່ຄວນສື່ສານເລື່ອງດັ່ງກ່າວໃນບົດລາຍງານຂອງພວກເຮົາ ເພາະການປະຕິບັດ ດັ່ງກ່າວ ສາມາດຄາດການໄດ້ຢ່າງສົມເຫດສົມຜົນວ່າຈະມີຜົນກະທົບໃນທາງລົບຫຼາຍກວ່າຜົນປະໂຫຍດຕໍ່ສ່ວນໄດ້ເສຍສາທາລະນະຈາກການ ສື່ສານດັ່ງກ່າວ.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ



ໂດຍ ທ່ານ ອະພິສິດ ທ່ຽງຕ່ຽພົນໄຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 29 ມີນາ 2022

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 31 ທັນວາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021	31 ທັນວາ 2020	31 ທັນວາ 2021	31 ທັນວາ 2020
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ຊັບສິນ					
ຊັບສິນບໍ່ໝຸນວຽນ					
ເງິນລົງທຶນ ໃນບໍລິສັດລູກ	6	-	-	619.680	619.680
ເງິນລົງທຶນ ໃນວິສາຫະກິດຮ່ວມ	7.1	5.151.967	5.190.681	5.151.967	5.190.681
ເງິນລົງທຶນ ໃນບໍລິສັດຮຸ້ນສ່ວນ	7.2	3.264.319	3.010.187	3.264.319	3.010.187
ເງິນລົງທຶນທົ່ວໄປ		375.688	-	375.688	-
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ	8, 24	1.973.406	1.973.406	2.002.701	1.999.754
ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ	9	8.975.510	9.436.044	8.466.878	8.896.788
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ		-	413	-	413
ໜີ້ຕ້ອງຮັບຈາກສັນຍາ swap		16.131	234.296	16.131	234.296
ເງິນຈ່າຍລ່ວງໜ້າໃຫ້ຜູ້ສະໜອງ-ໂຄງການກໍ່ສ້າງ		341.075	341.075	-	-
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ้ำປະກັນ		-	63.211	-	63.211
ຊັບສິນທີ່ບໍ່ໝຸນວຽນອື່ນໆ		27.233	49.086	26.862	48.715
ລວມຊັບສິນບໍ່ໝຸນວຽນ		**20.125.329**	**20.298.399**	**19.924.226**	**20.063.725**
ຊັບສິນໝຸນວຽນ					
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	10	202.585	265.554	161.702	247.215
ເງິນລົງທຶນໄລຍະສັ້ນ	11	33.489	27.840	33.489	27.840
ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ	24	337.574	280.632	337.574	280.632
ໜີ້ຕ້ອງຮັບການຄ้า ແລະ ໜີ້ຕ້ອງຮັບອື່ນໆ	12	2.221.934	1.509.848	2.262.874	1.529.287
ສ່ວນທີ່ເຖິງກຳນົດຈ່າຍເງິນລ່ວງໜ້າສຳລັບສັນຍາແລກປ່ຽນ ອັດຕາດອກເບ້ຍ swap		-	11.867	-	11.867
ອาໄຫ່ ແລະ ເຄື່ອງໃຊ້ສาງ, ສຸດທິ		3.771	3.523	3.771	3.523
ຊັບສິນໝຸນວຽນອື່ນໆ		3.627.485	2.305.163	3.562.275	2.298.272
ລວມຊັບສິນໝຸນວຽນ		**6.426.838**	**4.404.427**	**6.361.685**	**4.398.636**
ລວມຍອດຊັບສິນ		**26.552.167**	**24.702.826**	**26.285.911**	**24.462.361**

ສະບັບຮ່າງ ແລະ ບໍ່ແມ່ ກະຊວງ ບໍລິສັດ ຜະລິດ-ໄຟຟ້າລาว ມะหาซົน EDL-Generation Public Company ฝ่ายขาย ขวา

ท่าน ดาวสี พาธายิภา
ผู้อำนวยการใหญ่
วันที่: 29 มีนา 2022

ท่าน อันแสง อันมะวิง
รองผู้อำนวยการใหญ่ - สายงานการเงิน
วันที่: 29 มีนา 2022

ໃບລາຍງານຖານະການເງິນແບບລວມ ແລະ ແບບແຍກ
ໃນວັນທີ 31 ທັນວາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021	31 ທັນວາ 2020	31 ທັນວາ 2021	31 ທັນວາ 2020
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ທຶນ ແລະ ໜີ້ສິນ					
ທຶນ					
ທຶນຈົດທະບຽນ	13	6.717.215	6.717.215	6.717.215	6.717.215
ສ່ວນເພີ່ມມູນຄ່າຮຸ້ນ	13	985.621	985.621	985.621	985.621
ຄັງສະສົມຕາມລະບຽບການ	14	565.708	565.024	565.708	565.024
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ		134.944	34.022	134.944	34.022
ກຳໄລສະສົມ		823.602	987.824	866.804	1.028.574
ທຶນທີ່ເປັນສ່ວນບໍລິສັດ		**9.227.090**	**9.289.706**	**9.270.292**	**9.330.456**
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		3.504	4.014	-	-
ລວມທຶນ		**9.230.594**	**9.293.720**	**9.270.292**	**9.330.456**
ໜີ້ສິນ					
ໜີ້ສິນບໍ່ໝຸນວຽນ					
ເງິນກູ້ຍືມໄລຍະຍາວສຸດທິ	15	3.178.012	3.121.428	2.945.941	2.924.501
ຮຸ້ນກູ້ສຸດທິ	16	10.751.211	8.343.462	10.751.211	8.343.462
ລວມໜີ້ສິນບໍ່ໝຸນວຽນ		**13.929.223**	**11.464.890**	**13.697.152**	**11.267.963**
ໜີ້ສິນໝຸນວຽນ					
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		280.424	178.608	233.590	134.222
ເງິນກູ້ຍືມໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	15	1.669.676	1.091.095	1.646.699	1.058.644
ເງິນກູ້ຍືມໄລຍະສັ້ນສຸດທິ	15	106.739	98.505	106.739	98.505
ຮຸ້ນກູ້ໄລຍະຍາວເຖິງກຳນົດຈັດເປັນໄລຍະສັ້ນ	16	378.281	1.931.841	378.281	1.931.841
ລາຍຈ່າຍຄ້າງຈ່າຍ	17	955.765	643.041	951.693	639.604
ໜີ້ສິນໝຸນວຽນອື່ນໆ		1.465	1.126	1.465	1.126
ລວມຍອດໜີ້ສິນໝຸນວຽນ		**3.392.350**	**3.944.216**	**3.318.467**	**3.863.942**
ລວມຍອດໜີ້ສິນ		**17.321.573**	**15.409.106**	**17.015.619**	**15.131.905**
ລວມຍອດທຶນ ແລະ ໜີ້ສິນ		**26.552.167**	**24.702.826**	**26.285.911**	**24.462.361**

ທ່ານ ຄຳສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ອັນແສງ ອັນມະວິງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

ໃບລາຍງານຜົນໄດ້ຮັບແບບລວມ ແລະ ແບບແຍກ
ສຳລັບປີສິ້ນສຸດ 31 ທັນວາ 2021

	ບິດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021	31 ທັນວາ 2020	31 ທັນວາ 2021	31 ທັນວາ 2020
		ລ້ານກີບ	ລ້ານກີບ	ລ້ານກີບ	ລ້ານກີບ
ລາຍຮັບຈາກການຂາຍ		1.196.664	1.167.375	1.168.853	1.138.180
ຕົ້ນທຶນໃນການຂາຍ	18	(585.971)	(567.894)	(570.720)	(553.123)
ກຳໄລຂັ້ນຕົ້ນ		**610.693**	**599.481**	**598.133**	**585.057**
ລາຍຮັບອື່ນໆ		55.292	44.092	44.111	38.133
ລາຍຈ່າຍໃນການດຳເນີນງານ ແລະ ບໍລິຫານ	18	(154.090)	(198.319)	(139.577)	(181.978)
ກຳໄລ (ຂາດທຶນ) ສຸດທິ ຈາກອັດຕາແລກປ່ຽນ		(612.913)	(45.389)	(614.037)	(20.016)
ກຳໄລ ຂອງຮຸ້ນຈາກເງິນລົງທຶນໃນ ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	7	960.715	498.703	960.715	498.703
ກຳໄລກ່ອນລາຍຈ່າຍທາງການເງິນ		**859.697**	**898.568**	**849.345**	**919.899**
ລາຍຈ່າຍທາງການເງິນ	19	(855.815)	(741.125)	(842.501)	(741.125)
ກຳໄລກ່ອນອາກອນກຳໄລ		**3.882**	**157.443**	**6.844**	**178.774**
ລາຍຈ່າຍອາກອນກຳໄລ	20	-	-	-	-
ກຳໄລໃນປີ		**3.882**	**157.443**	**6.844**	**178.774**
ສ່ວນຂອງກຳໄລທີ່ເປັນຂອງ:					
ສ່ວນຂອງບໍລິສັດແມ່		4.392	158.642	6.844	178.774
ສ່ວນໄດ້ເສຍທີ່ບໍ່ມີອຳນາດການຄວບຄຸມ		(510)	(1.199)	-	-
		3.882	**157.443**	**6.844**	**178.774**
ກຳໄລຕໍ່ຮຸ້ນ					
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	21	2,62	94,49	4,08	106,48

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

	ເອກະສານລາຍງານການເງິນແບບລວມ							
	ສ່ວນຂອງຜູ້ຖືຮຸ້ນບໍລິສັດ							
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ	ສ່ວນໄດ້ເສຍ ທີ່ບໍ່ມີອຳນາດ ໃນການຄວບຄຸມ ລ້ານກີບ	ລວມ ທຶນຂອງຜູ້ຖືຮຸ້ນ ລ້ານກີບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020								
ໃນວັນທີ 1 ມັງກອນ 2020	6.717.215	985.621	547.147	20.220	1.014.989	9.285.192	5.213	9.290.405
ກຳໄລໃນປີ	-	-	-	-	158.642	158.642	(1.199)	157.443
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	13.802	-	13.802	-	13.802
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)	-	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	17.877	-	(17.877)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2020	**6.717.215**	**985.621**	**565.024**	**34.022**	**987.824**	**9.289.706**	**4.014**	**9.293.720**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021								
ໃນວັນທີ 1 ມັງກອນ 2021	6.717.215	985.621	565.024	34.022	987.824	9.289.706	4.014	9.293.720
ກຳໄລໃນປີ	-	-	-	-	4.392	4.392	(510)	3.882
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	100.922	-	100.922	-	100.922
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)	-	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	684	-	(684)	-	-	-
ຍອດເຫຼືອໃນວັນທີ 31 ທັນວາ 2021	**6.717.215**	**985.621**	**565.708**	**134.944**	**823.602**	**9.227.090**	**3.504**	**9.230.594**

ທ່ານ ດວງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ລາຍງານການເງິນ
ວັນທີ: 29 ມີນາ 2022

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືວ່າເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

ໃບລາຍງານສ່ວນປ່ຽນແປງຂອງທຶນແບບແຍກ
ສຳລັບປີສິ້ນສຸດວັນທີ 31 ທັນວາ 2021

	ເອກະສານລາຍງານການເງິນແບບແຍກ					
	ທຶນ ຈົດທະບຽນ ລ້ານກີບ	ສ່ວນເພີ່ມ ມູນຄ່າຮຸ້ນ ລ້ານກີບ	ຄັງສະສົມຕາມ ລະບຽບການ ລ້ານກີບ	ຜົນຕ່າງຈາກການ ແປງຄ່າເອກະສານ ລາຍງານການເງິນ ລ້ານກີບ	ກຳໄລສະສົມ ຍັງບໍ່ທັນໄດ້ ແບ່ງປັນ ລ້ານກີບ	ລວມ ລ້ານກີບ
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020						
ໃນວັນທີ 1 ມັງກອນ 2020	6.717.215	985.621	547.147	20.220	1.035.607	9.305.810
ກຳໄລໃນປີ	-	-	-	-	178.774	178.774
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	13.802	-	13.802
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	17.877	-	(17.877)	-
ຍອດເຫຼືອໃນວັນທີ 31 ທັນວາ 2020	**6.717.215**	**985.621**	**565.024**	**34.022**	**1.028.574**	**9.330.456**
ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021						
ໃນວັນທີ 1 ມັງກອນ 2021	6.717.215	985.621	565.024	34.022	1.028.574	9.330.456
ກຳໄລໃນປີ	-	-	-	-	6.844	6.844
ຜົນຕ່າງຈາກການແປງຄ່າເອກະສານລາຍງານການເງິນ	-	-	-	100.922	-	100.922
ຈ່າຍເງິນປັນຜົນ	-	-	-	-	(167.930)	(167.930)
ໂອນເຂົ້າຄັງສຳຮອງຕາມລະບຽບການ	-	-	684	-	(684)	-
ຍອດເຫຼືອໃນວັນທີ 31 ທັນວາ 2021	**6.717.215**	**985.621**	**565.708**	**134.944**	**866.804**	**9.270.292**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ທ່ານ ຄອງສີ ພາຣາຍິກ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ອັນແສງ ອັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

ບົດອະທິບາຍຊ້ອນທ້າຍຂໍ້ມູນທາງການເງິນ ໜ້າທີ 13 ຫາ 49 ແມ່ນຖືກເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນແບບລວມ ແລະ ແບບແຍກເຫຼົ່ານີ້.

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ	31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ					
ກຳໄລກ່ອນອາກອນກຳໄລໃນປີ		3.882	157.443	6.844	178.774
ປັບປຸງ :					
ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ		520.357	515.932	505.732	504.669
ຕັດຮອນລາຍຈ່າຍຕົ້ນທຶນການອອກຮຸ້ນກູ້		24.040	62.761	24.040	62.761
ຂາດທຶນຈາກການສະສາງຊັບສິນຢູ່ພາຍໃຕ້ສຳປະທານ		28.116	22.657	28.099	22.657
ລາຍຮັບຈາກດອກເບ້ຍ		(15.680)	(18.012)	(15.680)	(18.012)
ລາຍຈ່າຍທາງການເງິນ		855.815	741.125	842.501	741.125
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	7	(960.715)	(498.703)	(960.715)	(498.703)
ການປ່ຽນແປງທຶນໝຸນວຽນ:		**455.815**	**983.203**	**430.821**	**993.271**
ຫຼຸດລົງ/(ເພີ່ມຂຶ້ນ) ໃນ					
ຊັບສິນທີ່ບໍ່ໝຸນວຽນອື່ນໆ		21.853	(46.625)	21.853	(46.254)
ເງິນຝາກສະຖາບັນການເງິນເພື່ອເປັນຫຼັກຊັບຄ້ຳປະກັນ		63.354	41.868	63.354	41.868
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		(590.295)	(957.587)	(611.796)	(967.765)
ອາໄຫ່ ເຄື່ອງໃນສາງ		(248)	648	(248)	648
ຊັບສິນໝຸນວຽນອື່ນໆ		295.725	53.772	287.476	35.897
ໜີ້ຕ້ອງສົ່ງຜູ້ສະໜອງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		59.196	20.963	78.951	25.176
ລາຍຈ່າຍຄ້າງຈ່າຍ		239.857	67.917	239.222	65.694
ໜີ້ສິນໝຸນວຽນອື່ນໆ		339	(157)	339	199
ເງິນສົດທີ່ໃຊ້ໃນ ກິດຈະກຳການດຳເນີນງານ		545.596	164.002	509.972	148.734
ຈ່າຍດອກເບ້ຍ		(599.595)	(524.777)	(586.281)	(525.658)
ກະແສເງິນສົດຈາກກິດຈະກຳການດຳເນີນງານສຸດທິ		**(53.999)**	**(360.775)**	**(76.309)**	**(376.924)**
ກະແສເງິນສົດທີ່ໃຊ້ໃນກິດຈະກຳການລົງທຶນ					
ເງິນຈ່າຍລ່ວງໜ້າ ສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ເງິນລົງທຶນ		-	-	-	(271)
ຈ່າຍເງິນລົງທຶນໃນບໍລິສັດລູກ		-	-	-	(24.417)
ຮັບເງິນຈາກເງິນລົງທຶນຈ່າຍລ່ວງໜ້າໃນບໍລິສັດລູກ		-	-	-	36.447
ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	7	(4.941)	(7.837)	(4.941)	(7.837)
ຈ່າຍເງິນສົດສຳລັບຊື້ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ		(87.526)	(98.009)	(103.508)	(51.602)
ຮັບເງິນໃຫ້ພາກສ່ວນທີ່ກ່ຽວຂ້ອງກູ້ຢືມໄລຍະສັ້ນ		-	136.183	-	136.183
ຮັບເງິນປັນຜົນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	7	475.472	154.540	475.472	154.540
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳການລົງທຶນ		**383.005**	**184.877**	**367.023**	**243.043**

ໃບລາຍງານກະແສເງິນສົດແບບລວມ ແລະ ແບບແຍກ
ສຳລັບປີສິ້ນສຸດ 31 ທັນວາ 2021

	ບົດ ອະທິບາຍ	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
		31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ	31 ທັນວາ 2021 ລ້ານກີບ	31 ທັນວາ 2020 ລ້ານກີບ
ກະແສເງິນສົດຈາກກິດຈະກຳທາງການເງິນ					
ລາຍຈ່າຍເງິນປັນຜົນ		(167.930)	(167.930)	(167.930)	(167.930)
ຮັບເງິນສົດຈາກການກູ້ຢືມໄລຍະສັ້ນ	15	682.253	98.239	682.253	98.239
ຊຳລະເງິນກູ້ຢືມໄລຍະສັ້ນ	15	(726.149)	(204.418)	(726.149)	(204.418)
ຮັບເງິນສົດຈາກການກູ້ຢືມໄລຍະຍາວ	15	-	29.441	-	-
ຊຳລະເງິນກູ້ຢືມໄລຍະຍາວ	15	(176.185)	(268.567)	(157.500)	(268.567)
ຮັບເງິນສົດຈາກການອອກຮຸ້ນກູ້	16	1.905.346	-	1.905.346	-
ຊຳລະຮຸ້ນກູ້	16	(1.951.667)	-	(1.951.667)	-
ກະແສເງິນສົດສຸດທິທີ່ໃຊ້ໃນກິດຈະກຳທາງການເງິນ		**(434.332)**	**(513.235)**	**(415.647)**	**(542.676)**
ການເພີ່ມຂຶ້ນ/(ຫຼຸດລົງ) ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		(105.326)	(689.133)	(124.933)	(676.557)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນຕົ້ນປີ		265.554	979.774	247.215	948.847
ຜົນກະທົບຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		42.357	(25.087)	39.420	(25.075)
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນທ້າຍປີ		**202.585**	**265.554**	**161.702**	**247.215**
ລາຍການເຄື່ອນໄຫວທີ່ບໍ່ແມ່ນເງິນສົດ					
ໜີ້ຕ້ອງສົ່ງຊຶ່ຊັບສິນພາຍໃຕ້ສຳປະທານ		67.582	34.317	67.582	16.211
ຫັກລົ້ງ ກັບບັນຊີໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ ກັບ					
- ຈ່າຍເງິນປັນຜົນ		-	125.948	-	125.948
- ເງິນກູ້ໄລຍະຍາວກັບພາກສ່ວນທີ່ກ່ຽວຂ້ອງ		-	8.288	-	8.288
- ລາຍຈ່າຍດອກເບ້ຍຄ້າງຈ່າຍ		-	338	-	338
ຫັກລົ້ງ ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກັບ ການຊຳລະຄືນເງິນກູ້ຢືມ	15	-	58.834	-	58.834
ຫັກລົ້ງ ເງິນກູ້ຢືມໄລຍະສັ້ນໃຫ້ພາກສ່ວນທີ່ກ່ຽວຂ້ອງ ກັບ ລາຍຈ່າຍດອກເບ້ຍຄ້າງຈ່າຍ		-	1.926	-	1.926
ໂອນຈາກເງິນຈ່າຍລ່ວງໜ້າສຳລັບຊັບສິນຢູ່ພາຍໃຕ້ການສຳປະທານ ແລະ ການລົງທຶນມາເປັນ					
- ເງິນລົງທຶນໃນວິສາຫະກິດຮ່ວມ		-	244.474	-	244.474

ທ່ານ ດວງສີ ພາທຍິກາ
ຜູ້ອຳນວຍການໃຫຍ່
ວັນທີ: 29 ມີນາ 2022

ທ່ານ ວັນແສງ ວັນນະວົງ
ຮອງຜູ້ອຳນວຍການໃຫຍ່ - ສາຍງານການເງິນ
ວັນທີ: 29 ມີນາ 2022

1 ການລາຍງານກິດຈະການ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ເປັນບໍລິສັດມະຫາຊົນ, ເຊິ່ງໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບແຫ່ງ ສປປ ລາວ ("ຕລຊລ") ວັນທີ 11 ມັງກອນ 2011 ແລະ ຖືກຄຸ້ມຄອງໂດຍ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ"). ບໍລິສັດ ເປັນກຸ່ມບໍລິສັດໃນເຄືອຂອງ ລັດວິສາຫະກິດໄຟຟ້າລາວ ("ຟຟລ").

ທີ່ຕັ້ງສຳນັກງານ ຕັ້ງຢູ່ຊັ້ນ 7, ອາຄານສຳນັກງານໃຫຍ່ຂອງ ຟຟລ, ຖະໜົນ ມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ໄປສະນີ 2392, ສປປ ລາວ.

ການດຳເນີນທຸລະກິດຫຼັກຂອງກຸ່ມບໍລິສັດ ແມ່ນ ຜະລິດໄຟຟ້າຂາຍໃຫ້ ລັດວິສາຫະກິດໄຟຟ້າລາວ.

ບໍລິສັດໄດ້ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບແຫ່ງ ສປປລາວ, ສຳລັບວັດຖຸປະສົງຂອງການລາຍງານແມ່ນເພື່ອ ບໍລິສັດ ແລະ ບໍລິສັດ ລູກ ຖືກກ່າວເຖິງເປັນກຸ່ມບໍລິສັດ.

ບໍລິສັດ ລູກຂອງບໍລິສັດ ໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

ຊື່ຂອງນິຕິບຸກຄົນ	ປະເພດຂອງທຸລະກິດ	ສ້າງຕັ້ງຂຶ້ນໃນ ປະເທດ	ອັດຕາສ່ວນການຖືຮຸ້ນ(%)	
ບໍລິສັດລູກທາງກົງ			**2021**	**2020**
ບໍລິສັດ ອີດີແອ-ເຈັນ ໂຊລ່າ ພາວເວີ້ ຈຳກັດ	ຜະລິດກະແສໄຟຟ້າ	ສປປ ລາວ	60	60
ບໍລິສັດ ນ້ຳປີ ພາວເວີ້ ຈຳກັດ	ຜະລິດກະແສໄຟຟ້າ	ສປປ ລາວ	80	80
ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ອີດີແອ-ເຈັນ ຈຳກັດຜູ້ດຽວ	ຜະລິດກະແສໄຟຟ້າ	ສປປ ລາວ	100	100

ເອກະສານລາຍງານການເງິນແບບລວມ ແລະ ແບບແຍກໄດ້ຮັບອະນຸມັດໃຫ້ອອກ ໂດຍຄະນະກຳມະການຜູ້ບໍລິຫານ ແລະ ຜູ້ ບໍລິຫານ ວັນທີ 29 ມີນາ 2022.

2 ນະໂຍບາຍການບັນຊີ

ນະໂຍບາຍການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນແບບລວມ ແລະ ແບບແຍກມີດັ່ງນີ້:

2.1. ພື້ນຖານການບັນຊີ

ເອກະສານລາຍງານການເງິນແບບລວມໄດ້ສ້າງຂຶ້ນ ຕາມນະໂຍບາຍການບັນຊີຂອງກຸ່ມບໍລິສັດ ເຊິ່ງກະກຽມຕາມເກນລາຄາຕົ້ນທຶນເດີມ ຍົກເວັ້ນການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ, ເຊິ່ງໄດ້ອະທິບາຍລາຍລະອຽດເພີ່ມຕື່ມໃນ ບົດອະທິບາຍຊ້ອນທ້າຍທີ 2 (2.2) ຂອງເອກະສານລາຍງານການເງິນແບບລວມ.

ນະໂຍບາຍການບັນຊີທີ່ໃຊ້ອາດຈະມີຄວາມແຕກຕ່າງຢ່າງມີສາລະສຳຄັນກັບມາດຕະຖານລາຍງານການເງິນສາກົນ (IFRSs). ຄວາມແຕກຕ່າງອັນເປັນສາລະສຳຄັນໄດ້ແກ່ ສະກຸນເງິນທີ່ໃຊ້ໃນການດຳເນີນງານ, ສັນຍາເຊົ່າ, ຜົນປະໂຫຍດຂອງພະນັກງານ, ຜົນກະທົບຂອງການປ່ຽນແປງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ, ອາກອນກຳໄລ ແລະ ອາກອນກຳໄລເຍື້ອນຊຳລະ, ເຄື່ອງມືທາງການເງິນ, ວິສາຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ ແລະ ຕົ້ນທຶນກ່ອນການດຳເນີນງານ.

2 ນະໂຍບາຍການບັນຊີ (ຕໍ່)

2.1. ພື້ນຖານການບັນຊີ (ຕໍ່)

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ (IFRSs), ເຖິງຢ່າງໃດກໍ່ຕາມ ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 697/ກງ ລົງວັນທີ 20 ມິນາ 2017 ແລະ ສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 (ແຈ້ງການ), ເຊິ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳ IFRS ມາໃຊ້ພາຍໃນປີ 2025. ກຸ່ມຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ.

ການກະກຽມເອກະສານລາຍງານການເງິນແບບລວມ ແລະ ແບບແຍກ, ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງມີການຄາດຄະເນ ແລະ ກຳນົດສົມມຸດຕິຖານ ເພື່ອສະແດງໃຫ້ເຫັນຈຳນວນເງິນຂອງຊັບສິນ ແລະ ໜີ້ສິນ. ການເປີດເຜີຍຂໍ້ມູນຊັບສິນ ແລະ ໜີ້ສິນ ທີ່ອາດຈະເກີດຂຶ້ນໃນມື້ກະກຽມເອກະສານລາຍງານການເງິນ ແລະ ຈຳນວນເງິນລາຍຮັບ ແລະ ລາຍຈ່າຍ ໃນຮອບເວລາລາຍງານ. ສະນັ້ນ, ຕົວເລກຈາກການຄາດຄະເນດັ່ງກ່າວ ຕ້ອງສ້າງຂຶ້ນບົນພື້ນຖານຄວາມຮັບຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານ ກ່ຽວກັບເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ, ເຊິ່ງສາລະສຳຄັນຂອງການຄາດຄະເນອາດຈະແຕກຕ່າງຈາກການຄາດຄະເນໃນເບື້ອງຕົ້ນຢ່າງເປັນສາລະສຳຄັນ.

2.2. ການບັນຊີສຳລັບກຸ່ມບໍລິສັດ - ເງິນລົງທຶນໃນບໍລິສັດລູກ, ວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

2.2.1 ບໍລິສັດລູກ

ບໍລິສັດລູກເປັນກິດຈະການທັງໝົດ (ລວມເຖິງໂຄງສ້າງຕ່າງໆ), ເຊິ່ງກຸ່ມບໍລິສັດມີອຳນາດຄວບຄຸມກິດຈະການ. ກຸ່ມບໍລິສັດມີອຳນາດຄວບຄຸມ ເມື່ອກຸ່ມບໍລິສັດຮັບ ຫຼື ມີສິດໃນຜົນຕອບແທນຜັນແປຈາກການກ່ຽວຂ້ອງກັບຜູ້ໄດ້ຮັບການລົງທຶນ ແລະ ສາມາດໃຊ້ອຳນາດເໜືອຜູ້ໄດ້ຮັບການລົງທຶນເພື່ອໃຫ້ໄດ້ຜົນຕອບແທນຜັນແປ ກຸ່ມບໍລິສັດລວມງົບການເງິນຂອງບໍລິສັດລູກ ໄວ້ໃນງົບການເງິນແບບລວມ ຕັ້ງແຕ່ວັນທີກຸ່ມບໍລິສັດ ມີອຳນາດໃນການຄວບຄຸມບໍລິສັດລູກ ຈົນເຖິງວັນທີກຸ່ມບໍລິສັດສູນເສຍອຳນາດຄວບຄຸມໃນບໍລິສັດລູກນັ້ນ.

ຍອດລາຍການລະຫວ່າງກັນ, ກຳໄລ ຫຼື ຂາດທຶນ ທີ່ຍັງບໍ່ເກີດຂຶ້ນຈິງລະຫວ່າງກຸ່ມບໍລິສັດຈະຖືກຕັດອອກ ເວັ້ນແຕ່ລາຍການດັ່ງກ່າວ ຈະມີການບັນທຶກຂາດທຶນຈາກການສູນເສຍມູນຄ່າຂອງຊັບສິນທີ່ໄດ້ໂອນໄປ. ລາຍຊື່ຂອງບັນດາບໍລິສັດລູກຖືກອະທິບາຍໃນ (ບົດອະທິບາຍ 1).

2.2.2 ສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມ

ໃນວັນທີ ທີ່ໄດ້ຊື້ກິດຈະການມາ, ກຸ່ມບໍລິສັດໄດ້ປະເມີນສ່ວນໄດ້ເສຍທີ່ບໍ່ມີອຳນາດຄວບຄຸມຕາມສັດສ່ວນຂອງຊັບສິນສຸດທິທີ່ໄດ້ມາ. ການປ່ຽນແປງສ່ວນໄດ້ເສຍໃນບໍລິສັດລູກ ທີ່ບໍ່ສົ່ງຜົນໃຫ້ສູນເສຍການຄວບຄຸມຖືເປັນລາຍການຂອງບໍລິສັດ.

2 ນະໂຍບາຍການບັນຊີ (ຕໍ່)

2.2. ການບັນຊີສຳລັບກຸ່ມບໍລິສັດ - ເງິນລົງທຶນໃນບໍລິສັດລູກ, ອິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

2.2.3 ອິສາຫະກິດຂາຮຸ້ນ

ອິສາຫະກິດຂາຮຸ້ນ ແມ່ນອິສາຫະກິດທີ່ມີອິດທິພົນຢ່າງມີສາລະສຳຄັນ ແຕ່ບໍ່ໄດ້ເຖິງກັບມີອຳນາດຄວບຄຸມ ຫຼື ມີອຳນາດຄວບຄຸມຮ່ວມ, ເງິນລົງທຶນໃນອິສາຫະກິດຂາຮຸ້ນ ແມ່ນຮັບຮູ້ໂດຍການຄິດໄລ່ກຳໄລຕາມສັດສ່ວນຮຸ້ນ. ລາຍຊື່ ຂອງບັນດາອິສາຫະກິດຂາຮຸ້ນຖືກອະທິບາຍໃນ (ບົດອະທິບາຍ 7).

2.2.4 ບໍລິສັດຮຸ້ນສ່ວນ

ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ແມ່ນບໍລິສັດທີ່ມີສິດຄວບຄຸມຮ່ວມກັນ ແຕ່ບໍ່ສາມາດຄວບຄຸມແບບເດັດຂາດພຽງຜູ້ ດຽວ. ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ເບື້ອງຕົ້ນແມ່ນຮັບຮູ້ໂດຍການຄິດໄລ່ຮັບຮູ້ກຳໄລຕາມສັດສ່ວນຮຸ້ນ. ລາຍຊື່ ຂອງບັນດາບໍລິສັດຮຸ້ນສ່ວນຖືກອະທິບາຍໃນ (ບົດອະທິບາຍ 7).

2.2.5 ວິທີການບັນຊີໂດຍການຄິດໄລ່ຮັບຮູ້ກຳໄລຕາມສັດສ່ວນຮຸ້ນ

ພາຍໃຕ້ການຄິດໄລ່ໂດຍຮັບຮູ້ກຳໄລຕາມສັດສ່ວນຮຸ້ນ, ເງິນລົງທຶນໃນອິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນບໍລິສັດທີ່ມີສິດຄວບຄຸມຮ່ວມກັນ ແຕ່ບໍ່ມີການໄດ້ຄວບຄຸມ. ເງິນລົງທຶນໃນບໍລິສັດຮຸ້ນສ່ວນແມ່ນ ຄິດໄລ່ຕາມ ແບບການຮັບຮູ້ກຳໄລຕາມສັດສ່ວນຮຸ້ນ. ສ່ວນແບ່ງກຳໄລ ຫຼື ຂາດທຶນ ໃນບໍລິສັດຮຸ້ນສ່ວນທີ່ເກີດຂຶ້ນພາຍຫຼັງການ ໄດ້ມາ ຈະລວມໄວ້ໃນກຳໄລ ຫຼື ຂາດທຶນ. ການປ່ຽນແປງ ພາຍຫຼັງແມ່ນຈະປັບປຸງກັບມູນຄ່າຕາມບັນຊີຂອງເງິນ ລົງທຶນ, ເມື່ອມີການຂາດທຶນຂອງສ່ວນແບ່ງກຳໄລຂອງບໍລິສັດ ໃນບໍລິສັດຮຸ້ນສ່ວນມີມູນຄ່າຫຼາຍກວ່າ ຫຼື ເທົ່າກັບ ມູນຄ່າເງິນລົງທຶນໃນບໍລິສັດຮຸ້ນ, ບໍລິສັດຈະບໍ່ໄດ້ຮັບຮູ້ຜົນຂາດທຶນທີ່ຈະເກີດຂຶ້ນ ຍົກເວັ້ນແຕ່ບໍລິສັດມີພັນທະ ຫຼື ຕ້ອງຊຳລະເງິນແທນບໍລິສັດຮຸ້ນສ່ວນ. ນະໂຍບາຍການບັນຊີຂອງອິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ມີການ ປ່ຽນແປງເມື່ອເຫັນວ່າມີຄວາມຈຳເປັນ ເພື່ອໃຫ້ສອດຄ່ອງກັບນະໂຍບາຍບັນຊີຂອງກຸ່ມບໍລິສັດ.

2.2.6 ເອກະສານລາຍງານການເງິນແບບແຍກ

ໃນເອກະສານລາຍງານການເງິນແບບແຍກ ເງິນລົງທຶນໃນບໍລິສັດລູກ ແມ່ນນຳໃຊ້ວິທີຄິດໄລ່ແບບມູນຄ່າຕົ້ນທຶນ ລົບໃຫ້ຄ່າເສື່ອມມູນຄ່າ, ຖ້າມີ. ເງິນລົງທຶນໃນອິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ ແມ່ນຄິດໄລ່ຕາມແບບ ການຮັບຮູ້ກຳໄລຕາມສັດສ່ວນຮຸ້ນ (ໃນບົດອະທິບາຍ 2.2.5).

2.2.7 ເງິນລົງທຶນທົ່ວໄປ

ເງິນລົງທຶນນອກເໜືອຈາກ ເງິນລົງທຶນໃນບໍລິສັດລູກ, ອິສາຫະກິດຂາຮຸ້ນ, ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ແລະ ເງິນລົງທຶນທີ່ບໍ່ໄດ້ມີຢູ່ໃນຄວາມຕ້ອງການຂອງຕະຫຼາດ ແມ່ນຈະຖືກຈັດປະເພດໃຫ້ເປັນເງິນລົງທຶນທົ່ວໄປ. ເງິນ ລົງທຶນຈະຖືກຮັບຮູ້ໃນເບື້ອງຕົ້ນເປັນມູນຄ່າຕົ້ນທຶນເດີມລົບໃຫ້ຄ່າເສື່ອມມູນຄ່າ. ການທົດສອບຄ່າເສື່ອມມູນຄ່າຈະ ເກີດຂຶ້ນເມື່ອມີປັດໃຈບົ່ງບອກວ່າການລົງທຶນອາດເສື່ອມມູນຄ່າ. ຖ້າຫາກມູນຄ່າຕາມບັນຊີຂອງເງິນລົງທຶນສູງກວ່າ ມູນຄ່າທີ່ຄາດວ່າຈະໄດ້ຮັບຄືນຂາດທຶນຈາກການເສື່ອມມູນຄ່າຈະຖືກຮັບຮູ້ໃນ ກຳໄລ ຫຼື ຂາດທຶນ.

2 ນະໂຍບາຍການບັນຊີ (ຕໍ່)

2.3. ການແລກປ່ຽນສະກຸນເງິນ

ລາຍການໃນເອກະສານລາຍງານການເງິນ ແມ່ນຖືກວັດມູນຄ່າເປັນສະກຸນເງິນກີບ ("ກີບ").

ລາຍການທີ່ເປັນເງິນຕາຕ່າງປະເທດ ແມ່ນຖືກແປງຄ່າເປັນກີບ ດ້ວຍອັດຕາແລກປ່ຽນຂອງມື້ທີ່ມີລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນ ທີ່ເປັນຕົວເງິນເປັນສະກຸນເງິນຕາຕ່າງປະເທດ ແມ່ນຖືກແປງຄ່າເປັນເງິນກີບໂດຍໃຊ້ອັດຕາແລກປ່ຽນຕາມວັນທີ່ລາຍງານ. ກຳໄລ ຫຼື (ຂາດທຶນ) ຈາກອັດຕາແລກປ່ຽນທີ່ເກີດຂຶ້ນຈິງຈະຖືກຮັບຮູ້ເຂົ້າໃນໃບລາຍງານຜົນໄດ້ຮັບເມື່ອມີການຈ່າຍເງິນ.

ຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນ

- ຊັບສິນ ແລະ ໜີ້ສິນ ຢູ່ໃນໃບລາຍງານຖານະການເງິນແມ່ນສະແດງ ແລະ ຖືກແປງຄ່າໂດຍອັດຕາແລກປ່ຽນທ້າຍມື້ ຂອງໃບລາຍງານຖານະການເງິນ; ແລະ
- ຜົນແຕກຕ່າງທັງໝົດຈາກການປ່ຽນຄ່າຂອງບັນດາຊັບສິນ ແລະ ໜີ້ສິນທີ່ເປັນຕົວເງິນທີ່ເປັນສະກຸນເງິນຕາຕ່າງປະເທດ ທີ່ຍັງບໍ່ທັນເກີດຂຶ້ນຈິງແມ່ນຖືກຮັບຮູ້ໃນໃບລາຍງານຖານະການເງິນ ແລະ ຈະຖືກກັບລາຍການໃນປີຕໍ່ໄປ.
- ກຳໄລ/ຂາດທຶນທີ່ເກີດຂຶ້ນຈິງຈາກອັດຕາແລກປ່ຽນແມ່ນຖືກຮັບຮູ້ເຂົ້າໃນລາຍງານຜົນໄດ້ຮັບເມື່ອມີການຈ່າຍເງິນ.

ສຳລັບວິສາຫະກິດຂາຮຸ້ນ, ບໍລິສັດຮຸ້ນສ່ວນ, ແລະ ບໍລິສັດລູກ, ຜົນການດຳເນີນງານ ແລະ ໃບລາຍງານຖານະການເງິນຂອງ ບໍລິສັດ ເຊິ່ງມີສະກຸນເງິນທີ່ໃຊ້ໃນການນຳສະເໜີແຕກຕ່າງຈາກສະກຸນເງິນທີ່ໃຊ້ໃນການນຳສະເໜີຂອງບໍລິສັດ ເຊິ່ງຈະຖືກ ແປງຄ່າມາເປັນສະກຸນເງິນທີ່ໃຊ້ໃນການນຳສະເໜີຂອງບໍລິສັດ ດັ່ງຕໍ່ໄປນີ້:

- ຊັບສິນ ແລະ ໜີ້ສິນ ຢູ່ໃນໃບລາຍງານຖານະການເງິນແມ່ນສະແດງ ແລະ ຖືກແປງຄ່າໂດຍອັດຕາແລກປ່ຽນທ້າຍມື້ ຂອງໃບລາຍງານຖານະການເງິນ;
- ລາຍຮັບ ແລະ ຄ່າໃຊ້ຈ່າຍໃນໃບລາຍງານຜົນໄດ້ຮັບ ຖືກແປງຄ່າໂດຍໃຊ້ອັດຕາແລກປ່ຽນສະເລ່ຍໃນປີ; ແລະ
- ຜົນແຕກຕ່າງທັງໝົດຈາກການປ່ຽນຄ່າທີ່ຍັງບໍ່ເກີດຂຶ້ນຈິງແມ່ນຖືກຮັບຮູ້ໃນ ສ່ວນຂອງທຶນ.

2.4. ເຄື່ອງອາໄຫຼ່ ແລະ ເຄື່ອງໃນສາງອື່ນໆ

ອາໄຫຼ່ ແລະ ເຄື່ອງໃນສາງອື່ນໆ ສະແດງອອກລະຫວ່າງລາຄາຕົ້ນທຶນ ແລະ ມູນຄ່າສຸດທິທີ່ຄາດວ່າຈະໄດ້ຮັບຄືນ, ການ ຄິດໄລ່ຕົ້ນທຶນຈ່າຍອອກສາງໄດ້ນຳໃຊ້ວິທີການສະເລ່ຍນ້ຳໜັກ. ຕົ້ນທຶນຊື້ປະກອບດ້ວຍລາຄາຊື້ ແລະ ຄ່າໃຊ້ຈ່າຍໂດຍກົງທີ່ ຕິດພັນກັບການຊື້ເຄື່ອງໃນສາງເຊັ່ນ: ຄ່າບໍລິການການຂົນສົ່ງ, ລົບທຸກສ່ວນຫຼຸດທີ່ໄດ້ຮັບ, ເງິນອຸດໜຸນ ຫຼື ສ່ວນຫຼຸດ. ມູນຄ່າ ສຸດທິທີ່ຄາດວ່າຈະໄດ້ຮັບແມ່ນລາຄາສິນຄ້າຄົງເຫຼືອ ສາມາດຮັບຮູ້ໄດ້ໃນໄລຍະປົກກະຕິຂອງທຸລະກິດ ຫຼັງຈາກຫັກຕົ້ນທຶນ ໃນການຂາຍອອກຄ່າສູນເສຍມູນຄ່າເກີດຂຶ້ນ, ກຳລະນີ ລ້າສະໄໝ, ເຄື່ອນໄຫວຊ້າ ແລະ ເສຍຄຸນຂອງເຄື່ອງອາໄຫຼ່ ແລະ ເຄື່ອງໃນສາງ.

2.5. ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ

ຊັບສິນຢູ່ພາຍໃຕ້ສັນຍາສຳປະທານສ່ວນໃຫຍ່ປະກອບດ້ວຍ ອາຄານ, ເຂື່ອນໄຟຟ້ານ້ຳຕົກ, ໂຮງງານ ແລະ ເຄື່ອງຈັກ ສະແດງ ມູນຄ່າເບື້ອງຕົ້ນເປັນມູນຄ່າສຸດທິໃນມື້ໂອນຈາກ ຟຟລ ແລະ ມູນຄ່າຕົ້ນທຶນເດີມສຳລັບຊັບສິນທີ່ໄດ້ຮັບມາຫຼັງຈາກ ວັນທີ 15 ທັນວາ 2010. ຕົ້ນທຶນເດີມລວມລາຍການຈ່າຍທີ່ກ່ຽວຂ້ອງໂດຍກົງກັບການຊື້ລາຍການຊັບສົມບັດ.

2 ນະໂຍບາຍການບັນຊີ (ຕໍ່)

2.5. ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ (ຕໍ່)

ການຮັບຮູ້

ຕົ້ນທຶນປະກອບມີລາຍຈ່າຍທີ່ເປັນທາງກົງຂອງການໄດ້ຊັບສິນ. ຕົ້ນທຶນຂອງຊັບສິນທີ່ສ້າງຂຶ້ນມາເອງລວມເຖິງຕົ້ນທຶນຂອງວັດສະດຸ, ຄ່າແຮງງານໂດຍກົງ ແລະ ຄ່າໃຊ້ຈ່າຍອື່ນໆທີ່ກ່ຽວຂ້ອງ ເພື່ອໃຫ້ຊັບສິນຢູ່ໃນສະພາບພ້ອມເຮັດວຽກ. ການໂອນກຳມະສິດຊັບສິນພາຍໃຕ້ສັນຍາສຳປະທານໃຫ້ແກ່ກຸ່ມບໍລິສັດຕາມຂໍ້ຕົກລົງສັນຍາທັງໝົດທີ່ກ່ຽວຂ້ອງກັນ, ເຊິ່ງຖືກຍອມຮັບ ແລະ ສະເໜີໃຫ້ພະແນກຊັບພະຍາກອນພະລັງງານ.

ອີງຕາມສັນຍາສຳປະທານ, ກຸ່ມບໍລິສັດຕ້ອງໂອນຊັບສິນທັງໝົດທີ່ຮັບໃຊ້ການດຳເນີນງານໂຄງການທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານໃຫ້ກັບລັດຖະບານລາວ ("GOL") ໃນຕອນສິ້ນສຸດຂອງໄລຍະເວລາສຳປະທານ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງ ຈະຖືກຈັດເຂົ້າໃນມູນຄ່າຍັງເຫຼືອໃນບັນຊີຕາມຄວາມເໝາະສົມ, ເມື່ອມີຄວາມເປັນໄປໄດ້ວ່າຜົນປະໂຫຍດດ້ານເສດຖະກິດໃນອະນາຄົດທີ່ຕິດພັນຈະໄຫຼເຂົ້າສູ່ບໍລິສັດ ແລະ ສາມາດຕີມູນຄ່າຢ່າງໜ້າເຊື່ອຖືໄດ້. ຈຳນວນທີ່ຍັງເຫຼືອຂອງສ່ວນທີ່ຖືກແທນທີ່ຈະຖືກຕັດຈ່າຍ. ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ ທີ່ເກີດຂຶ້ນໃນຮອບເວລາລາຍງານຈະຖືກບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບໃນວັນທີ່ເກີດຂຶ້ນ.

ຊັບສິນຢູ່ພາຍໃຕ້ສັນຍາສຳປະທານ ທີ່ສະແດງອອກຕາມມູນຄ່າຕົ້ນທຶນລົບໃຫ້ຄ່າຫຼ້ຽຫ້ຽນສະສົມ. ຄ່າຫຼ້ຽຫ້ຽນຄິດໄລ່ແບບສະໝ່ຳສະເໝີຕະຫຼອດອາຍຸການໃຊ້ງານທີ່ຄາດໄວ້, ແຕ່ບໍ່ໃຫ້ເກີນໄລຍະການສຳປະທານພາຍໃຕ້ສັນຍາສຳປະທານກໍຄື 30 ປີ. ອັດຕາທີ່ນຳໃຊ້ແຕ່ລະປະເພດຊັບສິນ ສະແດງອອກດັ່ງນີ້:

	ປີ
ອາຄານ	4 - 30
ເຂື່ອນໄຟຟ້າ	19 - 30
ໂຮງງານ ແລະ ເຄື່ອງຈັກ	2 - 30
ຍານພາຫະນະ	5 - 15
ອຸປະກອນຫ້ອງການ, ເຄື່ອງເຟີນີເຈີ ແລະ ການຕິດຕັ້ງ	3 - 10

ກຸ່ມບໍລິສັດ ບັນທຶກຄ່າຫຼ້ຽຫ້ຽນເປັນລາຍຈ່າຍໃນແຕ່ລະງວດ. ເມື່ອຊັບສິນບັດຄົງທີ່ໝົດອາຍຸການນຳໃຊ້, ກຸ່ມບໍລິສັດຈະໄດ້ຈັດອອກຈາກບັນຊີຊັບສິນບັດຄົງທີ່ ແລະ ຄ່າຫຼ້ຽຫ້ຽນສະສົມທີ່ກ່ຽວຂ້ອງ ແລະ ບັນທຶກກຳໄລ ຫຼື ຂາດທຶນຈາກການສະສາງອອກເຂົ້າໃບລາຍງານຜົນໄດ້ຮັບ.

ມູນຄ່າຄົງເຫຼືອ ຈະຖືກສະສາງອອກທັນທີ ໃຫ້ມີມູນຄ່າເທົ່າກັບມູນຄ່າທີ່ຄາດວ່າຈະໄດ້ຮັບ ຖ້າມູນຄ່າຄົງເຫຼືອສູງກວ່າມູນຄ່າທີ່ຄາດວ່າຈະໄດ້ຮັບ.

ກຳໄລ ຫຼື ຂາດທຶນ ຈາກການຂາຍຈະຖືກກຳນົດໂດຍການສົມທຽບຂັ້ນຕອນກັບມູນຄ່າຕາມບັນຊີ ແລະ ບັນທຶກຮັບຮູ້ເປັນກຳໄລ ຫຼື ຂາດທຶນ.

2.6. ຄ່າເສື່ອມມູນຄ່າຂອງຊັບສິນ

ບັນດາຊັບສິນທີ່ຫັກຄ່າຫຼ້ຽຫ້ຽນຈະຖືກທົບທວນຄ່າເສື່ອມມູນຄ່າ. ບໍ່ວ່າຈະເປັນເຫດການ ຫຼື ສະຖານະການມີການປ່ຽນແປງລາຄາຕາມບັນຊີບໍ່ສາມາດເກັບກູ້ຄືນໄດ້. ຄ່າເສື່ອມມູນຄ່າຮັບຮູ້ສຳລັບຈຳນວນເງິນຍັງເຫຼືອໃນບັນຊີຂອງຊັບສິນຫຼາຍກວ່າມູນຄ່າຈຳນວນເງິນທີ່ສາມາດເກັບກູ້ຄືນໄດ້ເຊິ່ງສູງກວ່າມູນຄ່າຍຸດຕິທຳ ຂອງຊັບສິນຫັກຄ່າໃຊ້ຈ່າຍໃນການຂາຍອອກ ແລະ ມູນຄ່າການໃຊ້ ເພື່ອຈຸດປະສົງປະເມີນຄ່າເສື່ອມມູນຄ່າ, ຊັບສິນຖືກຈັດເປັນກຸ່ມໃນລະດັບຕ່ຳສຸດ ທີ່ສາມາດຈຳແນກການສ້າງກະແສເງິນສົດລວມ. ຊັບສິນອື່ນໆ ທີ່ບໍ່ແມ່ນການເງິນນອກຈາກຄ່ານິຍົມຈະຖືກກວດຄືນ ເພື່ອເປັນໄປໄດ້ວ່າອາດຈະມີການເກັບຄືນຄ່າສູນເສຍມູນຄ່າໃນແຕ່ລະຮອບເວລາລາຍງານ.

2 ນະໂຍບາຍການບັນຊີ (ຕໍ່)

2.7. ເງິນກູ້

ເງິນກູ້ ຈະຖືກຮັບຮູ້ຕາມມູນຄ່າກູ້ຍືມເບື້ອງຕົ້ນ, ບວກຄ່າໃຊ້ຈ່າຍສຸດທິທີ່ເກີດຂຶ້ນຕິດພັນກັບເງິນກູ້, ຖ້າມີ.

ເງິນກູ້ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ບໍລິສັດບໍ່ມີເງື່ອນໄຂໂດຍການເຍື້ອນຊຳລະໜີ້ສິນຢ່າງໜ້ອຍ 12 ເດືອນ ຫຼັງຈາກ ມື້ປິດບັນຊີພາຍໃນປີ.

2.8. ຮຸ້ນກູ້

ຮຸ້ນກູ້ຈະຖືກຮັບຮູ້ຕາມມູນຄ່າກູ້ຍືມເບື້ອງຕົ້ນໂດຍການຫັກຕົ້ນທຶນການຈັດຫາ ຫຼັງຈາກນັ້ນຮຸ້ນກູ້ຈະຖືກຮັບຮູ້ຕາມວິທີຕົ້ດ ຕົ້ນທຶນຈ່າຍສ່ວນຕ່າງລະຫວ່າງຜົນຕອບແທນ (ຫັກດ້ວຍຕົ້ນທຶນການດຳເນີນການ) ເມື່ອທຽບກັບມູນຄ່າທີ່ຈ່າຍຄືນ ຈະຖືກ ຮັບຮູ້ເປັນກຳໄລ ຫຼື ຂາດທຶນ ຕະຫຼອດຊ່ວງເວລາການກູ້ຍືມນັ້ນໂດຍໃຊ້ວິທີອັດຕາດອກເບ້ຍທີ່ແທ້ຈິງ.

ຕົ້ນທຶນໃນການອອກຮຸ້ນກູ້ ເປັນຄ່າໃຊ້ຈ່າຍທີ່ກ່ຽວຂ້ອງກັບການອອກຮຸ້ນກູ້ໂດຍກົງ ເຊິ່ງລວມຄ່າທີ່ປຶກສາທາງການເງິນ, ຄ່າ ທີ່ປຶກສາທາງກົດໝາຍ ແລະ ຄ່າທຳນຽມຕ່າງໆ. ຄ່າໃຊ້ຈ່າຍເຫຼົ່ານີ້ ແມ່ນໄດ້ບັນທຶກໃນບັນຊີຊັບສິນລໍຖ້າຕັດຈຳໜ່າຍ ແລະ ຈະຕັດຈຳໜ່າຍ ແລະ ຮັບຮູ້ໃນບົດລາຍງານຜົນໄດ້ຮັບໂດຍອີງຕາມອາຍຸຂອງຮຸ້ນກູ້.

ຮຸ້ນກູ້ທີ່ຖືກຈັດປະເພດເປັນໜີ້ສິນໝຸນວຽນ ບໍລິສັດບໍ່ມີເງື່ອນໄຂພຽງພໍໃນການຊຳລະໜີ້ຈະສາມາດເລື່ອນການຊຳລະໜີ້ ອອກໄປອີກເປັນເວລາຢ່າງໜ້ອຍ 12 ເດືອນ ນັບແຕ່ມື້ອອກບົດລາຍງານ.

2.9. ສັນຍາເຊົ່າ - ບໍລິສັດເປັນຜູ້ເຊົ່າ

ສັນຍາເຊົ່າບໍ່ໄດ້ໂອນຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນໃຫ້ແກ່ຜູ້ເຊົ່າ, ຈຶ່ງຈຳແນກເປັນສັນຍາເຊົ່າດຳເນີນການ. ການ ຊຳລະພາຍໃຕ້ສັນຍາເຊົ່າດຳເນີນການ (ລົບທຸກລາຍການທີ່ໄດ້ຮັບຈາກຜູ້ໃຫ້ເຊົ່າ) ໄດ້ຈັດເປັນລາຍຈ່າຍໃນໃບລາຍງານຜົນໄດ້ ຮັບບົນພື້ນຖານວິທີແບບສະເໝີຕົວຕະຫຼອດໄລຍະອາຍຸສັນຍາເຊົ່າ.

ເມື່ອສັນຍາເຊົ່າ ມີການຍົກເລີກກ່ອນໄລຍະການເຊົ່າສິ້ນສຸດ, ຈຳນວນເງິນຄ່າເຊົ່າ ແລະ ຄ່າປັບໃໝຕ່າງໆຕ້ອງໄດ້ຈ່າຍໃຫ້ກັບ ຜູ້ໃຫ້ເຊົ່າ ແລະ ຮັບຮູ້ເປັນລາຍຈ່າຍໃນເວລາທີ່ມີການຍົກເລີກ.

2.10. ຜົນປະໂຫຍດພະນັກງານ

ເງິນແຮສຳລັບຜົນປະໂຫຍດຂອງພະນັກງານ ແມ່ນບໍ່ໄດ້ຕັ້ງໄວ້ໃນແຕ່ລະປີ. ໜີ້ສິນໄດ້ບັນທຶກໄວ້ໃນໃບລາຍງານຖານະການ ເງິນ ແລະ ລາຍຈ່າຍທີ່ກ່ຽວຂ້ອງບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ ອີງຕາມຈຳນວນຕົວຈິງໃນເວລາທີ່ພະນັກງານລາອອກ ຫຼື ອອກບຳນານ.

2.11. ເງິນແຮ

ເງິນແຮຖືກບັນທຶກບັນຊີ ເມື່ອກຸ່ມບໍລິສັດມີພາລະຜູກພັນທາງກົດໝາຍໃນປັດຈຸບັນ ຫຼື ພັນທະໜີ້ສິນ, ເຊິ່ງເກີດຈາກ ເຫດການຜ່ານມາ ເປັນໄປໄດ້ວ່າແຫຼ່ງຊັບພະຍາກອນຈະໄຫຼອອກ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້ ຍົກເວັ້ນເງິນແຮເພື່ອຜົນປະໂຫຍດຂອງພະນັກງານ ຕາມທີ່ໄດ້ອະທິບາຍໃນ 2.10.

2 ນະໂຍບາຍການບັນຊີ (ຕໍ່)

2.12. ເງິນສົດ ແລະ ທຽບເທົ່າເງິນສົດ

ເງິນສົດ ແລະ ທຽບເທົ່າເງິນສົດປະກອບດ້ວຍເງິນສົດໃນມື, ເງິນຝາກໄດ້ຈັດຂຶ້ນຢູ່ກັບການຮຽກເກັບກັບທະນາຄານ, ແຕ່ບໍ່ລວມເຖິງເງິນຝາກກັບທະນາຄານທີ່ເຖິງກຳນົດ ແລະ ອື່ນໆ ໃນໄລຍະສັ້ນການລົງທຶນສະພາບຄ່ອງສູງມີອາຍຸສາມເດືອນ ຫຼື ໜ້ອຍຈາກວັນທີຂອງການຊື້ກິດຈະການ.

2.13. ເງິນລົງທຶນໄລຍະສັ້ນ

ເງິນລົງທຶນໄລຍະສັ້ນເປັນເງິນລົງທຶນທີ່ຝາກຈົນຄົບກຳນົດໂດຍບັນທຶກບັນຊີຕາມຈຳນວນທີ່ໄດ້ຈ່າຍຈິງ ດອກເບ້ຍຈະຖືກຮັບຮູ້ຕາມໄລຍະເວລາຂອງການຝາກເງິນ.

2.14. ການຮັບຮູ້ລາຍຮັບ

ລາຍຮັບສ່ວນໃຫຍ່ແມ່ນປະກອບດ້ວຍລາຍຮັບຈາກການຂາຍໄຟຟ້າ ແລະ ບໍລິການ, ເຊິ່ງລວມຄ່າທຳນຽມການຕິດຕັ້ງ ແລະ ລາຍຮັບເງິນປັນຜົນ.

ຂາຍໄຟຟ້າ

ບັນຊີກຸ່ມບໍລິສັດສຳລັບການຂາຍໃນເວລາທີ:

- ສັນຍາຊື້-ຂາຍໄຟຟ້າລາວ ("PPA") ຫຼື ສັນຍາທີ່ຄ້າຍຄືກັນຢຸ່
- ການສົ່ງກະແສໄຟຟ້າ
- ລາຄາປະລິມານໄດ້ຮັບການສ້າງຕັ້ງຂຶ້ນ ຫຼື ສາມາດໄດ້ຮັບການກຳນົດ;
- ລາຍຮັບທີ່ກ່ຽວຂ້ອງແມ່ນຈະໄດ້ຮັບການຟື້ນຟູ.

ການສົ່ງໃຊ້ເວລາສະຖານທີ່ເມື່ອຄວາມສ່ຽງ ແລະ ຜົນປະໂຫຍດທີ່ກ່ຽວຂ້ອງກັບການເປັນເຈົ້າຂອງໄດ້ຖືກໂອນໃຫ້ກັບຜູ້ຊື້. ໂດຍທົ່ວໄປ ລາຍຮັບຈາກການຂາຍກະແສໄຟຟ້າຄິດໄລ່ຈາກໜ່ວຍໄຟໃນຈຸດນຳສົ່ງຄູນອັດຕາທີ່ຕົກລົງກັນ ແລະ ກຳນົດໃນສັນຍາຊື້ກະແສໄຟຟ້າ.

ບໍລິການອື່ນໆ

ການບໍລິການອື່ນໆ ໂດຍສ່ວນໃຫຍ່ແລ້ວປະກອບມີຄ່າຕິດຕັ້ງ, ເຊິ່ງຮັບຮູ້ການລົງບັນຊີ ເມື່ອການບໍລິການສຳເລັດ.

ລາຍໄດ້ເງິນປັນຜົນ

ລາຍໄດ້ຈາກເງິນປັນຜົນໄດ້ຖືກຮັບຮູ້ການລົງບັນຊີ ເມື່ອເກີດສິດທີ່ໄດ້ຮັບ, ເຊິ່ງໂດຍປົກກະຕິແລ້ວຈະມີການຮັບຮູ້ ເມື່ອຜູ້ຖືຮຸ້ນມີສິດທີ່ຈະໄດ້ຮັບການຊຳລະ.

2 ນະໂຍບາຍການບັນຊີ (ຕໍ່)

2.15. ຕາສານອະນຸພັນທາງການເງິນ

ການຄ້ຳມສະກຸນເງິນ

ທຸລະກຳສັນຍາແລກປ່ຽນສະກຸນເງິນ ແມ່ນບັນທຶກໜີ້ຕ້ອງຮັບຈາກສັນຍາແລກປ່ຽນສະກຸນເງິນນຳໃຊ້ອັດຕາຈຸດ ແລະ ສັນຍາແລກປ່ຽນເຈົ້າໜີ້ຕາມອັດຕາທີ່ໄດ້ຕົກລົງກັນໃນຂໍ້ຕົກລົງແລກປ່ຽນເງິນຕາ. ຄວາມແຕກຕ່າງກັນຈະໄດ້ຮັບການນຳສະເໜີເປັນມູນຄ່າເພີ່ມ ຫຼື ສ່ວນຫຼຸດໃນໃບລາຍງານຖານະການເງິນ. ສ່ວນເພີ່ມ ຫຼື ສ່ວນຫຼຸດ ດັ່ງກ່າວຈະຖືກຕັດຈ່າຍໃນໃບລາຍງານຜົນໄດ້ຮັບໂດຍວິທີສະໜ່ຳສະເໝີຕະຫຼອດອາຍຸຂອງສັນຍາ.

ສັນຍາແລກປ່ຽນອັດຕາດອກເບ້ຍ Collar

ສັນຍາແລກປ່ຽນອັດຕາດອກເບ້ຍ collar ແມ່ນນຳໃຊ້ອັດຕາທີ່ໄດ້ຕົກລົງກັນຕັ້ງໄວ້ ແລະ ຮັບຮູ້ໃນກຳໄລ ຫຼື ຂາດທຶນໃນງວດທີ່ເກີດລາຍການ.

2.16. ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງໂດຍກົງ ຫຼື ທາງອ້ອມໂດຍຜ່ານໜຶ່ງ ຫຼື ຫຼາຍຕົວກາງ, ຄວບຄຸມ ຫຼື ຖືກຄວບຄຸມ ໂດຍພາຍໃຕ້ການຄວບຄຸມດຽວກັນກັບກຸ່ມບໍລິສັດ. ລວມທັງບໍລິສັດທີ່ຖືຮຸ້ນ, ບໍລິສັດລູກ ແລະ ອື່ນໆທີ່ກ່ຽວຂ້ອງກັບ ບໍລິສັດ. ວິສາຫະກິດຂາຮຸ້ນ ແລະ ບຸກຄົນທີ່ເປັນເຈົ້າຂອງ, ໂດຍກົງ ຫຼື ທາງອ້ອມ, ມີຄວາມສົນໃຈໃນການລົງຄະແນນສຽງ ຂອງບໍລິສັດທີ່ເຮັດໃຫ້ເຂົາເຈົ້າມີອິດທິພົນສຳຄັນໃນວິສາຫະກິດ, ຜູ້ບໍລິຫານທີ່ສຳຄັນ, ບຸກຄົນ, ລວມທັງກຳມະການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກທີ່ໃກ້ຊິດຂອງຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດທີ່ກ່ຽວຂ້ອງກັບບຸກຄົນເຫຼົ່ານີ້ຍັງປະກອບກິດຈະການທີ່ກ່ຽວຂ້ອງ.

ໃນການພິຈາລະນາຄວາມສຳພັນລະຫວ່າງບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ ເຊິ່ງອາດມີຂຶ້ນໄດ້ຕ້ອງຄຳນຶງເຖິງລາຍລະອຽດຂອງຄວາມສຳພັນຫຼາຍກວ່າຮູບແບບຄວາມສຳພັນທາງກົດໝາຍ.

2.17. ພາກສ່ວນການດຳເນີນງານ

ພາກສ່ວນການດຳເນີນງານແມ່ນມີການລາຍງານ ໃນລັກສະນະທີ່ສອດຄ່ອງກັບການລາຍງານພາຍໃນທີ່ສະໜອງໃຫ້ແກ່ຫົວໜ້າຝ່າຍດຳເນີນງານຕັດສິນໃຈ (CODM). ຫົວໜ້າຝ່າຍດຳເນີນງານຕັດສິນໃຈ ເປັນຜູ້ທີ່ຮັບຜິດຊອບໃນການຈັດສັນຊັບພະຍາກອນ ແລະ ການປະເມີນຜົນໃນສ່ວນການດຳເນີນງານ ທີ່ໄດ້ຮັບການລະບຸວ່າເປັນຜູ້ອຳນວຍການໃຫຍ່ ("CEO") ແລະ ຜູ້ອຳນວຍການໃຫຍ່ຝ່າຍການເງິນ ("CFO") ທີ່ຕັດສິນໃຈທາງຍຸດທະສາດ.

2.18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ

ຕົ້ນທຶນຂອງຊອຟແວຣ໌ຄອມພິວເຕີທີ່ກ່ຽວຂ້ອງກັບການບຳລຸງຮັກສາບັນດາໂປຣແກຣມໄດ້ຖືກຮັບຮູ້ເປັນຄ່າໃຊ້ຈ່າຍ ເມື່ອເກີດຂຶ້ນ. ຄ່າໃຊ້ຈ່າຍໃນການພັດທະນາທີ່ມີຄວາມກ່ຽວຂ້ອງໂດຍກົງກັບການອອກແບບ ແລະ ການທົດສອບລະບຸ.

ຄ່າໃຊ້ຈ່າຍໂດຍກົງທີ່ຈະເປັນສ່ວນໜຶ່ງຂອງຊອຟແວຣ໌ທີ່ປະກອບມີຄ່າໃຊ້ຈ່າຍການພັດທະນາຊອຟແວຣ໌, ຄ່າແຮງງານ ແລະ ສ່ວນທີ່ເໝາະສົມຂອງຄ່າໃຊ້ຈ່າຍທີ່ກ່ຽວຂ້ອງ. ຄ່າໃຊ້ຈ່າຍການພັດທະນາອື່ນໆທີ່ບໍ່ເຂົ້າເງື່ອນໄຂເຫຼົ່ານີ້ ແມ່ນໄດ້ຮັບຮູ້ເປັນຄ່າໃຊ້ຈ່າຍເມື່ອເກີດຂຶ້ນ. ຕົ້ນທຶນໃນການພັດທະນາໃນເມື່ອກ່ອນບໍ່ໄດ້ຮັບຮູ້ເປັນລາຍຈ່າຍ ແລະ ບໍ່ໄດ້ບັນທຶກຮັບຮູ້ເປັນຊັບສິນໃນໄລຍະເວລາຕໍ່ໄປ.

2 ນະໂຍບາຍການບັນຊີ (ຕໍ່)

2.18. ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ຕໍ່)

ຄ່າໃຊ້ຈ່າຍໃນການພັດທະນາຊອຟແວຣ໌ຄອມພິວເຕີຮັບຮູ້ເປັນຊັບສິນ ແລະ ຕັດຈ່າຍຕາມອາຍຸຄາດຄະເນການໃຊ້ງານ.

2.19. ອາກອນກຳໄລ

ກຸ່ມບໍລິສັດໄດ້ບັນທຶກອາກອນກຳໄລພາຍໃນກິດເກນຄ້າງຈ່າຍ ກຸ່ມບໍລິສັດບໍ່ໄດ້ບັນທຶກອາກອນກຳໄລຕ້ອງຈ່າຍ ຫຼື ຕ້ອງຮັບ ໃນອະນາຄົດເຊິ່ງເກີດຈາກສ່ວນຜິດຊົ່ວຄາວ. ລາຍຈ່າຍອາກອນລາຍໄດ້ແມ່ນຮັບຮູ້ຈາກຜົນການປະຕິບັດການສຳລັບປີ ຫຼັງຈາກປັບຄ່າໃຊ້ຈ່າຍທີ່ຫັກເປັນລາຍຈ່າຍບໍ່ໄດ້ ແລະ ລາຍການອື່ນໆທີ່ກ່ຽວຂ້ອງກັບກົດໝາຍອາກອນ ແລະ ອັດຕາ ອາກອນ.

ໃນ ສປປ ລາວ ການແຈ້ງອາກອນກຳໄລຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງຢ່າງສະໝ່ຳສະເໝີ. ນອກ ຈາກນີ້, ບັນຫາເລື່ອງອາກອນເກີດຈາກການທົບທວນອາດຕ້ອງມີຄຳຕັດສິນ ແລະ ການຕີຄວາມໂດຍພາກສ່ວນຕ່າງໆ ທີ່ ກ່ຽວຂ້ອງໃນຫຼາຍດ້ານ, ການກວດສອບດັ່ງກ່າວ ອາດເປັນຜົນເຮັດໃຫ້ເກີດການຊຳລະອາກອນເພີ່ມຕື່ມ ຫຼື ຮັບຄືນໃນ ຄວາມຈຳເປັນ, ເຊິ່ງຈະສົ່ງຜົນໃຫ້ການຈ່າຍເງິນ ຫຼື ການຄືນອາກອນລາຍໄດ້ ຮັບຮູ້ເປັນຄ່າໃຊ້ຈ່າຍອາກອນກຳໄລ ໃນປີທີ່ມີ ການກວດກາໄດ້ສຳເລັດ.

3 ເນື້ອໃນສຳຄັນໃນລະຫວ່າງປີ

ການລະບາດຂອງພະຍາດ COVID-19

ການຕິດເຊື້ອພະຍາດ COVID-19 ໃນ ສປປ ລາວ ໄດ້ມີການເພີ່ມຂຶ້ນຢ່າງເປັນສາລະສຳຄັນໃນຊ່ວງ ເດືອນ ເມສາ 2021 ຈົນນຳໄປ ສູ່ການປິດນະຄອນຫຼວງວຽງຈັນ ແລະ ທຸກແຂວງໃນ ສປປ ລາວ ຕັ້ງແຕ່ວັນທີ 21 ເມສາ 2021 ລັດຖະບານໄດ້ອອກມາດຕະການທີ່ ເຂັ້ມງວດຂຶ້ນ ເພື່ອຄວບຄຸມການລະບາດຮອບສອງຂອງພະຍາດນີ້, ເຊິ່ງສົ່ງຜົນກະທົບຕໍ່ກິດຈະກຳທາງເສດຖະກິດໃນທຸກໆທຸລະກິດ.

ຜູ້ບໍລິຫານໄດ້ວິເຄາະຜົນກະທົບຈາກຄຳສັ່ງດັ່ງກ່າວກັບບັນດາທຸລະກິດໃນກຸ່ມ, ເນື່ອງຈາກບັນດາເຂື່ອນຕ່າງໆໄດ້ຜະລິດ ແລະ ຂາຍ ໄຟຟ້າແລ້ວ ແລະ ຍັງຄົງໄດ້ຜະລິດ ແລະ ຂາຍໄຟຟ້າຢູ່ ໃນອັນທີ່ລາຍງານ. ຜູ້ບໍລິຫານພິຈາລະນາວ່າ ຈາກສະພາບແວດລ້ອມຂອງ ສປປ ລາວ, ເຊິ່ງມີຈຳນວນຜູ້ຕິດເຊື້ອຈຳກັດ ແລະ ຍັງສາມາດຄວບຄຸມການຕິດເຊື້ອໄດ້ດີ. ບັນຫາດັ່ງກ່າວນີ້, ຈຶ່ງບໍ່ໄດ້ມີການກະທົບຕໍ່ ກັບທຸລະກິດຂອງເຂົາເຈົ້າ.

ໃນປີນີ້, ຜູ້ບໍລິຫານໄດ້ພິຈາລະນາວ່າ ຈະບໍ່ມີຜົນກະທົບທີ່ເປັນສາລະສຳຄັນ ຈາກການລະບາດພະຍາດ COVID-19.

4 ການບໍລິຫານຄວາມສ່ຽງທາງດ້ານການເງິນ

ປັດໃຈຄວາມສ່ຽງທາງດ້ານການເງິນ

ການດຳເນີນທຸລະກິດຂອງກຸ່ມບໍລິສັດຈະປະເຊີນກັບຄວາມສ່ຽງດ້ານການເງິນທີ່ສຳຄັນເຊັ່ນ: ຜົນກະທົບຈາກອັດຕາແລກປ່ຽນເງິນຕາ ອັດຕາດອກເບ້ຍ, ຄວາມສ່ຽງທາງດ້ານສິນເຊື່ອ ແລະ ຄວາມສ່ຽງດ້ານສະພາບຄ່ອງ.

ການຄຸ້ມຄອງຄວາມສ່ຽງໂດຍລວມຂອງກຸ່ມບໍລິສັດ ທີ່ເນັ້ນໃສ່ຫຼຸດຜ່ອນຄວາມຜິດພາດ ຕໍ່ຜົນກະທົບການດຳເນີນງານດ້ານການເງິນ ຂອງບໍລິສັດ ໂດຍພິຈາລະນາຄວາມຄຸ້ມຄ່າຂອງຕົ້ນທຶນທີ່ຕ້ອງລົງທຶນ.

ການບໍລິຫານຄວາມສ່ຽງ ໂດຍທົ່ວໄປຢູ່ພາຍໃຕ້ອຳນາດຂອງຄະນະຜູ້ບໍລິຫານພາຍໃຕ້ການຊີ້ນຳ ນຳພາໂດຍສະພາບໍລິຫານ.

ຄວາມສ່ຽງທາງດ້ານອັດຕາແລກປ່ຽນ

ກຸ່ມບໍລິສັດ ດຳເນີນທຸລະກິດພາຍໃນປະເທດ ແຕ່ຍັງມີຄວາມສ່ຽງທາງດ້ານອັດຕາແລກປ່ຽນໃນສະກຸນເງິນໂດລາສະຫະລັດ, ເງິນເຢັນ ຍີ່ປຸ່ນ ແລະ ເງິນບາດໄທ. ຄວາມສ່ຽງຈາກອັດຕາແລກປ່ຽນເກີດຈາກການໂອນເງິນກູ້ ແລະ ຮຸ້ນກູ້ທີ່ເປັນເງິນຕາຕ່າງປະເທດ ແລະ ຈາກການຊື້ເຄື່ອງຈັກ ແລະ ອຸປະກອນຕ່າງໆທີ່ເປັນສະກຸນເງິນຕາຕ່າງປະເທດ.

ກຸ່ມບໍລິສັດໃຊ້ສັນຍາ swap ເພື່ອປ້ອງກັນຄວາມສ່ຽງສຳລັບອັດຕາແລກປ່ຽນ ເຊິ່ງອາດຈະເກີດຂຶ້ນສຳລັບຮຸ້ນກູ້ຈຳນວນ 3.000 ລ້ານ ບາດ (ໃນບົດອະທິບາຍ 16).

ວັນທີ 31 ທັນວາ 2021, ນອກຈາກທີ່ໄດ້ກ່າວມາຂ້າງເທິງນັ້ນ ຜູ້ບໍລິຫານບໍ່ມີນະໂຍບາຍເປັນທາງການ ແລະ ບໍ່ໄດ້ໃຊ້ເຄື່ອງມືທາງ ດ້ານການເງິນ ຫຼື ຕາສານອະນຸພັນ (Derivative) ເພື່ອທີ່ຈະຄອບຄຸມຄວາມສ່ຽງທາງດ້ານອັດຕາແລກປ່ຽນເງິນຕາຕ່າງປະເທດ ສຳລັບເງິນກູ້ຢືມ. ເຖິງຢ່າງໃດກໍຕາມ, ຜູ້ບໍລິຫານໄດ້ຕິດຕາມການເຄື່ອນໄຫວຂອງອັດຕາແລກປ່ຽນເງິນຕາຕ່າງປະເທດຢ່າງທັນເວລາ ແລະ ບາງທີຈະນຳໃຊ້ເຄື່ອງມືທາງດ້ານການເງິນ ຫຼື ອະນຸພັນເພື່ອຈັດການກັບຄວາມສ່ຽງຕ່າງໆ ຖ້າຜູ້ບໍລິຫານຫາກເຫັນວ່າຈຳເປັນ. ດັ່ງນັ້ນ, ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດນັ້ນ, ອາດສົ່ງຜົນກະທົບທີ່ມີຄວາມສຳຄັນໂດຍກຽບຖານ ຕໍ່ການດຳເນີນທຸລະກິດ, ຜົນການປະຕິບັດງານ, ເງື່ອນໄຂທາງດ້ານການເງິນ ແລະ ອື່ນໆ.

ຄວາມສ່ຽງທາງດ້ານອັດຕາດອກເບ້ຍ

ຄວາມສ່ຽງຈາກອັດຕາດອກເບ້ຍເກີດຈາກການກູ້ຢືມ ແລະ ຮຸ້ນກູ້.

ເງິນກູ້ຢືມທີ່ອອກໃນອັດຕາທີ່ຜັນແປ ເຮັດໃຫ້ບໍລິສັດມີຄວາມສ່ຽງຈາກອັດຕາດອກເບ້ຍ. ກຸ່ມບໍລິສັດວິໄຈຄວາມສ່ຽງຈາກອັດຕາ ດອກເບ້ຍໄວ້ຢ່າງທັນການ ແລະ ຍັງບໍ່ໄດ້ຕັດສິນໃຈໃຊ້ເຄື່ອງມືທາງດ້ານການເງິນ ຫຼື ຕາສານອະນຸພັນເພື່ອບໍລິຫານຄວາມສ່ຽງນັ້ນ.

ຮຸ້ນກູ້ທີ່ອອກເປັນເງິນບາດ ແລະ ເງິນໂດລາສະຫະລັດ ກັບອັດຕາດອກເບ້ຍຄົງທີ່. ອະນຸພັນທາງການເງິນເຮັດຂຶ້ນມາ ເພື່ອຈຳກັດ ຄວາມສ່ຽງຂອງອັດຕາດອກເບ້ຍ. ບໍລິສັດເຮັດສັນຍາອັດຕາຄວາມສ່ຽງດ້ານດອກເບ້ຍ ໂດຍປ່ຽນຈາກອັດຕາດອກເບ້ຍຄົງທີ່ເປັນ ອັດຕາດອກເບ້ຍລອຍຕົວ ສຳລັບຈຳນວນດອກເບ້ຍທັງໝົດທີ່ເກີດຂຶ້ນຈາກຮຸ້ນກູ້.

4 ການບໍລິຫານຄວາມສ່ຽງທາງດ້ານການເງິນ (ຕໍ່)

ວັນທີ 31 ທັນວາ 2021, ບໍລິສັດມີສັນຍາແລກປ່ຽນອັດຕາດອກເບ້ຍ Swap ດັ່ງນີ້:

ສັນຍາແລກປ່ຽນອັດຕາດອກເບ້ຍ

	ເງິນຕົ້ນ			ອັດຕາດອກເບ້ຍ (ຕໍ່ປີ)		
ຈຳນວນ	ຈຳນວນທີ່ອອກຮຸ້ນກູ້ (ລ້ານບາດ)	Swapped ຈຳນວນ (ລ້ານໂດລາ)	ໄລຍະການຊຳລະເງິນ	ອັດຕາດອກເບ້ຍເດີມ	ອັດຕາດອກເບ້ຍSwap	ໄລຍະການຊຳລະເງິນ
1	3.000	91,18	12 ທັນວາ 2024	5,45%	Libor 6 ເດືອນ+ 3,795%	ສອງຄັ້ງຕໍ່ປີໂດຍເລີ່ມຈາກ 12 ມິຖຸນາ 2015 ເຖິງ 12 ທັນວາ 2024
ລວມ	**3.000**	**91,18**				

ສັນຍາແລກປ່ຽນອັດຕາດອກເບ້ຍ collar

ກຸ່ມບໍລິສັດໄດ້ເຮັດສັນຍາປ້ອງກັນຄວາມສ່ຽງຈາກອັດຕາດອກເບ້ຍ collar ກັບສະຖາບັນການເງິນໄທ. ໂດຍມີຈຸດປະສົງເພື່ອບໍລິຫານຄວາມສ່ຽງຈາກຄວາມຜັນຜວນຂອງອັດຕາດອກເບ້ຍຂອງຮຸ້ນກູ້ ໂດຍມີວົງເງິນບໍ່ເກີນ 91,18 ລ້ານໂດລາ, ເຊິ່ງມີອັດຕາດອກເບ້ຍອ້າງອີງຄື LIBOR 6 ເດືອນ ("LIBOR") ໂດຍບໍລິສັດຈະຈ່າຍ ແລະ ຮັບດອກເບ້ຍ ຕາມທີ່ລະບຸໄວ້ໃນສັນຍາເປັນສອງຄັ້ງຕໍ່ປີ. ສັນຍາຈະໝົດອາຍຸລົງໃນເດືອນ ທັນວາ 2024. ຄູ່ສັນຍາຮຽກຮ້ອງໃຫ້ບໍລິສັດຈ່າຍເງິນລ່ວງໜ້າ, ເຊິ່ງຈະຊຳລະຕາມວັນທີ່ຊຳລະ.

ຄວາມສ່ຽງທາງດ້ານສິນເຊື່ອ

ກຸ່ມບໍລິສັດຂາຍຜົນຜະລິດໃຫ້ກັບ ຟຟລ ເຊິ່ງເປັນຜູ້ຖືຮຸ້ນຫຼັກ ແລະ ຟຟລ ເປັນວິສາຫະກິດຂອງລັດ ທີ່ເຄື່ອນໄຫວພາຍໃຕ້ການຄຸ້ມຄອງຂອງກະຊວງການເງິນ ແລະ ເປັນລູກຄ້າລາຍໃຫຍ່ລາຍດຽວ. ຄວາມສ່ຽງໄດ້ຖືກພິຈາລະນາຢ່າງເຂັ້ມງວດ ຫຼື ຂຶ້ນກັບລູກຄ້າລາຍດຽວ, ເຊິ່ງຜູ້ບໍລິຫານໄດ້ມີການປະເມີນ ແລະ ສາມາດຄວບຄຸມໄດ້.

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ແມ່ນຝາກໄວ້ກັບທະນາຄານທີ່ມີຊື່ສຽງ ແລະ ມີຄວາມໜ້າເຊື່ອຖື.

ຄວາມສ່ຽງທາງດ້ານສະພາບຄ່ອງ

ການຄຸ້ມຄອງຄວາມສ່ຽງມີຄວາມຮອບຄອບຢ່າງພຽງພໍໃນການນຳໃຊ້ເງິນສົດລົງທຶນໄລຍະສັ້ນ. ຜູ້ບໍລິຫານຂອງກຸ່ມບໍລິສັດໄດ້ດຳເນີນການວາງແຜນການກະແສເງິນສົດ ເພື່ອຊ່ວຍໃນການຄຸ້ມຄອງຄວາມສ່ຽງ ແລະ ໝັ້ນໃຈວ່າມີສະພາບຄ່ອງຢ່າງພຽງພໍສຳລັບການດຳເນີນການໄລຍະສັ້ນທີ່ຈຳເປັນລວມທັງການຊຳລະເງິນກູ້ຢືມຄືນ ແລະ ການວາງແຜນເງິນລົງທຶນໄລຍະຍາວ.

ການບໍລິຫານຄວາມສ່ຽງຂອງທຶນ

ວັດຖຸປະສົງໃນການບໍລິຫານເງິນທຶນ ຂອງບໍລິສັດໃຫ້ຢູ່ໃນລະດັບປອດໄພເຮັດໃຫ້ມີຄວາມສາມາດດຳເນີນງານຢ່າງຕໍ່ເນື່ອງຈາກແນໃສ່ຊຳລະຄືນຜົນປະໂຫຍດໃຫ້ແກ່ຜູ້ຖືຮຸ້ນ ແລະ ຜູ້ມີສ່ວນຮ່ວມອື່ນໆ ແລະ ສືບຕໍ່ຮັກສາໂຄງສ້າງຂອງທຶນ ຫຼຸດຜ່ອນຄ່າໃຊ້ຈ່າຍຂອງທຶນ. ເພື່ອຮັກສາ ຫຼື ປັບປຸງໂຄງສ້າງເງິນທຶນ ເພື່ອສະໜັບສະໜຸນການດຳເນີນງານ ແລະ ແຜນການລົງທຶນ, ອາດຢືມເງິນທຶນໃໝ່ ອອກຮຸ້ນໃໝ່ ຊອກຫາເງິນກູ້ຢືມໃໝ່ແທນແຫຼ່ງເງິນກູ້ເກົ່າ ແລະ ດັດແກ້ຈຳນວນເງິນປັນຜົນທີ່ໄດ້ຈ່າຍໃຫ້ຜູ້ຖືຮຸ້ນໃນອະນາຄົດ.

5 ຂໍ້ມູນຈຳແນກຕາມສ່ວນງານ

ບໍລິສັດມີ 2 ພາກສ່ວນລາຍງານຕາມທີ່ໄດ້ອະທິບາຍໄວ້ດ້ານລຸ່ມ, ເຊິ່ງເປັນໜ່ວຍງານດ້ານຍຸດທະສາດຂອງບໍລິສັດ, ໜ່ວຍງານດ້ານຍຸດທະສາດ ມີຂະໜາດແຕກຕ່າງກັນຂອງທຸລະກິດ.

- ສ່ວນທີ 1: ການຜະລິດໄຟຟ້າ
- ສ່ວນທີ 2: ທຸລະກິດອື່ນໆ

ຂໍ້ມູນກ່ຽວກັບຜົນການດຳເນີນງານຂອງແຕ່ລະສ່ວນລາຍງານຈະຖືກລວມຢູ່ດ້ານລຸ່ມ. ປະສິດທິພາບການປະຕິບັດງານຈະວັດຈາກກຳໄລຂອງສ່ວນງານ, ລວມໄວ້ໃນບົດລາຍງານບໍລິຫານພາຍໃນທີ່ໄດ້ຮັບການກວດສອບໂດຍ CODM ກຳໄລຂອງສ່ວນງານ ເຄີຍຖືກໃຊ້ວັດແທກປະສິດທິພາບການປະຕິບັດງານ, ຊຶ່ງຜູ້ບໍລິຫານເຊື່ອວ່າຂໍ້ມູນດັ່ງກ່າວ ເປັນທີ່ກ່ຽວຂ້ອງຫຼາຍທີ່ສຸດໃນການປະເມີນຜົນການບາງສ່ວນເມື່ອທຽບກັບວິສາຫະກິດອື່ນໆ ທີ່ເຮັດວຽກໃນອຸດສາຫະກຳເຫຼົ່ານີ້.

	ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021			
	ສ່ວນທີ1	**ສ່ວນທີ2**	**ຕັດອອກ**	**ລວມ**
		ລ້ານກີບ		
ລາຍຮັບຈາກການຂາຍ	1.196.664	-	-	1.196.664
ຕົ້ນທຶນໃນການຂາຍ	(585.971)	-	-	(585.971)
ຜົນໄດ້ຮັບ	**610.693**	-	-	**610.693**
ລາຍຮັບອື່ນໆ	55.292	-	-	55.292
ລາຍຈ່າຍໃນການດຳເນີນງານ ແລະ ຄ່າບໍລິຫານ	(154.090)	-	-	(154.090)
ຂາດທຶນຈາກອັດຕາແລກປ່ຽນ, ສຸດທິ	(612.913)	-	-	(612.913)
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	960.715	-	960.715
ກຳໄລຈາກການດຳເນີນງານ	**(101.018)**	**960.715**	-	**(859.697)**
ລາຍຈ່າຍທາງການເງິນ	(855.815)	-	-	(855.815)
ກຳໄລ(ຂາດທຶນ)ສຸດທິກ່ອນຈ່າຍອາກອນກຳໄລ	(956.833)	960.715	-	3.882
ລາຍຈ່າຍອາກອນກຳໄລ	-	-	-	-
ກຳໄລ(ຂາດທຶນ) ສຸດທິໃນປີ	**(956.833)**	**960.715**	-	**3.882**

5 ຂໍ້ມູນຈຳແນກຕາມສ່ວນງານ (ຕໍ່)

	ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020			
	ສ່ວນທີ1	**ສ່ວນທີ2**	**ຕັດອອກ**	**ລວມ**
		ລ້ານກີບ		
ລາຍຮັບຈາກການຂາຍ	1.167.375	-	-	1.167.375
ຕົ້ນທຶນໃນການຂາຍ	(567.894)	-	-	(567.894)
ຜົນໄດ້ຮັບ	**599.481**	-	-	**599.481**
ລາຍຮັບອື່ນໆ	44.092	-	-	44.092
ລາຍຈ່າຍໃນການດຳເນີນງານ ແລະ ຄ່າບໍລິຫານ	(198.319)	-	-	(198.319)
ກຳໄລຈາກອັດຕາແລກປ່ຽນ, ສຸດທິ	(45.389)	-	-	(45.389)
ກຳໄລຂອງຮຸ້ນຈາກເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ	-	498.703	-	498.703
ກຳໄລຈາກການດຳເນີນງານ	**399.865**	**498.703**	-	**898.568**
ລາຍຈ່າຍທາງການເງິນ	(741.125)	-	-	(741.125)
ກຳໄລ/(ຂາດທຶນ)ສຸດທິກ່ອນຈ່າຍອາກອນກຳໄລ	(341.260)	498.703	-	157.443
ລາຍຈ່າຍອາກອນກຳໄລ	-	-	-	-
ກຳໄລ(ຂາດທຶນ) ສຸດທິໃນປີ	**(341.260)**	**498.703**	-	**157.443**

6 ເງິນລົງທຶນໃນບໍລິສັດລູກ

	ເອກະສານລາຍງານການເງິນແບບແຍກ	
	2021	**2020**
	ລ້ານກີບ	
ຍອດຍົກມາໃນວັນທີ 1 ມັງກອນ	619.680	540.631
ເພີ່ມຂຶ້ນ	-	79.049
ລວມ	**619.680**	**619.680**

ໃນວັນທີ 31 ທັນວາ 2021, ບໍ່ໄດ້ມີການຈ່າຍເງິນລົງທຶນເພີ່ມໃນເງິນລົງທຶນໃນບໍລິສັດລູກ.

6 ເງິນລົງທຶນໃນບໍລິສັດລູກ (ຕໍ່)

ເງິນລົງທຶນໃນບໍລິສັດລູກ ໃນວັນທີ 31 ທັນວາ 2021 ແລະ 2020, ແລະ ລາຍໄດ້ຈາກເງິນປັນຜົນຈາກການລົງທຶນ ສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ອັດຕາສ່ວນເງິນລົງທຶນ		ປະເພດ	ເອກະສານລາຍງານການເງິນແບບແຍກ									
				ທຶນທີ່ຖອກແລ້ວ		ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ລາຍໄດ້ເງິນປັນຜົນ	
	2021	2020	ທຸລະກິດ	2021	2020	2021	2020	2021	2020	2021	2020	2021	2020
	(%)			(ລ້ານກີບ)									
ບໍລິສັດລູກ													
ບໍລິສັດ ອີດີແອ-ເຈັນ ໂຊ່ລ່າ ພາວເວີ ຈຳກັດ (ໂຊ່ລ່າ)	60	60	ຜະລິດໄຟຟ້າ	78.439	78.439	78.439	78.439	-	-	78.439	78.439	-	-
ບໍລິສັດ ນ້ຳບີ ພາວເວີ ຈຳກັດ (ນ້ຳບີ)	80	80	ຜະລິດໄຟຟ້າ	538.841	538.841	538.841	538.841	-	-	538.841	538.841	-	-
ບໍລິສັດ ບໍລິການຄຸ້ມຄອງການ ຜະລິດ ແລະ ບຳລຸງຮັກສາ ອີດີແອ-ເຈັນ ຈຳກັດ ຜູ້ດຽວ (ໂອແອນເອັມ)	100	100	ບໍລິການ ບຳລຸງຮັກສາ	2.400	2.400	2.400	2.400	-	-	2.400	2.400	-	-
ລວມ				**619.680**	**619.680**	**619.680**	**619.680**	**-**	**-**	**619.680**	**619.680**	**-**	**-**

ບັນດາບໍລິສັດລູກຍັງບໍ່ໄດ້ຖືກຈົດທະບຽນໃນຕະຫຼາດຫຼັກຊັບ. ສະນັ້ນ, ຈຶ່ງບໍ່ມີການເຜີຍແຜ່ລາຄາອ້າງອີງ.

7 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ

		ເອກະສານລາຍງານການເງິນ ແບບລວມ ແລະ ແບບແຍກ	
	ບົດ ອະທິບາຍ	2021	2020
		ລ້ານກີບ	
ວິສາຫະກິດຂາຮຸ້ນ			
ວັນທີ 1 ມັງກອນ		5.190.681	4.816.844
ສ່ວນແບ່ງກຳໄລສຸດທິຂອງວິສາຫະກິດຂາຮຸ້ນ		420.022	173.636
ລາຍໄດ້ເງິນປັນຜົນ	7.1	(104.496)	(49.735)
ເພີ່ມທຶນ		-	-
ການຈັດປະເພດໃໝ່ເປັນເງິນລົງທຶນທົ່ວໄປ		(375.688)	-
ໂອນຈາກການຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ	7.1	-	244.474
ສ່ວນຕ່າງຂອງການແປງສະກຸນເງິນ		21.488	5.462
ຍອດເຫຼືອທ້າຍ		**5.151.967**	**5.190.681**
ບໍລິສັດຮຸ້ນສ່ວນ			
ວັນທີ 1 ມັງກອນ		3.010.187	2.773.748
ສ່ວນແບ່ງກຳໄລສຸດທິຂອງບໍລິສັດຮຸ້ນສ່ວນ		540.693	325.067
ລາຍໄດ້ເງິນປັນຜົນ	7.2	(370.976)	(104.805)
ເພີ່ມທຶນ		4.941	7.837
ໂອນຈາກການຈ່າຍລ່ວງໜ້າສຳລັບຊັບສິນທີ່ຢູ່ພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ	7.2	-	-
ສ່ວນຕ່າງຂອງການແປງສະກຸນເງິນ		79.474	8.340
ຍອດເຫຼືອທ້າຍ		**3.264.319**	**3.010.187**

7 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

7.1 ເງິນລົງທຶນໃນວິສາຫະກິດຂາຮຸ້ນ

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ໃນວັນທີ 31 ທັນວາ 2021 ແລະ 2020, ແລະ ເງິນປັນຜົນສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ອັດຕາສ່ວນເງິນລົງທຶນ		ປະເພດທຸລະກິດ	ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
				ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	2021	2020		2021	2020	2021	2020	2021	2020	2021	2020	2021	2020
	(%)			(ລ້ານກີບ)									
ວິສາຫະກິດຂາຮຸ້ນ													
ບໍລິສັດ ໄຟຟ້າ ນ້ຳງຶມ 2 ຈຳກັດ	25	25	ຜະລິດໄຟຟ້າ	454.742	454.742	-	-	454.742	454.742	418.355	373.984	56.101	49.735
ບໍລິສັດ ໄຟຟ້າ ນ້ຳລີກ 1-2 ຈຳກັດ	10	10	ຜະລິດໄຟຟ້າ	32.240	32.240	-	-	32.240	32.240	89.615	81.924	-	-
ບໍລິສັດ ໄຟຟ້າ ນ້ຳງຶມ 5 ຈຳກັດ	15	15	ຜະລິດໄຟຟ້າ	80.022	80.022	-	-	80.022	80.022	100.067	111.701	-	-
ບໍລິສັດ ໄຟຟ້າ ດອນສະໂຮງ ຈຳກັດ	20	20	ຜະລິດໄຟຟ້າ	605.016	605.016	-	-	605.016	605.016	906.891	742.392	-	-
ບໍລິສັດ ໄຟຟ້າ ນ້ຳແບ ຈຳກັດ	10	10	ຜະລິດໄຟຟ້າ	18.162	18.162	-	-	18.162	18.162	28.602	27.589	-	-
ບໍລິສັດ ໄຟຟ້າ ນ້ຳລອງ ຈຳກັດ	20	20	ຜະລິດໄຟຟ້າ	5.537	5.537	-	-	5.537	5.537	11.907	9.690	-	-
ບໍລິສັດ ໄຟຟ້າ ໄຊຍະບຸລີ ຈຳກັດ	20	20	ຜະລິດໄຟຟ້າ	3.172.963	3.172.963	-	-	3.172.963	3.172.963	3.405.850	3.212.052	48.395	-
ບໍລິສັດ ໄຟຟ້າ ນ້ຳມັງ 1 ຈຳກັດ	10	10	ຜະລິດໄຟຟ້າ	37.596	37.596	-	-	37.596	37.596	42.494	41.878	-	-
ບໍລິສັດ ໄຟຟ້າ ພະລັງນ້ຳ ນ້ຳອຸ ຈຳກັດ	15	15	ຜະລິດໄຟຟ້າ	-	364.640	-	-	-	364.640	-	375.688	-	-
ບໍລິສັດ ໄຟຟ້າ ນ້ຳທາ 1 ພາວເວີ ຈຳກັດ	20	20	ຜະລິດໄຟຟ້າ	244.474	244.474	-	-	244.474	244.474	148.186	213.783	-	-
ລວມວິສາຫະກິດຂາຮຸ້ນ				**4.650.752**	**5.015.392**	**-**	**-**	**4.650.752**	**5.015.392**	**5.151.967**	**5.190.681**	**104.496**	**49.735**

7 ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ (ຕໍ່)

7.2 ເງິນລົງທຶນໃນບໍລິສັດຮຸ້ນສ່ວນ

ເງິນລົງທຶນໃນບໍລິສັດຮຸ້ນສ່ວນ ໃນວັນທີ 31 ທັນວາ 2021 ແລະ 2020, ແລະ ເງິນປັນຜົນສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ອັດຕາສ່ວນເງິນລົງທຶນ		ປະເພດທຸລະກິດ	ເອກະສານລາຍງານການເງິນແບບລວມ ແລະ ແບບແຍກ									
				ມູນຄ່າ		ຄ່າເສື່ອມມູນຄ່າ		ມູນຄ່າສຸດທິ		ທຶນ		ລາຍໄດ້ເງິນປັນຜົນ	
	2021	2020		2021	2020	2021	2020	2021	2020	2021	2020	2021	2020
	(%)			(ລ້ານກີບ)									
ບໍລິສັດຮຸ້ນສ່ວນ													
ບໍລິສັດ ເຫີນຫີນບຸນ ພາວເວີ ຈຳກັດ	60	60	ຜະລິດໄຟຟ້າ	1.120.696	1.120.696	-	-	1.120.696	1.120.696	2.510.861	2.271.757	367.217	94.257
ບໍລິສັດ ຫ້ວຍເຫາະ ພາວເວີ ຈຳກັດ	20	20	ຜະລິດໄຟຟ້າ	1.171	1.171	-	-	1.171	1.171	34.973	20.594	3.759	10.548
ບໍລິສັດ ຫ້ວຍລຳພັນຕອນລຸ່ມ ຈຳກັດ	60	60	ຜະລິດໄຟຟ້າ	27.972	24.470	-	-	27.972	24.470	16.194	14.558	-	-
ບໍລິສັດ ໄຟຟ້າ ນ້ຳດີກ 1 ຈຳກັດ	70	70	ຜະລິດໄຟຟ້າ	54.942	54.942	-	-	54.942	54.942	51.889	52.129	-	-
ບໍລິສັດ ເຂື່ອນໄຟຟ້າ ນ້ຳພຸນ ຈຳກັດ	51	51	ຜະລິດໄຟຟ້າ	10.403	8.964	-	-	10.403	8.964	4.185	4.169	-	-
ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ ຈຳກັດ	60	60	ບໍລິການ ບຳລຸງຮັກສາ	-	-	-	-	-	-	(140)	(281)	-	-
ບໍລິສັດ ອີດີແອວເຈັນ ເຣດ ຈຳກັດ	80	80	ບໍລິການ	123.222	123.222		-	123.222	123.222	122.068	122.068	-	-
ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ	15	15	ຜະລິດໄຟຟ້າ	497.163	497.163	-	-	497.163	497.163	472.889	481.943	-	-
ບໍລິສັດ ໄຟຟ້າ ນ້ຳລີກ 1 ຈຳກັດ	10	10	ຜະລິດໄຟຟ້າ	34.680	34.680	-	-	34.680	34.680	51.400	43.250	-	-
ລວມບໍລິສັດຮຸ້ນສ່ວນ				**1.870.249**	**1.865.308**	**-**	**-**	**1.870.249**	**1.865.308**	**3.264.319**	**3.010.187**	**370.976**	**104.805**
ລວມວິສາຫະກິດຂາຮຸ້ນ ແລະ ບໍລິສັດຮຸ້ນສ່ວນ				**6.521.001**	**6.880.700**	**-**	**-**	**6.521.001**	**6.880.700**	**8.416.286**	**8.200.868**	**475.472**	**154.540**

8 ເງິນຈ່າຍລ່ວງໜ້າ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະ ເງິນລົງທຶນ

	ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	2021	2020	2021	2020
	ລ້ານກີບ			
ວັນທີ 1 ມັງກອນ	1.973.406	2.217.880	1.999.754	2.375.604
ເພີ່ມຂຶ້ນ	-	-	-	271
ຫຼຸດລົງ	-	-	-	(131.548)
ໂອນໄປການລົງທຶນ ໃນບໍລິສັດລູກ, ວິສາຫະກິດຂາຮຸ້ນ, ບໍລິສັດຮຸ້ນ ສ່ວນ ແລະ ຊັບສິນ	-	(244.474)	-	(244.474)
ລາຍຈ່າຍການເງິນ	-	-	-	-
ສ່ວນຕ່າງຂອງການແປງສະກຸນເງິນ	-	-	2.947	(99)
ລວມ	**1.973.406**	**1.973.406**	**2.002.701**	**1.999.754**

ຂໍ້ມູນນີ້ກ່ຽວພັນກັບການຈ່າຍເງິນລ່ວງໜ້າໃຫ້ ຟຟລ, ສຳລັບຄ່າໃຊ້ຈ່າຍທີ່ເກີດຂຶ້ນຈາກຊັບສິນໂຄງການພາຍໃຕ້ບົດບັນທຶກຄວາມເຂົ້າໃຈ. ກຸ່ມບໍລິສັດໄດ້ຈ່າຍເງິນລ່ວງໜ້າເພື່ອລົງທຶນ ອີງໃສ່ເງື່ອນໄຂພາຍໃຕ້ບົດບັນທຶກຄວາມເຂົ້າໃຈ ໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

		ເອກະສານລາຍງານການເງິນ ແບບລວມ		ເອກະສານລາຍງານການເງິນ ແບບແຍກ	
	ປະເພດ	2021	2020	2021	2020
		ລ້ານກີບ			
ອີດີແອວ-ເຈັນ ໂຊລ່າ	ບໍລິສັດລູກ	-	-	17.470	14.523
ອີດີແອວ-ເຈັນ ໂອແອນເອັມ	ບໍລິສັດລູກ	-	-	11.825	11.825
ນ້ຳຄານ 3	ຊັບສິນ	348.522	348.522	348.522	348.522
ນ້ຳຈຽນ 1	ຊັບສິນ	678.504	678.504	678.504	678.504
ນ້ຳຫີນບຸນ	ຊັບສິນ	205.955	205.955	205.955	205.955
ເຊເສັດ 3	ຊັບສິນ	149.418	149.418	149.418	149.418
ນ້ຳງື່ມ 1 Ext Unit 6	ຊັບສິນ	247.374	247.374	247.374	247.374
ນ້ຳງຽບ 2	IPP	111.470	111.470	111.470	111.470
ເຊຂະໝານ 3	IPP	232.163	232.163	232.163	232.163
ລວມ		**1.973.406**	**1.973.406**	**2.002.701**	**1.999.754**

8 ເງິນຈ່າຍລ່ວງໜ້າ ສຳລັບຊັບສິນພາຍໃຕ້ສັນຍາສຳປະທານ ແລະ ລົງທຶນ (ຕໍ່)

ໃນວັນທີ 31 ທັນວາ 2021, ກຸ່ມບໍລິສັດມີເງິນຈ່າຍລ່ວງໜ້າພາຍໃຕ້ບົດບັນທຶກຄວາມເຂົ້າໃຈກັບ ຟຟລ ສຳລັບການໂອນຊັບສິນ ແລະ ຮຸ້ນຂອງຜູ້ຜະລິດໄຟຟ້າເອກະລາດສັງລວມ ດັ່ງລຸ່ມນີ້:

ລຳດັບ	ຊື່ໂຄງການ	ທີ່ຕັ້ງ	ສ່ວນຖືຄອງຮຸ້ນ	ເມກາວັດ
ຊັບສິນ				
1	ນ້ຳຄານ 3	ຫຼວງພະບາງ	100%	60
2	ນ້ຳຈຽນ 1	ຊຽງຂວາງ	100%	104
3	ນ້ຳຫີນບຸນ	ຄຳມ່ວນ	100%	30
4	ເຊເສັດ 3	ຈຳປາສັກ	100%	24
5	ນ້ຳງຶ່ມ 1 Ext Unit 6	ວຽງຈັນ	100%	40
	ລວມ			**258**

ລຳດັບ	ຊື່ໂຄງການ	ທີ່ຕັ້ງ	ສ່ວນຖືຄອງຮຸ້ນ	ເມກາວັດ
ຮຸ້ນ IPPs				
1	ນ້ຳງຽບ 2	ຊຽງຂວາງ	10%	18
2	ເຊຂະໝານ 3	ເຊກອງ	15%	37,5
	ລວມ			**55,5**

ພາຍໃຕ້ບົດບັນທຶກຄວາມເຂົ້າໃຈ, ກຸ່ມບໍລິສັດເຫັນດີໃນການຊຳລະເງິນຄືນທັງໝົດໃຫ້ ຟຟລ ສຳລັບທຸກລາຍຈ່າຍທີ່ ຟຟລ ຈ່າຍຜ່ານມາຈົນຮອດມື້ສຳເລັດໂຄງການບົນພື້ນຖານທີ່ເກີດຂຶ້ນຢ່າງຕໍ່ເນື່ອງ ຫຼື ຈົນກວ່າຈະສຳເລັດການໂອນຄວາມເປັນເຈົ້າຂອງ ຂອງໂຄງການເຊັ່ນດຽວກັນທາງບໍລິສັດ. ພ້ອມກັນນັ້ນ, ບໍລິສັດຕ້ອງຊຳລະເງິນຄືນໃຫ້ ຟຟລ ຫຼື ຈ່າຍເງິນລ່ວງໜ້າໃຫ້ ຟຟລ ຕາມທີ່ທັງສອງຝ່າຍໄດ້ຕົກລົງເຫັນດີກັນຢ່າງຕໍ່ເນື່ອງ. ນອກຈາກນັ້ນ, ຟຟລ ອາດມີພັນທະທາງດ້ານການເງິນກ່ຽວກັບໂຄງການດັ່ງກ່າວ ຕາມທີ່ລະບຸໃນສັນຍາ. ສອງຝ່າຍໄດ້ຕົກລົງເຫັນດີໃນລາຄາຂາຍເມື່ອມີການໂອນໂຄງການ ແລະ ບໍລິສັດຈະຕ້ອງຈ່າຍຈຳນວນເງິນທີ່ເຫຼືອຫຼັງຈາກທີ່ຫັກຈາກເງິນລ່ວງໜ້າໃຫ້ ຟຟລ.

9 ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ

	ເອກະສານລາຍງານການເງິນແບບລວມ						
	ອາຄານ	ເຂື່ອນໄຟຟ້າ	ໂຮງງານ ແລະ ເຄື່ອງຈັກ	ພາຫະນະ	ເຟີນິເຈີ, ເຄື່ອງຕິດຕັ້ງ ແລະ ອຸປະກອນຫ້ອງການ	ລະຫວ່າງການກໍ່ສ້າງ	ລວມ
	ລ້ານກີບ						
ວັນທີ 31 ທັນວາ 2020							
ມູນຄ່າ	774.748	6.350.141	4.820.015	23.998	19.873	733.591	12.722.366
ຄ່າຫຼ້ຍຫ້ຽນສະສົມ	(326.397)	(1.477.050)	(1.447.969)	(19.886)	(15.020)	-	(3.286.322)
ມູນຄ່າຕາມບັນຊີ	**448.351**	**4.873.091**	**3.372.046**	**4.112**	**4.853**	**733.591**	**9.436.044**
ວັນທີ 31 ທັນວາ 2021							
ວັນທີ 1 ມັງກອນ 2021	448.351	4.873.091	3.372.046	4.112	4.853	733.591	9.436.044
ເພີ່ມຂຶ້ນ	16.413	14.427	34.769	168	2.374	35.709	103.860
ຈັດປະເພດຄືນໃໝ່	-	-	-	-	-	(16.335)	(16.335)
ເຄື່ອນຍ້າຍຈາກວຽກກຳລັງ ດຳເນີນການກໍ່ສ້າງ	-	-	25.185	-	-	(25.185)	-
ການສະສາງຕົ້ນທຶນ	(62)	-	(28.037)	-	(16)	-	(28.115)
ຄ່າຫຼ້ຍຫ້ຽນ (ບົດອະທິບາຍ 18)	(46.659)	(235.563)	(234.193)	(1.973)	(1.556)	-	(519.944)
ມູນຄ່າຕາມບັນຊີ	**418.043**	**4.651.955**	**3.169.770**	**2.307**	**5.655**	**727.780**	**8.975.510**
ວັນທີ 31 ທັນວາ 2021							
ຕົ້ນທຶນ	790.789	6.364.568	4.821.166	24.152	20.834	727.780	12.749.289
ຄ່າຫຼ້ຍຫ້ຽນສະສົມ	(372.746)	(1.712.613)	(1.651.396)	(21.845)	(15.179)	-	(3.773.779)
ມູນຄ່າຕາມບັນຊີ	**418.043**	**4.651.955**	**3.169.770**	**2.307**	**5.655**	**727.780**	**8.975.510**

9 ຊັບສິນຢູ່ພາຍໃຕ້ການສຳປະທານ, ສຸດທິ (ຕໍ່)

	ເອກະສານລາຍງານການເງິນແບບແຍກ						
	ອາຄານ	ເຂື່ອນໄຟຟ້າ	ໂຮງງານ ແລະ ເຄື່ອງຈັກ	ພາຫະນະ	ເຟີນິເຈີ, ເຄື່ອງຕິດຕັ້ງ ແລະ ອຸປະກອນຫ້ອງການ	ລະຫວ່າງການກໍ່ສ້າງ	ລວມ
				ລ້ານກີບ			
ວັນທີ 31 ທັນວາ 2020							
ຕົ້ນທຶນ	774.748	6.350.141	4.565.429	20.600	18.686	419.534	12.149.138
ຄ່າຫຼ້ຍຫ້ຽນສະສົມ	(326.397)	(1.477.050)	(1.416.269)	(18.257)	(14.377)	-	(3.252.350)
ມູນຄ່າຕາມບັນຊີ	**448.351**	**4.873.091**	**3.149.160**	**2.343**	**4.309**	**419.534**	**8.896.788**
ວັນທີ 31 ທັນວາ 2021							
ວັນທີ 1 ມັງກອນ 2021	448.351	4.873.091	3.149.160	2.343	4.309	419.534	8.896.788
ເພີ່ມຂຶ້ນ	16.413	14.427	34.769	168	2.022	35.709	103.508
ເຄື່ອນຍ້າຍຈາກວຽກກຳລັງ ດຳເນີນການກໍ່ສ້າງ	-	-	-	-	-	-	-
ການສະສາງຕົ້ນທຶນ	(62)	-	(28.037)	-	-	-	(28.099)
ຄ່າຫຼ້ຍຫ້ຽນ (ບົດອະທິບາຍ 18)	(46.659)	(235.563)	(220.489)	(1.359)	(1.249)	-	(505.319)
ມູນຄ່າຕາມບັນຊີ	**418.043**	**4.651.955**	**2.935.403**	**1.152**	**5.082**	**455.243**	**8.466.878**
ວັນທີ 31 ທັນວາ 2021							
ຕົ້ນທຶນ	790.789	6.364.568	4.541.395	20.754	19.314	455.243	12.192.063
ຄ່າຫຼ້ຍຫ້ຽນສະສົມ	(372.746)	(1.712.613)	(1.605.992)	(19.602)	(14.232)	-	(3.725.185)
ມູນຄ່າຕາມບັນຊີ	**418.043**	**4.651.955**	**2.935.403**	**1.152**	**5.082**	**455.243**	**8.466.878**

10 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ເງິນສົດໃນມື	230	254	217	229
ເງິນຝາກທະນາຄານ	202.355	265.300	161.485	246.986
ລວມ	**202.585**	**265.554**	**161.702**	**247.215**

ຄ່າເງິນຂອງເງິນສົດ ແລະ ລາຍການທຽບເທົ່າເງິນສົດ ໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ໂດລາສະຫະລັດ	89.498	107.939	56.515	91.824
ລາວກີບ	25.586	38.759	17.864	36.569
ໄທບາດ	87.501	118.856	87.323	118.822
ລວມ	**202.585**	**265.554**	**161.702**	**247.215**

11 ເງິນລົງທຶນໄລຍະສັ້ນ

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ຝາກມີກຳນົດ	33.489	27.840	33.489	27.840
ຝາກໄລຍະສັ້ນ	-	-	-	-
ລວມ	**33.489**	**27.840**	**33.489**	**27.840**

ຄ່າເງິນຂອງເງິນລົງທຶນໄລຍະສັ້ນ ໃນວັນທີ 31 ທັນວາ 2021 ແມ່ນເປັນສະກຸນເງິນໂດລາ.

12 ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

	ເອກະສານລາຍງານ ການເງິນແບບລວມ		ເອກະສານລາຍງານ ການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ໜີ້ຕ້ອງຮັບການຄ້າຈາກພາກສ່ວນທີ່ກ່ຽວຂ້ອງ	1.967.633	1.368.564	1.963.426	1.351.794
ໜີ້ຕ້ອງຮັບອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ	224.849	123.775	220.049	118.975
ອື່ນໆ	29.452	17.509	79.399	58.518
ລວມ	**2.221.934**	**1.509.848**	**2.262.874**	**1.529.287**

ການວິເຄາະອາຍຸສຳລັບໜີ້ຕ້ອງຮັບການຄ້າ ມີດັ່ງຕໍ່ໄປນີ້:

	ເອກະສານລາຍງານ ການເງິນແບບລວມ		ເອກະສານລາຍງານ ການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ພາຍໃນກຳນົດຂອງສິນເຊື່ອ	93.482	120.254	89.275	115.911
ເກີນກຳນົດ				
ໜ້ອຍກວ່າ 3 ເດືອນ	216.335	268.289	216.335	261.173
3 - 6 ເດືອນ	539.093	506.173	539.093	500.862
7 - 12 ເດືອນ	630.162	207.393	630.162	207.393
ຫຼາຍກ່ວາ 12 ເດືອນ	488.561	266.455	488.561	266.455
ລວມ	**1.967.633**	**1.368.564**	**1.963.426**	**1.351.794**

13 ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ

	ຈຳນວນ ຂອງຮຸ້ນ	ທຶນຈົດ ທະບຽນ	ສ່ວນເພີ່ມ ມູນຄ່າຮຸ້ນ	ລວມທຶນຈົດ ທະບຽນ
	ຮຸ້ນ		ລ້ານກີບ	
ວັນທີ 1 ມັງກອນ 2020	1.679.303.697	6.717.215	985.621	7.702.836
ຮຸ້ນສາມັນ	-	-	-	-
ວັນທີ 31 ທັນວາ 2020	**1.679.303.697**	**6.717.215**	**985.621**	**7.702.836**
ວັນທີ 1 ມັງກອນ 2021	1.679.303.697	6.717.215	985.621	7.702.836
ຮຸ້ນສາມັນ	-	-	-	-
ວັນທີ 31 ທັນວາ 2021	**1.679.303.697**	**6.717.215**	**985.621**	**7.702.836**

13 ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຮຸ້ນ (ຕໍ່)

ລວມຍອດທຶນຈົດທະບຽນຂອງຮຸ້ນສາມັນທັງໝົດມີ 1.679.303.697 ຮຸ້ນ, ມີມູນຄ່າຮຸ້ນລະ 4.000 ກີບຕໍ່ຮຸ້ນ, ເປັນຈຳນວນເງິນລວມທັງໝົດ 6.717.215 ລ້ານກີບ. ໃນວັນທີ 31 ທັນວາ 2021 ແລະ 2020, ຮຸ້ນທີ່ອອກທັງໝົດໄດ້ຖືກຊຳລະ ແລະ ຈົດທະບຽນກັບກະຊວງອຸດສາຫະກຳ ແລະ ການຄ້າ.

14 ຄັງສະສົມຕາມລະບຽບການ

	ເອກະສານລາຍງານການເງິນ ແບບລວມ/ແບບແຍກ	
	2021	**2020**
	ລ້ານກີບ	**ລ້ານກີບ**
ວັນທີ 1 ມັງກອນ	565.024	547.147
ເພີ່ມຂຶ້ນຕາມຄວາມເໝາะสົมໃນປີ	684	17.877
ວັນທີ 31 ທັນວາ	**565.708**	**565.024**

ຄັງສະສົມຕາມລະບຽບການ ແມ່ນເຮັດຂຶ້ນມາໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍວິສາຫະກິດຂອງ ສປປ ລາວ ທີ່ຮຽກຮ້ອງໃຫ້ມີການຈັດສັນກຳໄລສຸດທິມາເປັນຄັງສະສົມຕາມລະບຽບການຢ່າງໜ້ອຍ 10% ຂອງກຳໄລສຸດທິປະຈຳປີຂອງບໍລິສັດ ຈົນກວ່າຄັງສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

15 ເງິນກູ້ຢືມສຸດທິ

	ບົດ ອະທິບາຍ	ເອກະສານລາຍງານ ການເງິນແບບລວມ		ເອກະສານລາຍງານ ການເງິນແບບແຍກ	
		2021	2020	2021	2020
				ລ້ານກີບ	
ເງິນກູ້ໄລຍະສັ້ນ		106.739	98.505	106.739	98.505
ເງິນກູ້ໄລຍະຍາວ ຈັດເປັນໄລຍະສັ້ນ					
- ເງິນກູ້ໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	*24*	1.528.079	961.173	1.528.079	961.173
- ເງິນກູ້ໄລຍະຍາວຈາກສະຖາບັນການເງິນ		141.597	129.922	118.620	97.471
ລວມເງິນກູ້ໄລຍະຍາວ-ຈັດເປັນໄລຍະສັ້ນ		**1.776.415**	**1.189.600**	**1.753.438**	**1.157.149**
ເງິນກູ້ໄລຍະຍາວ ຈັດເປັນໄລຍະຍາວ					
- ເງິນກູ້ໄລຍະຍາວ ຈາກພາກສ່ວນທີ່ກ່ຽວຂ້ອງ	*24*	2.945.941	2.818.225	2.945.941	2.818.225
- ເງິນກູ້ໄລຍະຍາວຈາກສະຖາບັນການເງິນ		232.071	303.203	-	106.276
ລວມເງິນກູ້ໄລຍະຍາວ-ຈັດເປັນໄລຍະຍາວ		**3.178.012**	**3.121.428**	**2.945.941**	**2.924.501**
ລວມໜີ້ສິນທີ່ມີພາລະດອກເບ້ຍ		**4.954.427**	**4.311.028**	**4.699.379**	**4.081.650**

15 ເງິນກູ້ຢືມສຸດທິ (ຕໍ່)

ລາຍການເຄື່ອນໄຫວຂອງໜີ້ສິນທີ່ມີພາລະດອກເບ້ຍເງິນກູ້ສຳລັບປີສິ້ນສຸດ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ເອກະສານລາຍງານ ການເງິນແບບລວມ		ເອກະສານລາຍງານ ການເງິນແບບແຍກ	
	2021	**2020**	**2021**	**2020**
		ລ້ານກີບ		
ວັນທີ 1 ເດືອນ ມັງກອນ	4.311.028	4.510.610	4.081.650	4.318.177
ເພີ່ມຂຶ້ນ	682.253	127.681	682.253	98.239
ການຈ່າຍເງິນຄືນ	(902.334)	(531.819)	(883.649)	(531.819)
ປ່ຽນແປງສຸດທິໃນຕົ້ນທຶນເງິນກູ້ ລໍ້ຖ້າຕັດບັນຊີ	504	1.397	504	1.397
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	862.976	203.159	818.621	195.656
ລວມ	**4.954.427**	**4.311.028**	**4.699.379**	**4.081.650**

ໃນວັນທີ 31 ທັນວາ 2021 ແລະ 2020, ກຸ່ມບໍລິສັດໄດ້ເຊັນສັນຍາເງິນກູ້ຢືມທີ່ສຳຄັນຕ່າງໆ ດັ່ງລຸ່ມນີ້:

ສັນຍາສິນເຊື່ອ

ໃນວັນທີ 9 ກໍລະກົດ 2021, ກຸ່ມບໍລິສັດໄດ້ຕົກລົງເຊັນສັນຍາສັນຍາເງິນກູ້ໄລຍະສັ້ນກັບ ທະນາຄານພັດທະນາລາວ ໃນວົງເງິນ 900 ລ້ານບາດ ໂດຍມີອາຍຸ 12 ເດືອນ. ອັດຕາດອກເບ້ຍເງິນກູ້ໃນສັນຍາສິນເຊື່ອສະບັບນີ້ ແມ່ນ 8% ຕໍ່ປີ ຊຳລະດອກເບ້ຍເປັນລາຍເດືອນ ເຊິ່ງບໍລິສັດໄດ້ຊຳລະຄືນເຕັມຈຳນວນພາຍໃນປີສິ້ນສຸດວັນທີ 31 ທັນວາ 2021.

ໃນວັນທີ 9 ກໍລະກົດ 2021, ກຸ່ມບໍລິສັດໄດ້ຕົກລົງເຊັນສັນຍາສັນຍາເງິນກູ້ໄລຍະສັ້ນກັບ ທະນາຄານ ບີໄອຊີ ລາວຈຳກັດ ໃນວົງເງິນ 20 ລ້ານໂດລາສະຫະລັດ ໂດຍມີອາຍຸ 85 ວັນ. ອັດຕາດອກເບ້ຍເງິນກູ້ໃນສັນຍາສິນເຊື່ອສະບັບນີ້ ແມ່ນ 8% ຕໍ່ປີ ຊຳລະດອກເບ້ຍ ເປັນລາຍເດືອນ, ເຊິ່ງບໍລິສັດໄດ້ຊຳລະຄືນເຕັມຈຳນວນພາຍໃນປີສິ້ນສຸດວັນທີ 31 ທັນວາ 2021.

ໃນວັນທີ 1 ທັນວາ 2021, ກຸ່ມບໍລິສັດໄດ້ເຊັນສັນຍາສິນເຊື່ອກັບ ທະນາຄານຫວຽດຕິນ ລາວຈຳກັດ ໃນຈຳນວນ 190.000 ລ້ານກີບ ຫຼື ທຽບເທົ່າກັບສະກຸນເງິນໂດລາ ເພື່ອນຳໃຊ້ເປັນທຶນໝຸນວຽນ. ເງິນກູ້ຢືມນີ້ມີອັດຕາດອກເບ້ຍ 5,5% ຕໍ່ປີ ສຳລັບສະກຸນເງິນ ໂດລາ ແລະ 8,5% ຕໍ່ປີ ສຳລັບສະກຸນເງິນກີບ, ໄລຍະເວລາໃຫ້ກູ້ຢືມຂອງໜີ້ແຕ່ລະບ້ວງ ທີ່ໄດ້ບັນທຶກໃນໃບຮັບຮູ້ໜີ້ນັ້ນແມ່ນສູງສຸດບໍ່ເກີນ 6 ເດືອນ/ໃບຮັບຮູ້ໜີ້ ແລະ ຈ່າຍດອກເບ້ຍເປັນໄຕມາດ.

15 ເງິນກູ້ຍືມສຸດທິ (ຕໍ່)

ຄ່າເງິນຂອງເງິນທີ່ມີພາລະໜີ້ສິນດອກເບ້ຍ ໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	**2020**	**2021**	**2020**
		ລ້ານກີບ		
ໂດລາ	4.835.808	4.150.917	4.580.760	3.921.539
ເອີໂຣ	118.619	141.766	118.619	141.766
ເຢັນຍີ່ປຸ່ນ	-	18.345	-	18.345
ລວມ	**4.954.427**	**4.311.028**	**4.699.379**	**4.081.650**

ໄລຍະຂອງເງິນກູ້ເມື່ອເຖິງກຳນົດຈ່າຍໜີ້ສິນທີ່ມີດອກເບ້ຍ ໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	**2020**	**2021**	**2020**
		ລ້ານກີບ		
ພາຍໃນ 1 ປີ	1.776.415	1.209.026	1.753.438	1.157.460
ຫຼາຍກວ່າ 1 ປີ ແຕ່ ໜ້ອຍກວ່າ 5 ປີ	1.784.677	1.608.564	1.692.768	1.532.105
ຫຼາຍກວ່າ 5 ປີ	1.393.335	1.493.438	1.253.173	1.392.085
ລວມ	**4.954.427**	**4.311.028**	**4.699.379**	**4.081.650**

ລາຍລະອຽດການກູ້ຍືມຂອງບໍລິສັດກັບສະຖາບັນການເງິນ ສຳລັບປີສິ້ນສຸດໃນວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:

			ເອກະສານລາຍງານການເງິນແບບລວມ/ແບບແຍກ
ສະກຸນເງິນ	**ວົງເງິນ** *(ລ້ານ)*	**ອັດຕາດອກເບ້ຍ(%ຕໍ່ປີ)**	**ໄລຍະການຊຳລະເງິນ**
ກີບ	*190.000 ຫຼື ທຽບເທົ່າສະກຸນເງິນໂດລາ*	5,5% ສຳລັບສະກຸນເງິນໂດລາ ແລະ 8,5% ສຳລັບສະກຸນເງິນກີບ	ຊຳລະຕົ້ນທຶນເມື່ອຄົບກຳນົດທີ່ລະບຸໄວ້ໃນໃບຮັບຮູ້ໜີ້, ບໍ່ເກີນ 6 ເດືອນ/ໃບຮັບຮູ້ໜີ້.
ຢູໂຣ	*17*	EURIBOR 3 ເດືອນ+3,9%	ຊຳລະຕົ້ນທຶນເປັນໄຕມາດ, ເລີ່ມເດືອນສິງຫາ 2019

16 ຮຸ້ນກູ້ສຸດທິ

	ເອກະສານລາຍງານການເງິນແບບລວມ/ແບບແຍກ	
	2021	2020
	ລ້ານກີບ	
ຮຸ້ນກູ້ທີ່ຈັດເປັນໄລຍະສັ້ນ	378.281	1.931.841
ຮຸ້ນກູ້ທີ່ຈັດເປັນໄລຍະຍາວ	10.751.211	8.343.462
ຮຸ້ນກູ້ສຸດທິ	**11.129.492**	**10.275.303**

ລາຍການເຄື່ອນໄຫວໃນຮຸ້ນກູ້ສຳລັບປີສິ້ນສຸດໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ເອກະສານການເງິນແບບລວມ/ແບບແຍກ	
	2021	2020
	ລ້ານກີບ	
ວັນທີ 1 ມັງກອນ	10.275.303	9.370.051
ເພີ່ມຂຶ້ນ ສຸດທິ	1.905.346	-
ການຈ່າຍເງິນຄືນ	(1.951.667)	-
ຕັດຈຳໜ່າຍຕົ້ນທຶນທາງການເງິນລໍຖ້າຕັດບັນຊີ	26.544	52.709
ຜົນກະທົບຂອງອັດຕາແລກປ່ຽນເງິນຕາ	873.966	852.543
ລວມ	**11.129.492**	**10.275.303**

ໃນວັນທີ 08 ກໍລະກົດ 2021, ບໍລິສັດໄດ້ສຳເລັດການອອກຮຸ້ນກູ້ເງິນບາດທີ່ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ, ຖືກຈົດທະບຽນກັບ ສະມາຄົມຕະຫຼາດຕາສານໜີ້ໄທ ("ThaiBMA"). ມູນຄ່າລວມຂອງຮຸ້ນກູ້ແມ່ນ 2.099,4 ລ້ານບາດ ມີອາຍຸ 3ປີ ໂດຍມີອັດຕາດອກເບ້ຍຄົງທີ່ຕໍ່ປີ 5,9% ແລະ ຈະຕ້ອງຈ່າຍດອກເບ້ຍເປັນປະຈຳໄຕມາດ.

ໃນວັນທີ 23 ກັນຍາ 2021, ບໍລິສັດໄດ້ສຳເລັດການອອກຮຸ້ນກູ້ເງິນບາດທີ່ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນ, ຖືກຈົດທະບຽນກັບ ສະມາຄົມຕະຫຼາດຕາສານໜີ້ໄທ ("ThaiBMA"). ມູນຄ່າລວມຂອງຮຸ້ນກູ້ແມ່ນ 3.527,4 ລ້ານບາດ ໂດຍປະກອບມີ ຮຸ້ນກູ້ 2ຊຸດຄື: ຮຸ້ນກູ້ອາຍຸ 3ປີ ແລະ 4ປີ ໂດຍມີອັດຕາດອກເບ້ຍຄົງທີ່ຕໍ່ປີ 5,9% ແລະ 6,5% ຕາມລຳດັບ ແລະ ຈະຕ້ອງຈ່າຍດອກເບ້ຍເປັນປະຈຳໄຕມາດ.

16 ຮຸ່ນກູ້ສຸດທ້ (ต่)

ສັງລວມຂໍ້ກຳນົດ ແລະ ເງື່ອນໄຂ ທີ່ສຳຄັນຂອງຮຸ່ນກູ້ ທີ່ບໍ່ດ້ອຍສິດ ແລະ ບໍ່ມີຫຼັກປະກັນດັ່ງລຸ່ມນີ້:

ຮຸບແບບ	ຈຳນວນ (ລ້ານ)	ອັດຕາດອກເບ້ຍ (% ຕໍ່ປີ)	ປີ	ດອກເບ້ຍຈ່າຍ	ວັນທີ່ຄົບກຳນົດ
2014-ຮຸບແບບ 3	บาด 3.000,0	5,45%	10	ทุกเค็งปี	12 ທັນວາ 2024
2016-ຮຸບແບບ 1	โดลา 51,0	5,00%	7	ทุกเค็งปี	2 ກັນຍາ 2023
2016-ຮຸບແบบ 2	โดลา 166,0	5,59%	10	ทุกเค็งปี	2 ກັນຍາ 2026
2016-ຮຸบแบบ 3	โดลา 95,0	5,98%	12	ทุกเค็งปี	2 ກັນຍາ 2028
2018-ຮຸบแบบ 2	บาด 4.078,1	4,50%	5	ทุกเค็งปี	13 ກໍລະກົດ 2023
2018-ຮຸบแบบ 3	บาด 1.443,1	4,85%	7	ทุกเค็งปี	13 ກໍລະກົດ 2025
2018-ຮຸบแบบ 4	บาด 1.897,9	5,50%	10	ทุกเค็งปี	13 ກໍລະກົດ 2028
2018-ຮຸบแบบ 5	บาด 809,8	6,00%	12	ทุกเค็งปี	13 ກໍລະກົດ 2030
2018-ຮຸบแบบ 6	บาด 1.621,2	6,25%	15	ทุกเค็งปี	13 ກໍລະກົດ 2033
2019-ຮຸบแบบ 1	บาด 1.085,5	4,50%	3,5	ทุกเค็งปี	30 ກໍລະກົດ 2022
2019-ຮຸบแบบ 2	บาด 1.660,7	5,50%	5,5	ทุกเค็งปี	30 ກໍລະກົດ 2024
2019-ຮຸบแบบ 3	บาด 1.093,4	6,50%	12	ทุกเค็งปี	30 ມັງກອນ 2031
2021-ຮຸบแบบ 1	บาด 2.099,4	5,90%	3	ทุกไตมาด	8 ກໍລະກົດ 2024
2021-ຮຸบแบบ 1	บาด 837,1	5,90%	3	ทุกไตมาด	22 ກັນຍາ 2024
2021-ຮຸบแบบ 2	บาด 2.690,3	6,50%	4	ทุกไตมาด	22 ກັນຍາ 2025

ໄລຍະຂອງຮຸ່ນກູ້ເມື່ອເຖິງກຳນົດ ໃນວັນທີ 31 ທັນວາ 2021 ແລະ 2020 ມີດັ່ງນີ້:

	ເອກະສານການເງິນ ແບບລວມ/ແບບແຍກ	
	2021	**2020**
	ລ້ານກີບ	
ພາຍໃນ 1 ປີ	378.281	1.934.481
ຫຼາຍກວ່າ 1 ປີ ແຕ່ໜ້ອຍກວ່າ 5 ປີ	6.087.620	4.225.515
ຫຼາຍກວ່າ 5 ປີ	4.811.407	4.231.818
ຫັກ: ຕົ້ນທຶນທາງການເງິນລໍຖ້າຕັດຈ່າຍ	(147.816)	(116.511)
ລວມ	**11.129.492**	**10.275.303**

17 ລາຍຈ່າຍຄ້າງຈ່າຍ

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ດອກເບ້ຍຄ້າງຈ່າຍ	756.959	485.765	756.077	484.883
ຄ່າພາກຫຼວງ ແລະ ອາກອນອື່ນໆຄ້າງຈ່າຍ	193.586	151.939	193.021	151.459
ອື່ນໆ	5.220	5.337	2.595	3.262
ລວມ	**955.765**	**643.041**	**951.693**	**639.604**

18 ລາຍຈ່າຍຈັດຕາມລັກສະນະເນື້ອໃນ

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ຄ່າຫຼ້ຍຫ້ຽນ (ບົດອະທິບາຍທີ 9)	519.944	515.483	505.319	504.219
ລາຍຈ່າຍໃຫ້ພະນັກງານ	75.365	70.020	65.195	60.243
ລາຍຈ່າຍອາກອນເງິນປັນຜົນ	7.391	14.944	7.391	14.944
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ	10.480	14.542	8.150	12.269
ອື່ນໆ	126.881	151.224	124.242	143.426
ລວມ	**740.061**	**766.213**	**710.297**	**735.101**

19 ລາຍຈ່າຍທາງການເງິນ

	ເອກະສານລາຍງານ ການເງິນແບບລວມ/ແບບແຍກ	
	2021	2020
	ລ້ານກີບ	
ລາຍຈ່າຍດອກເບ້ຍຈາກຮຸ້ນກູ້	570.637	530.403
ລາຍຈ່າຍດອກເບ້ຍເງິນກູ້ຈາກພາກສ່ວນທີ່ກ່ຽວຂ້ອງ	198.159	185.436
ລາຍຈ່າຍດອກເບ້ຍເງິນກູ້ຍືມຈາກສະຖາບັນການເງິນ	35.101	18.585
ອື່ນໆ	51.918	18.495
ລວມ	**855.815**	**752.919**
ຫັກ: ລາຍຈ່າຍດອກເບ້ຍທີ່ຈັດເປັນຈ່າຍລ່ວງໜ້າສຳລັບລົງທຶນ	-	(11.794)
ລາຍຈ່າຍທາງການເງິນ, ສຸດທິ	**855.815**	**741.125**

20 ອາກອນກຳໄລ

ອີງຕາມສັນຍາສຳປະທານ ກັບລັດຖະບານ, ບໍລິສັດຈະຕ້ອງຈ່າຍອາກອນກຳໄລໃນອັດຕາ (10%) ເພື່ອໃຫ້ສອດຄ່ອງກັບກົດໝາຍຂອງກຳໄລສຸດທິ ຫຼັງຈາກທີ່ມີການປັບປຸງທີ່ບໍ່ໄດ້ຫັກຄ່າໃຊ້ຈ່າຍ ແລະ ອີງຕາມກົດໝາຍສ່ວຍສາອາກອນຕາມການຄ້າງຮັບ ຄ້າງຈ່າຍ.

ບໍລິສັດບໍ່ຮັບຮູ້ອາກອນກຳໄລຂອງບໍລິສັດທີ່ຕ້ອງຈ່າຍ ຫຼື ຕ້ອງຮັບ ໃນຄວາມແຕກຕ່າງຊົ່ວຄາວ. ລາຍຈ່າຍອາກອນກຳໄລ ແມ່ນ ຮັບຮູ້ຕາມຜົນການດຳເນີນງານ ສຳລັບໄລຍະເວລາທີ່ກ່ຽວຂ້ອງ ແລະ ອັດຕາອາກອນທີ່ນຳໃຊ້.

21 ກຳໄລພື້ນຖານຕໍ່ຮຸ້ນ

ການຄຳນວນກຳໄລຕໍ່ຮຸ້ນຂັ້ນພື້ນຖານສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021 ແລະ 2020 ແມ່ນຄິດໄລ່ຈາກກຳໄລສຸດທິ ສຳລັບປີ ເປັນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ ແລະ ຈຳນວນຮຸ້ນສາມັນສະເລ່ຍລະຫວ່າງປີ ດັ່ງນີ້:

	ເອກະສານລາຍງານ ການເງິນແບບລວມ		ເອກະສານລາຍງານ ການເງິນແບບແຍກ	
	2021	2020	2021	2020
ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນ ສາມັນ ຂອງບໍລິສັດ *(ລ້ານກີບ)*	4.392	158.642	6.844	178.774
ຈຳນວນຮຸ້ນສາມັນທີ່ອອກຈຳໜ່າຍ *(ລ້ານຮຸ້ນ)*	1.679	1.679	1.679	1.679
ກຳໄລພື້ນຖານຕໍ່ຮຸ້ນ*(ກີບ)*	**2,62**	**94,49**	**4,08**	**106,48**

22 ເງິນປັນຜົນ

2021

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 9 ເມສາ 2021, ມີມະຕິເຫັນດີອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດຂອງບໍລິສັດປະຈຳປີ 2020, ຈຳນວນ 100 ກີບ ຕໍ່ຮຸ້ນ, ລວມເປັນເງິນທັງໝົດ 167.930 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນວັນທີ 12 ພຶດສະພາ 2021.

ກອງປະຊຸມສະພາບໍລິຫານສະໄໝສາມັນ ເມື່ອວັນທີ 20 ສິງຫາ 2021, ຄະນະກຳມະການບໍລິສັດ ໄດ້ມີມະຕິອະນຸມັດບໍ່ຈ່າຍເງິນປັນຜົນລະຫວ່າງການປີຈາກກຳໄລສຸດທິງວດຫົກເດືອນ ຕັ້ງແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2021, ເນື່ອງຈາກບໍລິສັດຈຳຕ້ອງແຮເງິນໄວ້ສຳລັບການຈ່າຍຄືນເງິນຕົ້ນ ແລະ ດອກເບ້ຍຂອງເງິນກູ້ຢືມ ລວມໄປເຖິງການຈ່າຍຄືນຮຸ້ນກູ້ ໃນທ້າຍປີ 2021.

2020

ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ, ຈັດຂຶ້ນໃນວັນທີ 29 ພຶດສະພາ 2020, ມີມະຕິອະນຸມັດການຈ່າຍເງິນປັນຜົນລະຫວ່າງການປີ ສຳລັບຜົນກຳໄລສຸດທິ ສຳລັບຮອບໄລຍະເວລາ 1 ກໍລະກົດ ຫາ 31 ທັນວາ 2019 ເປັນຈຳນວນ 100 ກີບຕໍ່ຮຸ້ນ ລວມເປັນເງິນທັງໝົດ 167.930 ລ້ານກີບ. ເງິນປັນຜົນໄດ້ຖືກຈ່າຍໃນວັນທີ 26 ມິຖຸນາ 2020.

ກອງປະຊຸມສະພາບໍລິຫານສະໄໝສາມັນ ເມື່ອວັນທີ 24 ສິງຫາ 2020, ຄະນະກຳມະການບໍລິສັດ ໄດ້ມີມະຕິອະນຸມັດບໍ່ຈ່າຍເງິນປັນຜົນລະຫວ່າງການປີຈາກກຳໄລສຸດທິງວດຫົກເດືອນ ຕັ້ງແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2020, ອັນເປັນຜົນສືບເນື່ອງມາຈາກການຂາດທຶນຂອງການດຳເນີນທຸລະກິດໃນ 6 ເດືອນຕັ້ງແຕ່ວັນທີ 1 ມັງກອນ ຫາ 30 ມິຖຸນາ 2020 ລວມເປັນເງິນ 15.530 ລ້ານກີບ.

23 ພາລະຜູກພັນກັບພາກສ່ວນທີ່ບໍ່ກ່ຽວຂ້ອງ

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	**2020**	**2021**	**2020**
			ລ້ານກີບ	
ພາລະຜູກພັນທີ່ກ່ຽວຂ້ອງກັບທຶນ				
ສັນຍາແຕ່ບໍ່ໄດ້ລະບຸໄວ້ ສຳລັບ:				
ອອກແບບ, ກໍ່ສ້າງ ແລະ ຕິດຕັ້ງເຄື່ອງຈັກ ແລະ ອຸປະກອນ ແລະ ໂຄງການກໍ່ສ້າງ	2.865.618	2.421.717	234.786	234.767
ພາລະຜູກພັນຕາມສັນຍາເຊົ່າດຳເນີນງານທີ່ບໍ່ສາມາດຍົກເລີກໄດ້				
ບໍ່ເກີນ 1 ປີ	2.040	1.440	367	305
ເກີນກວ່າ 1 ປີ ແລະ ບໍ່ເກີນ 5 ປີ	8.216	5.791	1.523	1.250
ເກີນກວ່າ 5 ປີ	32.243	25.558	7.146	6.260
ລວມ	**42.499**	**32.789**	**9.036**	**7.815**

23 ພາລະຜູກພັນກັບພາກສ່ວນທີ່ບໍ່ກ່ຽວຂ້ອງ (ຕໍ່)

ຂໍ້ຕົກລົງທີ່ສຳຄັນອື່ນໆ ແລະ ການຮ່ວມມື

ສັນຍາເຊົ່າ

ບໍລິສັດເຊົ່າທີ່ດິນນຳໃຊ້ສຳລັບເຂື່ອນໄຟຟ້າພະລັງນ້ຳຂອງບໍລິສັດ ແລະ ນຳໃຊ້ສຳລັບໂຄງການພະລັງງານແສງຕາເວັນພາຍໃຕ້ສັນຍາເຊົ່າທີ່ບໍ່ສາມາດຍົກເລີກໄດ້. ໄລຍະເວລາຂອງການເຊົ່າໂດຍທົ່ວໄປແມ່ນ ເປັນເວລາ 30 ແລະ 25 ປີ ຕາມລຳດັບ.

ສັນຍາສຳປະທານ ("CA")

ໃນວັນທີ 15 ທັນວາ 2010 ບໍລິສັດ ໄດ້ເຮັດສັນຍາສຳປະທານ ເຊິ່ງມີການແກ້ໄຂສັນຍາສຳປະທານໃໝ່ ໃນວັນທີ 24 ກໍລະກົດ 2013 ("CA") ກັບ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("GOL") ເຊິ່ງຕາງໜ້າໂດຍກະຊວງແຜນການ ແລະ ການລົງທຶນ ("MPI"). ສັນຍາສຳປະທານແມ່ນໄດ້ກຳນົດໃຫ້ເວລາສຳປະທານ 30 ປີ ແລະ ສາມາດຕໍ່ອາຍຸສຳປະທານໄດ້ອີກ 10 ປີ ສຳລັບໂຄງການໂຮງໄຟຟ້າ ຄືດັ່ງທີ່ໄດ້ອະທິບາຍໃນບົດອະທິບາຍຂໍ້ 1(ຂ) ເມື່ອສິ້ນສຸດໄລຍະເວລາສຳປະທານແລ້ວ ບໍລິສັດ ຈະຕ້ອງໂອນກຳມະສິດ ແລະ ຜົນປະໂຫຍດຂອງໂຄງການ ລວມທັງຊັບສິນຕ່າງໆທີ່ຄອບຄອງໂດຍບໍລິສັດໃນການດຳເນີນງານ ໃຫ້ແກ່ລັດຖະບານ ຫຼື ຜູ້ຕາງໜ້າໂດຍບໍ່ມີຄ່າໃຊ້ຈ່າຍໃດໆດັ່ງທີ່ໄດ້ກຳນົດໄວ້ໃນສັນຍາສຳປະທານ.

ພາຍໃຕ້ສັນຍາສຳປະທານນີ້, ລັດຖະບານຍິນຍອມໃຫ້ບໍລິສັດມີສິດພຽງແຕ່ຜູ້ດຽວ ໃນຊ່ວງໄລຍະເວລາໃນການສຳປະທານ. ສິດທີ່ສຳຄັນພາຍໃຕ້ສັນຍາສຳປະທານລວມມີ 1) ສິດເປັນເຈົ້າຂອງດຳເນີນງານ ແລະ ບຳລຸງຮັກສາສິ່ງອຳນວຍຄວາມສະດວກຂອງໂຄງການ ແລະ ຊັບສິນບັດອື່ນໆ ຫຼື ຊັບສິນທີ່ບໍລິສັດໄດ້ມາ, 2) ສິດນຳໃຊ້ເຂື່ອນ, ສັນຍາເຂື່ອນ ແລະ ແມ່ນ້ຳ, 3) ສິດໃນການຂາຍໄຟຟ້າໃຫ້ກັບລັດວິສາຫະກິດໄຟຟ້າລາວ, 4) ເສຍອາກອນກຳໄລ 10%. 5) ຄ່າທຳນຽມ (ຄ່າພາກຫຼວງ) 1% ຈາກຍອດຂາຍໄຟຟ້າ.

ນອກຈາກນີ້, ບໍລິສັດໄດ້ຖືກຮຽກຮ້ອງໃຫ້ປະຕິບັດຕາມຫຼາຍຂໍ້ກຳນົດ ແລະ ເງື່ອນໄຂຕ່າງໆ ເຊິ່ງລວມມີຢູ່ໃນສັນຍາສຳປະທານສະບັບນີ້, ແຕ່ບໍ່ຈຳກັດການກໍ່ສ້າງ, ການປະກອບທຶນ, ຄ່າທຳນຽມ, ສຸຂະພາບ ແລະ ຄວາມປອດໄພ, ອາກອນ ແລະ ຄ່າເຊົ່າທີ່ດິນ, ອາກອນມູນຄ່າເພີ່ມ ໃນສ່ວນຂອງອຸປະກອນໄຟຟ້າທີ່ເຮັດໃຫ້ ຟຟລ.

24 ພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ແລະ 2020 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
	ລ້ານກີບ			
ບໍລິສັດແມ່				
ຂາຍ	1.196.664	1.167.375	1.168.853	1.138.180
ລາຍຈ່າຍດອກເບ້ຍ	198.159	185.436	198.159	185.436
ລາຍຮັບດອກເບ້ຍ	15.680	18.012	15.680	18.012

24 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວທີ່ສຳຄັນສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ແລະ 2020 ກັບພາກສ່ວນທີ່ກ່ຽວຂ້ອງ ມີດັ່ງນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
			ລ້ານກີບ	
ລາຍຈ່າຍລ່ວງໜ້າສຳລັບການລົງທຶນຊັບສິນພາຍໃຕ້ສັນຍາສຳປະທານ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	1.973.406	1.973.406	1.973.406	1.973.406
ບໍລິສັດລູກ				
ບໍລິສັດ ນ້ຳປີ ພາວເວີ້ ຈຳກັດ	-	-	-	-
ບໍລິສັດ ອີດີແອວ-ເຈັນ ໂຊລ່າ ພາວເວີ້ ຈຳກັດ	-	-	17.470	14.523
ບໍລິສັດ ຄຸ້ມຄອງການຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ	-	-	11.825	11.825
	1.973.406	**1.973.406**	**2.002.701**	**1.999.754**
ເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ	337.574	280.632	337.574	280.632

ລາຍການເຄື່ອນໄຫວຂອງເງິນກູ້ໄລຍະສັ້ນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງປີສິ້ນສຸດ ວັນທີ 31 ທັນວາ ມີດັ່ງລຸ່ມນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
		ລ້ານກີບ		
ວັນທີ 1 ມັງກອນ	280.632	454.042	280.632	454.042
ເພີ່ມຂຶ້ນ	-	-	-	-
ຊຳລະເງິນ	-	(188.670)	-	(188.670)
ຜົນຕ່າງຈາກອັດຕາແລກປ່ຽນ	56.942	15.260	56.942	15.260
ລວມ	**337.574**	**280.632**	**337.574**	**280.632**

24 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
			ລ້ານກີບ	
ໜີ້ຕ້ອງຮັບການຄ້າ ແລະ ອື່ນໆ				
ບໍລິສັດແມ່				
ລັດວິສາຫະກິດ ໄຟຟ້າລາວ	2.187.682	1.409.906	2.183.475	1.393.136
ບໍລິສັດລູກ ແລະ ອື່ນໆ				
ບໍລິສັດ ເຫີນຫີນບຸນ ພາວເວີ ຈຳກັດ	-	77.633	-	77.633
ບໍລິສັດ ອີແອນອີ ເອັນຈີເນ່ຍຣິ່ງ ແອນ ເຊີວິສ ຈຳກັດ	4.800	4.800	-	-
ລວມ	**2.192.482**	**1.492.339**	**2.183.475**	**1.470.769**
ເງິນກູ້ຢືມໄລຍະຍາວ				
ບໍລິສັດແມ່				
ລັດວິສາຫະກິດໄຟຟ້າລາວ				
- ເງິນກູ້ຢືມໄລຍະສັ້ນ	1.528.079	961.173	1.528.079	961.173
- ເງິນກູ້ຢືມໄລຍະຍາວ	2.945.941	2.818.225	2.945.941	2.818.225
ລວມ	**4.474.020**	**3.779.398**	**4.474.020**	**3.779.398**

ການເຄື່ອນໄຫວຂອງເງິນກູ້ຢືມຈາກພາກສ່ວນທີ່ກ່ຽວຂ້ອງລະຫວ່າງປີສິ້ນສຸດວັນທີ 31 ທັນວາ ມີດັ່ງລຸ່ມນີ້:

	ເອກະສານລາຍງານການເງິນແບບລວມ		ເອກະສານລາຍງານການເງິນແບບແຍກ	
	2021	2020	2021	2020
			ລ້ານກີບ	
ວັນທີ 1 ມັງກອນ	3.779.398	3.785.610	3.779.398	3.785.610
ເພີ່ມຂຶ້ນ	-	-	-	-
ຊຳລະເງິນ	(60.122)	(175.883)	(60.122)	(175.883)
ຜົນຕ່າງຈາກອັດຕາແລກປ່ຽນ	754.744	169.671	754.744	169.671
ລວມ	**4.474.020**	**3.779.398**	**4.474.020**	**3.779.398**

24 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ສັນຍາທີ່ສຳຄັນຕ່າງໆກັບພາກສ່ວນທີ່ກ່ຽວຂ້ອງ

ສັນຍາການຮັບຊື້ໄຟຟ້າ ("PPA")

ໃນວັນທີ 15 ທັນວາ 2010 ແລະ ດັດແກ້ໃນວັນທີ 9 ທັນວາ 2011 ບໍລິສັດໄດ້ເຮັດສັນຍາຊື້-ຂາຍໄຟຟ້າ ("PPA") ກັບ ຟຟລ, ສັນຍາດັ່ງກ່າວ ມີໄລຍະເວລາ 30 ປີ ແລະ ສາມາດຕໍ່ອາຍຸໄດ້ 10 ປີ ຄືກັນກັບສັນຍາສຳປະທານ.

ລາຍຮັບຕົ້ນຕໍຂອງບໍລິສັດແມ່ນການຂາຍກະແສໄຟຟ້າໃຫ້ ຟຟລ ຕາມສັນຍາຊື້-ຂາຍໄຟຟ້າ ທີ່ຜະລິດຈາກຊັບສິນທີ່ມີຢູ່, ກະແສໄຟຟ້າທີ່ຂາຍ ແມ່ນຂຶ້ນກັບອັດຕາຄ່າໄຟຟ້າທີ່ໄດ້ຕົກລົງກັນ, ເຊິ່ງກຳນົດໄວ້ໃນສັນຍາຊື້-ຂາຍໄຟຟ້າສຳລັບແຕ່ລະຊັບສິນທີ່ໃຊ້ໃນການຜະລິດໄຟຟ້າ.

ພາຍໃຕ້ສັນຍາຊື້-ຂາຍ ສະບັບນີ້, ບໍລິສັດມີພັນທະຕ້ອງປະຕິບັດຕາມຂໍ້ກຳນົດ ແລະ ເງື່ອນໄຂດັ່ງຕໍ່ໄປນີ້: 1) ຮັບຜິດຊອບໃນການດຳເນີນງານ ແລະ ບຳລຸງຮັກສາກຳລັງການຜະລິດພາຍໃຕ້ການດຳເນີນງານປົກກະຕິທີ່ໄດ້ຕົກລົງໄວ້ ຕະຫຼອດໄລຍະຂອງສັນຍາການຊື້-ຂາຍໄຟຟ້າ, 2) ບໍ່ໃຫ້ພາກສ່ວນອື່ນມີສິດໃນການສະໜອງ ຫຼື ໃຊ້ພະລັງງານໄຟຟ້າ ຈາກສິ່ງອຳນວຍຄວາມສະດວກໃດໆໃນຕະຫຼອດໄລຍະເວລາສັນຍາຊື້-ຂາຍໄຟຟ້າ, 3) ມີພັນທະວາງແຜນການຜະລິດໄຟຟ້າຈາກສະຖານີ ຫຼື ຕາໜ່າຍໄຟຟ້າຂອງ ຟຟລ ກ່ອນການຕົກລົງຊື້-ຂາຍໄຟຟ້າໃນແຕ່ລະປີ, 4) ເກັບເງິນຈາກ ຟຟລ ຈາກການຈຳໜ່າຍກະແສໄຟຟ້າສຸດທິ, 5) ຟຟລ ສາມາດແບ່ງຊຳລະເປັນໜຸດ ແລະ ຫັກທິດແທນກັບເງິນປັນຜົນຕ້ອງຈ່າຍທີ່ປະກາດໂດຍບໍລິສັດໃນແຕ່ລະປີ, 6) ເຫັນດີສະໜອງຄວາມສະດວກໃນການສະໜອງໄຟຟ້າໃຫ້ ຟຟລ ບໍ່ຕ່ຳກວ່າ 90% ທີ່ໄດ້ແຈ້ງໄວ້ໂດຍລວມຂອງການຜະລິດໄຟຟ້າທັງໝົດຂອງການສົ່ງກະແສໄຟຟ້າ ແລະ ການລົ້ມເຫຼວຂອງຜົນຜະລິດໄຟຟ້າ ຟຟລ ໄດ້ຕົກລົງຊື້ຈາກບໍລິສັດ ບໍ່ຕ່ຳກວ່າ 90%, 7) ຖ້າຫາກວ່າ ອັດຕາແລກປ່ຽນຕາມທີ່ຕົກລົງໃນສັນຍາມີການປ່ຽນແປງບໍລິສັດທັງສອງສາມາດຕົກລົງອັດຕາຄ່າກະແສໄຟຟ້າຄືນໃໝ່.

ສັນຍາຊຳລະໜີ້

ບໍລິສັດໄດ້ລົງນາມໃນສັນຍາໃນການຊຳລະໜີ້ ("ສັນຍາ") ກັບ ຟຟລ. ຟຟລ ເປັນຜູ້ກູ້ຢືມອີງຕາມສັນຍາກູ້ຢືມຈຳນວນໜຶ່ງ ກັບ ລັດຖະບານຂອງ ສປປ ລາວ ("ລັດຖະບານລາວ"), ເຊິ່ງກອງທຶນໃນເບື້ອງຕົ້ນ ແມ່ນໄດ້ຮັບຈາກຜູ້ໃຫ້ກູ້ຢືມຕ່າງໆ ໂດຍຜ່ານ ລັດຖະບານລາວ. ນອກເໜືອໄປຈາກການໂອນຊັບສິນ, ບໍລິສັດ ໄດ້ຕົກລົງເຫັນດີກັບ ຟຟລ ວ່າບໍລິສັດຈະຊຳລະເງິນກ່ຽວກັບໜີ້ສິນທີ່ຍັງຄ້າງຄາກັບ ຟຟລ ແລະ ຟຟລ ຈະເຮັດການຈ່າຍເງິນດັ່ງກ່າວໃຫ້ກັບລັດຖະບານ, ສຳລັບການຊຳລະຕໍ່ລັດຖະບານລາວກັບທະນາຄານໄດ້ຕາມສັນຍາກູ້ຢືມຕົ້ນສະບັບ. ເງິນກູ້ຢືມເຫຼົ່ານີ້, ບໍ່ມີຫຼັກຊັບຄ้ำປะกัน ແລະ ບໍ່ມີພາລະຜູກພັນອື່ນໆ ທີ່ນອກເໜືອຈາກການຊຳລະທີ່ຈຳເປັນຕໍ່ຕາຕະລາງການຕົກລົງເຫັນດີ.

ການໂອນພະນັກງານຈາກ ຟຟລ

ພາຍຫຼັງຈາກວັນສ້າງຕັ້ງບໍລິສັດ, ພະນັກງານຂອງ ຟຟລ ທີ່ດຳເນີນການຜະລິດກັບຊັບສິນທີ່ມີຢູ່ຈະຖືກໂອນຍ້າຍ ແລະ ເຮັດວຽກໃຫ້ບໍລິສັດ, ໃນວັນທີ 28 ກຸມພາ 2011 ພາຍໃຕ້ເງື່ອນໄຂຂໍ້ຕົກລົງຂອງການໂອນພະນັກງານ ຕາມສັນຍາທີ່ໄດ້ສ້າງຂຶ້ນໃໝ່ ແລະ ໜີ້ສິນທັງໝົດຈາກ ຟຟລ ໃຫ້ກັບພະນັກງານ ແມ່ນຖືກໂອນໃຫ້ກັບບໍລິສັດ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກບໍລິສັດ ແມ່ນຍັງຄືເກົ່າກັບທີ່ໄດ້ຮັບຈາກ ຟຟລ.

25 ເຫດການທີ່ເກີດຂຶ້ນພາຍຫຼັງການລາຍງານ

ຮັບຮອງການແຕ່ງຕັ້ງຄະນະສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່ ຄື: ອີງຕາມມະຕິທີ່ສຳຄັນຂອງສະພາບໍລິຫານ, ຄັ້ງວັນທີ 11 ມີນາ 2022 ຄະນະສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ ທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່, ມີລາຍຊື່ດັ່ງລຸ່ມນີ້:

1) ທ່ານ ປອ. ບຸນເຫຼືອ ສິນໄຊວໍລະວົງ ຮອງລັດຖະມົນຕີ ກະຊວງການເງິນ, ເປັນປະທານສະພາບໍລິຫານ.
2) ທ່ານ ສົມພິດ ແກ້ວວິຈິດ ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານແລະບໍ່ແຮ່ ເປັນກຳມະການ.
3) ທ່ານ ຄຳແກ້ວ ວິສິສົມບັດ ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ, ເປັນກຳມະການອິດສະຫຼະ.
4) ທ່ານ ຄຳມຸນ ວິພົງໄຊ ອະດີດຮອງລັດຖະມົນຕີກະຊວງພາຍໃນ, ເປັນກຳມະການອິດສະຫຼະ.
5) ທ່ານ ປອ. ພັນປະກິດ ອ່ອນພັນດາລາ ຮອງຫົວໜ້າກົມຄົ້ນຄວ້າ-ສັງລວມ, ຫ້ອງວ່າການສູນກາງພັກ, ເປັນກຳມະການອິດສະຫຼະ.
6) ທ່ານ ຊົນລະວິດ ວິນິດໄສ ຜູ້ອຳນວຍການບໍລິສັດ ຣາຊ-ລາວ ບໍລິການ ຈຳກັດ, ເປັນກຳມະການ.
7) ທ່ານ ນາງ ມະນີວອນ ພົນອາມາດ ຮອງຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ, ເປັນກຳມະການ.

ການລົງທຶນໃນບໍລິສັດລູກ

ໃນມື້ທີ່ລາຍງານ, ບໍລິສັດກຳລັງຢູ່ໃນຂັ້ນຕອນການຖອນເງິນລົງທຶນຈາກບໍລິສັດ ອີດີແອວ-ເຈັນ ໂຊລ່າ ພາວເວີ້ ຈຳກັດ.

ຜູ້ອຳນວຍການໃຫຍ່



ດວງສີ ພາຣາຍົກ

ຫົວໜ້າພະແນກບັນຊີ

ສຸນັນ ຜາສຸດໃຈ

ຫົວໜ້າພະແນກກວດສອບພາຍໃນ

ນິກອນ ແກ້ວວິໄລ